# ການປະເມີນ & ແຜນປະຕິບັດງານ
# ສຳລັບ*ເຂດທ່ອງທ່ຽວລາວສີຂຽວ* ເພື່ອການທ່ອງທ່ຽວທີ່ປອດໄພ
# ຈາກພະຍາດ COVID-19 ໃນ ສປປ ລາວ




*ຮ່າງບົດສະເໜີ*

**ສະພາການຄ້າລາວ ແລະ ອຸດສາຫະກຳ ແຫ່ງຊາດລາວ**

ສະບັບ 1.7

25 ຕຸລາ 2021

## ສາລະບານ


**ສະຫລຸບຫຍໍ້ ......................................................................................................................... 3**

**1 ການປະເມີນການເປີດຈຸດໝາຍປາຍທາງການທ່ອງທ່ຽວໃນພາກພື້ນ & ຄຳແນະນຳສຳລັບ ສປປ ລາວ7**

1.1. ສະຖານະຂອງການທ່ອງທ່ຽວໃນ ສປປ ລາວ ນັບແຕ່ມີພະຍາດ COVID-19 & ເຫດຜົນຂອງແຜນນີ້ .......................... 7

1.2. ການສົມທຽບໂຄວິດ ແຊນບັອກ (SANDBOX) & ກົດລະບຽບຄວາມປອດໄພໃນອາຊີຕາເວັນອອກສຽງໃຕ້ & ອາຊີໃຕ້ & ຄຳແນະນຳສຳລັບ ສປປ ລາວ ........................................................................................................ 8

***1.1.1. ບັນດາປະເທດ/ຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້*** ........................................................................................................ *8*

***1.1.2. ອັດຕາການສັກວັກຊີນ & ກໍລະນີຂອງຈຸດໝາຍປາຍທາງທີ່ໄດ້ເປີດແລ້ວ ຫຼື ມີແຜນຈະເປີດໃນອາຊີຕາເວັນອອກສຽງໃຕ້ & ອາຊີໃຕ້*** ................................................................ *10*

***1.1.3. ຂໍ້ກຳນົດດ້ານການສັກວັກຊີນ*** ........................................................................ *10*

***1.1.4. ຂໍ້ກຳນົດດ້ານ ການກວດພະຍາດ, ການແຍກປ່ຽວດ້ວຍຕົນເອງ & ການກັກຕົວ*** .......... *10*

***1.1.5. ຂໍ້ກຳນົດດ້ານການປະກັນໄພ*** ......................................................................... *11*

***1.2.6 ຂໍ້ກຳນົດດ້ານການຕິດຕາມຂໍ້ມູນຕິດຕໍ່*** ................................................................ *12*

***1.2.7 ການລົງທະບຽນ*** ............................................................................................ *12*

***1.2.8 ຂໍ້ກຳນົດຂອງໂຮງແຮມ & ຮ້ານອາຫານ*** ............................................................. *12*

1.3. ບົດຮຽນທີ່ຖອດຖອນໄດ້ຈາກພູເກັດແຊນບັອກ .................................................................. 13

1.4. ການປະເມີນຕະຫຼາດ ........................................................................................ 13

1.5. ການປະເມີນຂອງຂໍ້ກຳນົດປະຈຸບັນກ່ຽວກັບການກັບຄືນ ສປປ ລາວ ........................................ 14

1.6. SWOT ສຳລັບການເປີດຄືນການທ່ອງທ່ຽວໃນ ສປປ ລາວ ................................................... 16

**2 ແຜນປະຕິບັດງານສຳລັບເຂດທ່ອງທ່ຽວສີຂຽວຂອງລາວ ສຳລັບການທ່ອງທ່ຽວທີ່ປອດໄພຈາກພະຍາດ COVID-19 ................................................................................................ 0**

2.1 ເງື່ອນໄຂການເຂົ້າເຂດທ່ອງທ່ຽວສີຂຽວຂອງລາວ ................................................................. 1

2.2 ເງື່ອນໄຂການເຂົ້າ ເສັ້ນທາງທ່ອງທ່ຽວລາວສີຂຽວ (ທ່ອງທ່ຽວນອກເຂດທ່ອງທ່ຽວສີຂຽວ) ........................ 1

2.3 ຂັ້ນຕອນສຳລັບການສະໝັກ & ການມາຮອດເຂດທ່ອງທ່ຽວສີຂຽວ .................................................. 2

2.4 ບັນດາສັນຊາດທີ່ໄດ້ຮັບອະນຸຍາດໃນເຂດທ່ອງທ່ຽວສີຂຽວ ........................................................ 3

2.5 ພາຍໃນເຂດທ່ອງທ່ຽວສີຂຽວ ........................................................................................ 3

2.6 ຂັ້ນຕອນສຸກເສີນ ..................................................................................................... 0

2.7 ບູລິມະສິດເຂດທ່ອງທ່ຽວສີຂຽວ & ຈຸດໝາຍປາຍທາງ ເສັ້ນທາງສີຂຽວ ............................................ 1

2.8 ຄາດຄະເນການມາຂອງນັກທ່ອງທ່ຽວ & ລາຍຮັບ ..................................................................... 3

2.9 ຄະນະກຳມະການເຂດທ່ອງທ່ຽວສີຂຽວ ແລະ ຄວາມຮັບພິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ ........................ 6

2.10 ແຜນງານການຈັດຕັ້ງປະຕິບັດ ແລະ ລາຍການກວດສອບ ........................................................... 7

2.11 ມາດຕະຖານຂັ້ນຕອນການດຳເນີນງານ & ຂໍ້ມູນອື່ນໆ ............................................................. 10

2.12 ການຕິດຕາມ .......................................................................................................... 10

**ເອກະສານຊ້ອນທ້າຍ ......................................................................................................... 11**

A1. ຂັ້ນຕອນການເຂົ້າມາຂອງນັກທ່ອງທ່ຽວ ສຳລັບເຂດທ່ອງທ່ຽວສີຂຽວ ........................................... 11

A2. ຕົວຢ່າງ ໃບສະໝັກບັດຜ່ານເຂດສີຂຽວ .............................................................................. 12

A3. ປະກັນໄປແບບໃໝ່ ສຳລັບ ປະກັນ COVID-19 ຢູ່ ສປປ ລາວ ..................................................... 14

A4. ຕາຕະລາງປຽບທຽບໃນພາກພື້ນ ....16

**ບ່ອນອີງ....28**

*ຕາຕະລາງ 1: ບັນດາປະເທດ/ຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້........9*
*ຕາຕະລາງ 2: ຕະຫຼາດອີງຕາມອັດຕາການສັກວັກຊີນ....13*
*ຕາຕະລາງ 3: ຄາດຄະເນການມາຂອງນັກທ່ອງທ່ຽວ & ລາຍຮັບ: ບູລິມະສິດ 1 ການເປີດ/ມັງກອນ-ມີນາ '22 ....3*
*ຕາຕະລາງ 4: ຄາດຄະເນ ນັກທ່ອງທ່ຽວເຂົ້າມາ ແລະ ລາຍຮັບ: ບູລິມະສິດ ເປີດປີທີ 2-3 '22-24....5*
*ຕາຕະລາງ 5: ຂອບວຽກການຕິດຕາມເຂດທ່ອງທ່ຽວສີຂຽວ....10*
*ຕາຕະລາງ 6 ປະເທດທີ່ໄດ້ເປີດແລ້ວ ຫຼື ມີແຜນທີ່ຈະເປີດສໍາລັບການທ່ອງທ່ຽວ ໃນອາຊີຕາເວັນອອກສຽງໃຕ້ & ອາຊີໃຕ້ ....16*
*ຕາຕະລາງ 7: : ຂໍ້ກໍານົດທ່ອງທ່ຽວໂດຍປະເທດ ໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້....20*
*ຕາຕະລາງ 8: : ຂໍ້ກໍານົດສໍາລັບທີ່ພັກ & ຮ້ານອາຫານ ທີ່ຮັບຕ້ອນນັກທ່ອງທ່ຽວ ໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້....24*
*ຕາຕະລາງ 9: ການລືມທຽບຂອງການກວດໃນເວລາມາຮອດ (ສໍາລັບນັກທ່ອງທ່ຽວ ທີ່ໄດ້ຮັບວັກຊີນແລ້ວ w/PCR ກວດ 72 ຊົ່ວໂມງກ່ອນເດີນທາງ) ....26*

# ສະຫລຸບຫຍໍ້

ອຸດສາຫະກຳທ່ອງທ່ຽວຂອງ ສປປ ລາວ ຖືກເສຍຫາຍຢ່າງໜັກໜ່ວງນັບແຕ່ມີມາດຕະການ ການປ້ອງກັນພະຍາດໂຄວິດ-19 ໂດຍການປິດຊາຍແດນໃນຕົ້ນປີ 2020. ການທ່ອງທ່ຽວໄດ້ຫຼຸດລົງ ປະມານ 80% ຍ້ອນພະຍາດໂຄວິດ-19, ຊຶ່ງເຮັດໃຫ້ການຈ້າງງານຄົນທ້ອງຖິ່ນ ຈຳນວນ 130,000 ຄົນ ໃນຂະແໜງການທ່ອງທ່ຽວ ໄດ້ຕົກງານ ຫຼື ໄດ້ຮັບຄ່າຈ້າງທີ່ຫຼຸດລົງເປັນຈຳນວນຫຼາຍ. ເສດຖະກິດລາວໄດ້ສູນເສຍ ປະມານ $1.4 ຕື້ ໂດລາສະຫະລັດ ຈາກລາຍຮັບໂດຍກົງທີ່ມາຈາກອຸດສາຫະກຳທ່ອງທ່ຽວ, ທີ່ມີຜົນກະທົບທີ່ສຳຄັນຕໍ່ເສດຖະກິດທັງໝົດ ຍ້ອນການຫຼຸດການໃຊ້ຈ່າຍໃນທຸກສິນຄ້າ ແລະ ການບໍລິການ ທັງມີຜົນກະທົບທະວີຄູນຈາກສິ່ງເຫຼົ່ານີ້. ຂະແໜງການທ່ອງທ່ຽວຂອງລາວຈະສູນເສຍ ອີກລະດູທີ່ມີນັກທ່ອງທ່ຽວເຂົ້າມາຫລາຍ ຖ້າຫາກບໍ່ເປີດປະເທດ ພາຍໃນເດືອນມັງກອນ 2022 ທີ່ຈະມາເຖິງນີ້.

ຈຸດໝາຍປາຍທາງການທ່ອງທ່ຽວຈຳນວນຫຼາຍໃນພາກພື້ນແມ່ນໄດ້ເປີດແລ້ວ ແລະ ກຳລັງວາງແຜນຈະເປີດກ່ອນທ້າຍປີ 2021, ລວມມີ ປະເທດມາວດິບ, ສິງກະໂປ, ສີລັງກາ, ໄທ, ເນປານ, ກຳປູເຈຍ, ມາເລເຊຍ ແລະ ອິນເດຍ. ໂດຍສະເລ່ຍແລ້ວ ອັດຕາການສັກວັກຊີນ ຂອງປະເທດເຫລົ່ານີ້ແມ່ນຢູ່ທີ່ 61% ເຊິ່ງ ສປປ ລາວ ແມ່ນໄດ້ຕັ້ງເປົ້າຈະໃຫ້ສຳເລັດໃນທ້າຍປີ 2021. ເຖິງຢ່າງໃດກໍ່ຕາມ, ຈຸດໝາຍປາຍທາງການທ່ອງທ່ຽວຕົ້ນຕໍເຊັ່ນ: ນະຄອນຫຼວງວຽງຈັນ ແມ່ນມີອັດຕາການສັກວັກຊີນສູງກວ່າອັດຕາສະເລ່ຍ (72.9 ໄດ້ສັກວັກຊີນຄົບ ແລະ 96.5% ໄດ້ສັກວັກຊີນຢ່າງໜ້ອຍໜຶ່ງເຂັມ), ຊຶ່ງສູງກວ່າພົນລະເມືອງທີ່ຢູ່ຈຸດໝາຍປາຍທາງການທ່ອງທ່ຽວ ແຊນບັອກ (Sandbox) ເຊັ່ນ: ພູເກັດ. ກໍລະນີຕິດເຊື້ອລາຍວັນຢູ່ ສປປ ລາວ (0.007) ເຊິ່ງເປັນໜຶ່ງໃນປະເທດທີ່ມີອັດຕາຕິດເຊື້ອຕໍ່າສຸດໃນພາກພື້ນ ແລະ ຕໍ່າກວ່າອັດຕາສະເລ່ຍຂອງຈຸດໝາຍເຫຼົ່ານີ້ (0.033%). ບົດຮຽນທີ່ຖອດຖອນໄດ້ຈາກຈຸດໝາຍປາຍທາງທີ່ໄດ້ເປີດສຳລັບການທ່ອງທ່ຽວແລ້ວ ແມ່ນການກຳນົດການກວດ PCR ແລະ ການສັກວັກຊີນຄົບເຂັມ, ແລະ ຄວາມຈຳເປັນສຳລັບໃນການສ້າງຂໍ້ກຳນົດໃນການທ່ອງທ່ຽວມີຄວາມງ່າຍ ແລະ ໂປ່ງໃສ ລວມທັງການຫຼຸດໄລຍະເວລາຂອງການກັກຕົວ (ໃຫ້ໜ້ອຍກວ່າ 24 ຊົ່ວໂມງ ຂອງການແຍກປ່ຽວດ້ວຍຕົນເອງ), ຂັ້ນຕອນການນະໝັກທີ່ງ່າຍ, ການປະກັນໄພການທ່ອງທ່ຽວທີ່ສົມເຫດສົມຜົນ, ການຕິດຕາມຂໍ້ມູນເພື່ອການຕິດຕໍ່ທີ່ໃຊ້ສະດວກ, ຂັ້ນຕອນໃນເວລາສຸກເສີນທີ່ຈະແຈ້ງ ແລະ ນະໂຍບາຍການສົ່ງເງິນຄືນ ເມື່ອຜົນກວດອອກມາເປັນບວກ, ໂຮງແຮມ ແລະ ທຸລະກິດ ທີ່ໄດ້ຮັບການຢັ້ງຢືນວ່າປອດໄພຈາກພະຍາດໂຄວິດ-19, ແລະ ການອັດເດດຂໍ້ມູນກ່ຽວກັບໂຄວິດ-19 ຢ່າງເປັນປົກກະຕິ. ບົດຮຽນເຫລົ່ານີ້ ໃຫ້ທິດທາງສຳລັບ ສປປ ລາວ ໃນການເດີນຕາມ ແລະ ຍາດເອົາໂອກາດໃນການແຂ່ງຂັນກັບບັນດາຈຸດໝາຍປາຍທາງການທ່ອງທ່ຽວອື່ນ.

## ແຜນເຂດທ່ອງທ່ຽວສີຂຽວ

ແຜນນີ້ ໄດ້ນຳສະເໜີບົດແນວຄວາມຄິດ **ເຂດການທ່ອງທ່ຽວສີຂຽວຂອງລາວ** ເຊິ່ງທີ່ໄດ້ລວບລວມ ຈາກບົດສະເໜີໂຄງການແຊນບັອກ ຂອງສາຍການບິນລາວ ແລະ ການປ້ອນຂໍ້ມູນ ຈາກສະມາຊິກຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ລວມທັງ ຜູ້ຕາງໜ້າຈາກບໍລິສັດທ່ອງທ່ຽວ, ໂຮງແຮມ ແລະ ຮ້ານອາຫານ, ຜູ້ໃຫ້ບໍລິການຂົນສົ່ງ ແລະ ສະມາຄົມປະກັນໄພລາວ). ແຜນນີ້ແມ່ນອີງຕາມການແນະນຳ ພາກສ່ວນກ່ຽວຂ້ອງໃນຂະແໜງການ ລວມມີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອົງການ UNDP, UNWTO ທີ່ໄດ້ສະເໜີໃຫ້ເປີດປະເທດ ເລີ່ມແຕ່ ປີ 2022 ແລະ ການກັບມາຟື້ນຕົວກ່ອນ ປີ 2024-25.

## ຄຸນລັກສະນະຂອງແຜນເຂດທ່ອງທ່ຽວສີຂຽວ

- ***ບູລິມະສິດທີ 1 ເຂດທ່ອງທ່ຽວສີຂຽວ***: ແຜນ ສະເໜີໃຫ້ເປີດສອງເຂດທ່ອງທ່ຽວ ທີ່ປອດໄພຈາກພະຍາດໂຄວິດ-19 ພາຍໃນວັນທີ 1 ມັງກອນ 2022 ໃນນະຄອນຫຼວງວຽງຈັນ/ວັງວຽງ ແລະ ເມືອງຫຼວງພະບາງ/ເມືອງຈອມເພັດ, ໃນເວລາທີ່ອັດຕາການສັກວັກຊີນຂອງພົນລະເມືອງແມ່ນ ປະມານ 80% ແລະ ມີຄວາມອາດສາມາດພຽງພໍໃນການດໍາເນີນຂັ້ນຕອນການເຂົ້າເມືອງທາງອາກາດ, ລົດໄຟ ຫຼື ຂ້າມຜ່ານຊາຍແດນ . ເລີ່ມຈາກເດືອນມັງກອນ ຫາ ມີນາ 2022, ຈໍານວນນັກທ່ອງທ່ຽວ ແລະ ລາຍຮັບ ສໍາລັບ ເຂດບູລິມະສິດທີ 1 ຄາດຄະເນ ແມ່ນ 30,415 ແລະ $30.1 ລ້ານໂດລາສະຫະລັດ. ແຜນສະເໜີ ໃຫ້ນັກທ່ອງທ່ຽວສາມາດເດີນທາງອອກຈາກເຂດທ່ອງທ່ຽວສີຂຽວ ໄປຫາ ເສັ້ນ**ທາງທ່ອງທ່ຽວສີຂຽວ** ໂດຍນໍາໃຊ້ພາຫະນະຂົນສົ່ງທີ່ໄດ້ຮັບການອະນຸມັດ ແລະ ພັກ, ກິນ ແລະ ຮ່ວມກິດຈະກໍາຕ່າງໆ ຢູ່ສະຖານທີ່ພັກເຊົາ ແລະ ລີສອດ ທີ່ໄດ້ຮັບອະນຸມັດແລ້ວເທົ່ານັ້ນ. ເພື່ອໃຫ້ມີຕະຫຼາດພຽງພໍສໍາລັບ ເຂດທ່ອງທ່ຽວສີຂຽວຂອງລາວ ບໍ່ຄວນຈໍາກັດສັນຊາດ ແລະ ຄວນລວມເອົາສັນຊາດ ທີ່ຢູ່ໃນປະເທດ 10 ອັນດັບຕົ້ນຂອງຕະຫຼາດທີ່ສ້າງລາຍຮັບສູງສຸດ ແລະ ປະເທດໃນສາກົນ ແລະ ພາກພື້ນ ຫລື ເມືອງ ທີ່ມີຜູ້ມີຄວາມສາມາດຈ່າຍສູງ ແລະ ມີອັດຕາການສັກວັກຊີນຄົບຕາມກໍານົດ.

- ***ບູລິມະສິດທີ 2 ເຂດທ່ອງທ່ຽວສີຂຽວ:*** ກວມເອົາຈຸດໝາຍປາຍທາງການທ່ອງທ່ຽວຫລັກອື່ນໆ ກັບຊາຍແດນທີສໍາຄັນ (ເບິ່ງພາກ 2.8 ສໍາລັບລາຍການທັງໝົດ) ແລະ ຄາດຄະເນສໍາລັບການເປີດຄືນໃໝ່ໃນເດືອນ ເມສາ 2022, ເມື່ອໄດ້ເງື່ອນໄຂອັດຕາການສັກວັກຊີນຮອດ 70-80% ຢູ່ສະຖານທີ່ເຫລົ່ານັ້ນ, ອັດຕາການສັກວັກຊີນເພີ່ມຂຶ້ນໃນປະເທດເພື່ອບ້ານທີ່ມີຊາຍແດນຕິດກັນ, ແລະ ມີຄວາມເປັນໄປໄດ້ໃນການກວດ Rapid ແອັນຕິເຈັ້ນ. ຄາດຄະເນນັກທ່ອງທ່ຽວ ແລະ ລາຍຮັບ ສໍາລັບເຂດບູລິມະສິດທີ 2 ແມ່ນ 132,973 ແລະ $68.8 ລ້ານໂດລາສະຫະລັດ ພາຍໃນເດືອນມິຖຸນາ 2022.

- ***ບູລິມະສິດທີ 3*** : ຈຸດໝາຍປາຍທາງການທ່ອງທ່ຽວອື່ນທັງໝົດໃນປະເທດ ແລະ ຈະເປີດໃນເດືອນກໍລະກົດ 2022 ເມື່ອອັດຕາການສັກວັກຊີນທົ່ວປະເທດແມ່ນ 70-80% ແລະ ການເປີດເຂດບູລິມະສິດ 1 & 2 ເຂດທ່ອງທ່ຽວສີຂຽວ ໄດ້ຮັບການຢັ້ງຢືນຜົນສໍາເລັດ. ແຜນນີ້ມີເປົ້າໝາຍ ສໍາລັບການຟື້ນຕົວແບບສົມບູນໃນທ້າຍປີ 2024, ຄາດວ່າເມື່ອຈໍານວນນັກທ່ອງທ່ຽວ ແລະ ລາຍຮັບ ກັບຄືນຢູ່ໃນຂັ້ນດຽວກັນກັບປີ 2019 (ອີງຕາມການຄາດຄະເນຂອງ UNWTO) ຈໍານວນ 4.7 ລ້ານ ແລະ $934 ລ້ານ ໂດລາສະຫະລັດ.

### ຂໍ້ກໍານົດຂອງຜູ້ມາຢ້ຽມຢາມສໍາລັບເຂດທ່ອງທ່ຽວສີຂຽວ

ສໍາລັບຂໍ້ກໍານົດການເຂົ້າເມືອງຂອງນັກທ່ອງທ່ຽວ, ບົດສະເໜີ ແນະນໍາວ່າ ເຂດທ່ອງທ່ຽວສີຂຽວ ຈະອະນຸຍາດໃຫ້ນັກທ່ອງທ່ຽວທີ່ໄດ້ສັກວັກຊີນຄົບແລ້ວເທົ່ານັ້ນ, ລວມທັງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ນັກທ່ອງທ່ຽວສາກົນແມ່ນຈະຕ້ອງສະໝັກສໍາລັບ ບັດຜ່ານເຂດທ່ອງທ່ຽວສີຂຽວ ໂດຍການນໍາໃຊ້ຟອມອອນລາຍທີ່ງ່າຍຈາກເວັບໄຊທາງການ eVisa, ເຊິ່ງພວກເຂົາຕ້ອງໄດ້ອັບໂຫຼດຫຼັກຖານການສັກວັກຊີນທີ່ຄົບແລ້ວ. ເພື່ອຮັບປະກັນ ນັກທ່ອງທ່ຽວທີ່ເຂົ້າມາປອດຈາກພະຍາດໂຄວິດ-19, ພວກເຂົາຈະຕ້ອງໄດ້ມີຜົນກວດ PCR ເປັນລົບກ່ອນການເດີນທາງ ແລະ ກວດ PCR ອີກຄັ້ງເມື່ອຢູ່ລາວ. ພວກເຂົາຈະຖືກກໍານົດໃຫ້ມີການແຍກປ່ຽວດ້ວຍຕົນເອງທີ່ໂຮງແຮມຂອງພວກເຂົາ 24 ຊົ່ວໂມງ ເພື່ອລໍຖ້າຜົນກວດ ກ່ອນໄດ້ຮັບອະນຸຍາດໃຫ້ສໍາຫຼວດ ເຂດທ່ອງທ່ຽວສີຂຽວ ຢ່າງມີ

ອິດສະຫຼະ. ກໍານົດໃຫ້ນັກທ່ອງທ່ຽວດາວໂຫຼດ app ຕິດຕາມຂໍ້ມູນຕິດຕໍ່ທີ່ນໍາໃຊ້ສະດວກ ກັບ ລະຫັດ QR ໃນເວລາແຈ້ງເຂົ້າສະຖານທີ່ທີ່ໄດ້ຮັບການອະນຸມັດແລ້ວ. ກໍານົດໃຫ້ນັກທ່ອງທ່ຽວພາຍໃນ ສະແດງຫຼັກຖານການສັກວັກຊີນກ່ອນການເຂົ້າເຂດທ່ອງທ່ຽວສີຂຽວ ເພື່ອຮັກສາຄວາມປອດໄພພາຍໃນເຂດສໍາລັບທັງຄົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ ແຕ່ຈະບໍ່ກໍານົດໃຫ້ກວດຫາເຊື້ອໂຄວິດ-19.

## ຂໍ້ກໍານົດຂອງທຸລະກິດໃນເຂດທ່ອງທ່ຽວສີຂຽວ

ກໍານົດໃຫ້ນັກທ່ອງທ່ຽວນໍາໃຊ້ທຸລະກິດທ່ອງທ່ຽວ ທີ່ປະຕິບັດຕາມມາດຕະຖານຂອງ *LaoSafe* ເທົ່ານັ້ນ (ສໍາລັບທີ່ພັກ, ຮ້ານອາຫານ, ພະນັກງານນໍາທ່ຽວ, ຄົນຂັບລົດ ແລະ ແຫຼ່ງທ່ອງທ່ຽວ), ເຊິ່ງຫາກໍ່ໄດ້ຮັບການອະນຸມັດຈາກກະຊວງສາທາລະນະສຸກ ແລະ ຕາມມາດຕະການຂອງຊາດ ແລະ ສາກົນ. ບໍລິສັດທ່ອງທ່ຽວຈະປະຕິບັດຕາມ *Safe Travels* ເຊິ່ງໄດ້ຮັບການອະນຸມັດໂດຍ ສະພາການທ່ອງທ່ຽວ ແລະ ການທ່ອງທ່ຽວໂລດ (World Tourism & Travel Council). 90% ຂອງຈໍານວນພະນັກງານທີ່ເຮັດວຽກນໍາທຸລະກິດທີ່ໄດ້ຮັບການຮັບຮອງຈາກ *LaoSafe* ຕ້ອງໄດ້ຮັບວັກຊີນຄົບ ແລະ 100% ຂອງພະນັກງານທີ່ມີການພົວພັນໂດຍກົງກັບນັກທ່ອງທ່ຽວໃຫ້ໄດ້ຮັບການສັກວັກຊີນຄົບ. ນອກຈາກມາດຕະຖານຂອງ LaoSafe ແລະ Safe Travels, ໄດ້ມີການຮ່າງມາດຕະຖານຂັ້ນຕອນການດໍາເນີນງານ ເປັນເອກະສານອ້າງອີງສໍາລັບລະບຽບການທີ່ຕ້ອງໄດ້ຖືກປະຕິບັດ ໃນທຸກຂັ້ນຂອງການດໍາເນີນການທ່ອງທ່ຽວ ເພີ່ມເຕີມ *LaoSafe* ແລະ ມາດຕະຖານ *Safe Travels.*

## ແຜນດໍາເນີນງານ ແລະ ຄະນະສະເພາະກິດເພື່ອຮັບພິດຊອບການເປີດເຂດທ່ອງທ່ຽວສີຂຽວ

ແຜນດໍາເນີນງານ ແລະ ຂອບເວລາ ສໍາລັບການເປີດປະທເດ ລວມທັງ ການສ້າງຕັ້ງ **ຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ** ຂັ້ນລັດຖະມົນຕີ ໂດຍການເປັນປະທານຂອງ ທ່ານຮອງນາຍົກລັດຖະມົນຕີ ທີ່ມີສະມາຊິກຈາກກະຊວງທີ່ກ່ຽວຂ້ອງ ລວມມີ ກະຊວງສາທາລະນະສຸກ, ກະຊວງ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງ. ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ, ໂດຍໄດ້ຮັບການສະໜັບສະໜູນຈາກສະມາຊິກ ລວມໄປເຖິງສາຍການບິນລາວ, ຈະຊ່ວຍຄະນະກໍາມະການໃນການຈັດຕັ້ງປະຕິບັດ, ລວມທັງການກະກຽມທຸລະກິດ *LaoSafe* ແລະ *Safe Travels* ຕ່າງໆໃຫ້ມີຄວາມພ້ອມ. ການເປີດປະເທດຄືນໃໝ່ ຮຽກຮ້ອງໃຫ້ມີການຮ່ວມມື ແລະ ປະສານງານ ຢ່າງສົມບູນຈາກພາກລັດ ແລະ ພາກທຸລະກິດທີ່ກ່ຽວຂ້ອງ. ຂັ້ນຕອນທີ່ສໍາຄັນ ແມ່ນຈະຖືກຈັດຕັ້ງປະຕິບັດ ໃນລະຫວ່າງເດືອນພະຈິກ ຫາ ເດືອນທັນວາ 2021 ເຊິ່ງແຕ່ລະກະຊວງຈະຕ້ອງເຮັດຕາມຂັ້ນຕອນທີ່ຈໍາເປັນ ໂດຍຈະມີ ສຄອຊ ແລະ ບັດດາຄູ່ຮ່ວມພັດທະນາ ໃຫ້ການສະໜັບສະໜຸນ.

## ຄວາມປອດໄພ ແລະ ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມຂອງແຜນເຂດທ່ອງທ່ຽວລາວສີຂຽວ

ການຈັດຕັ້ງປະຕິບັດແຜນເຂດທ່ອງທ່ຽວສີຂຽວ ຈະເຮັດໃຫ້ມີການເປີດປະເທດຄືນໃໝ່ທີ່ມີຄວາມປອດໄພ ໂດຍອີງຕາມການຈັດຕັ້ງປະຕິບັດທີ່ດີທີ່ສຸດຈາກພາກພື້ນ, ໃນຂະນະດຽວກັນກໍ່ ຍົກລະດັບຄວາມປອດໄພຂອງທຸລະກິດທັງໝົດໃນຂະແໜງທ່ອງທ່ຽວໃນ ສປປ ລາວ. ສິ່ງເຫຼົ່ານີ້ ຈະເຮັດໃຫ້ລັດຖະບານບັນລຸທັງການຫຼຸດຜ່ອນຄວາມທຸກຍາກ ແລະ ເປົ້າໝາຍເສດຖະກິດ ໂດຍການສ້າງໃຫ້ຂະແໜງການທ່ອງທ່ຽວກັບມາດີກວ່າເກົ່າ ທັງຮັບປະກັນຄວາມປອດໄພສູງສຸດຈາກພະຍາດໂຄວິດ-19 ໃຫ້ແກ່ພົນລະເມືອງທົ່ວໄປ, ພະນັກງານທີ່ເຮັດວຽກໃນອຸດສາຫະກໍາດັ່ງກ່າວ, ແລະ ຜູ້ມາຢ້ຽມຢາມ. ຖ້າແກ່ຍາວການເປີດປະເທດໄປກາງປີ ຫລື ທ້າຍປີ 2022 ຈະເຮັດໃຫ້ມີຜົນກະທົບທາງລົບ

ອັນສຳຄັນໃນໄລຍະຍາວຕໍ່ອຸດສາຫະກຳການທ່ອງທ່ຽວ ແລະ ເສດຖະກິດ ແລະ ຍັງລົດຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ ກັບບັນດາຈຸດໝາຍປາຍທາງການທ່ອງທ່ຽວອື່ນໆ.

### ຄຳແນະນຳ ສຳລັບທ່ານນາຍຍົກ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ຂໍການອະນຸມັດຈາກນາຍຍົກລັດຖະມົນຕີ ເພື່ອຈັດຕັ້ງປະຕິບັດແຜນດັ່ງກ່າວນີ້, ສຄອຊ ສະເໜີໃຫ້ ທ່ານນາຍຍົກໃຫ້ທິດຊີ້ນຳ ທຸກພາກສ່ວນຂອງຂະແໜງການທີ່ກ່ຽວຂ້ອງ ແລະ ບັນດາກະຊວງ ປະສານສົມທົບ ແລະ ຮ່ວມມືກັນ ພັດທະນາແຜນລະອຽດ ແລະ ການຈັດຕັ້ງປະຕິບັດຂັ້ນຕອນຕ່າງໆທີ່ກຳນົດ ສຳລັບການເປີດ ເຂດທ່ອງທ່ຽວສີຂຽວ ພາຍໃນເດືອນ ມັງກອນ 2022 ເພື່ອຜົນປະໂຫຍດຂອງປະຊາຊົນລາວ ແລະ ທຸລະກິດໃນອຸດສາຫະກຳການທ່ອງທ່ຽວ ແລະ ຜູ້ທີ່ມີສ່ວນໄດ້ສ່ວນເສຍໃນອຸດສາຫະກຳນີ້.

# 1 ການປະເມີນການເປີດຈຸດໝາຍປາຍທາງການທ່ອງທ່ຽວໃນພາກພື້ນ & ຄຳແນະນຳສຳລັບ ສປປ ລາວ

## 1.1. ສະຖານະຂອງການທ່ອງທ່ຽວໃນ ສປປ ລາວ ນັບແຕ່ມີພະຍາດ COVID-19 & ເຫດຜົນຂອງແຜນນີ້

ແຕ່ໃດມາການທ່ອງທ່ຽວ ແມ່ນເຄື່ອງຈັກໃນຂັບເຂື່ອນການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ. ໃນປີ 2019, ປີກ່ອນການແຜ່ລະບາດຂອງພະຍາດ COVID-19, ການທ່ອງທ່ຽວຖືກຈັດເປັນອັນດັບທີສາມໃນການສ້າງລາຍຮັບອັນມະຫາສານໃຫ້ແກ່ປະເທດ, ນຳເອົາລາຍຮັບຈາກການທ່ອງທ່ຽວ $934 ຕື້ໂດລາສະຫະລັດ, ເມື່ອສົມທຽບໃສ່ການສົ່ງອອກໄຟຟ້າ ແລະ ແຮ່ທາດ ເຊິ່ງຄາດຄະຢູ່ປະມານ $1,32 ຕື້ ແລະ $1,43 ຕື້[1]. ເຖິງຢ່າງໃດກໍ່ຕາມ, ການທ່ອງທ່ຽວອາດຖືໄດ້ວ່າມີຄວາມສຳຄັນຫຼາຍກວ່າຂະແໜງການອື່ນ ສຳລັບການຂະຫຍາຍຕົວຂອງເສດຖະກິດ ຍ້ອນຄວາມໜາແໜ້ນຂອງແຮງງານຂອງຂະແໜງການ , ໂດຍສະເພາະ ຄົນທີ່ມີລາຍໄດ້ຕໍ່າ, ແລະ ຜົນສະທ້ອນທະວີຄູນສົມທົບຂອງການກະຈາຍລາຍໄດ້ ໃຫ້ແກ່ຄົນຈຳນວນຫຼາຍກວ່າທົ່ວເສດຖະກິດ. ຈາກການສຶກສາຄົ້ນຄ້ວາຢູ່ແຂວງຫຼວງພະບາງ[2] ຄາດຄະເນວ່າ ຫຼາຍກວ່າໜຶ່ງສ່ວນສີ່ຂອງລາຍຮັບຈາກການທ່ອງທ່ຽວທັງໝົດ ກະຈາຍໄປສູ່ແຮງງານທີ່ມີທັກສະຂັ້ນຕົ້ນ ແລະ ບໍ່ມີທັກສະ, ການແຈກຢາຍທີ່ຂ້ອນຂ້າງສູງໃຫ້ແກ່ແຮງງານທ້ອງຖິ່ນ ໂດຍການສົມທຽບກັບສາກົນ ທີ່ໄດ້ປະກອບສ່ວນໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກທົ່ວປະເທດ ໃນສອງທົດສະຫວັດຜ່ານມາ. ກ່ອນຈະມີການລະບາດຂອງພະຍາດ, ອຸດສາຫະກຳທ່ອງທ່ຽວສ້າງວຽກເຮັດງານທຳໂດຍກົງ ປະມານ 130.000 ຄົນ, ທັງມີການຈ້າງງານໂດຍກົງໃນທຸລະກິດໃນຕ່ອງໂສ້ການສະໜອງ. ການຈ້າງງານໃນອຸດສາຫະກຳທ່ອງທ່ຽວແມ່ນມີຄວາມສຳຄັນ ໂດຍສະເພາະ ສະຖານທີ່ທ່ອງທ່ຽວທາງທຳມະຊາດ ທີ່ຢູ່ອອ້ມແອ້ມເຂດປ່າສະຫງວນແຫ່ງຊາດ, ທີ່ທາງທະນາຄານໂລກໄດ້ສຶກສາ[3] ແລະ ພົບວ່າ ການທ່ອງທ່ຽວທາງທຳມະຊາດ ໄດ້ສະແດງໃຫ້ເຫັນເຖິງຜົນສະທ້ອນ ຕໍ່ການຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງການກະຈາຍລາຍໄດ້ ສົມທົບໃຫ້ແກ່ຊາວກະສິກອນທ້ອງຖິ່ນ ແລະ ທຸລະກິດທີ່ບໍ່ແມ່ນກະສິກຳໃນຊຸມຊົນ.

ການແຜ່ລະບາດຂອງພະຍາດ COVID-19 ໄດ້ຢຸດການໄຫຼວຽນເກືອບທັງໝົດ ຂອງຜົນປະໂຫຍດທາງເສດຖະກິດ ແລະ ແຮງງານທີ່ມີສີມືຂັ້ນຕົ້ນ ແລະ ບໍ່ມີສີມື. ໃນປີ 2020, ການທ່ອງທ່ຽວຫຼຸດລົງ ປະມານ 80% ຍ້ອນພະຍາດ COVID-19, ຈຳນວນນັກທ່ອງທ່ຽວແມ່ນໜ້ອຍກວ່າ 900.000[4] ແລະ ລາຍຮັບທີ່ຫຼຸດລົງປະມານ USD 213 ລ້ານໂດລາສະຫະລັດ. ອີງຕາມບົດລາຍງານຂອງຜູ້ກ່ຽວຂ້ອງໃນລະຫວ່າງກອງປະຊຸມປຶກສາຫາລືຂອງໂຄງການ, ຂະແໜງການທ່ອງທ່ຽວໄດ້ສືບຕໍ່ຫຼຸດລົງຈົນເກືອບຈະຖືກປິດລົງ ໃນປີ 2021. ສະມາຄົມທຸລະກິດທ່ອງທ່ຽວລາວ ລາຍງານວ່າ ແຮງງານໃນຂະແໜງທ່ອງທ່ຽວ ແມ່ນໄດ້ຍ້າຍໄປເປັນ ແຮງງານຂັ້ນຕໍ່າ ເຖິງຂັ້ນລາຍຈ່າຍຈຳເປັນ. ພວກເຂົາລາຍງານວ່າ ໃນປີ 2021, ໄດ້ມີການຖາງປ່າ ແລະ ຈູດປ່າ ຫຼາຍກວ່າປົກກະຕິໃນເຂດປ່າສະຫງວນແຫ່ງຊາດ.

ກົນໄກການສະໜັບສະໜູນຂະແໜງທ່ອງທ່ຽວແບບຊົ່ວຄາວ ທີ່ໄດ້ມີການເຫັນດີໂດຍລວມ ຈາກຜູ້ທີ່ມີສ່ວນຮ່ວມໃນການສົ່ງເສີມການທ່ອງທ່ຽວພາຍໃນ. ໄດ້ມີຄວາມພະຍາຍາມຈຳນວນໜຶ່ງໃນການຈັດຕັ້ງ ໂຄງການ *ລາວທ່ຽວລາວ* ເຊິ່ງນສະໜັບສະ

---

[1] ສະຖິຕິການທ່ອງທ່ຽວ 2019, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

[2] ການທ່ອງທ່ຽວຫຼວງພະບາງ ແລະ ໂອກາດສຳລັບຜູ້ທຸກຍາກ: ການປະເມີນຕ່ອງໂສ້ມູນຄ່າ. SNV, 2006. https://www.mekongtourism.org/wp-content/uploads/Luang-Prabang-tourism-the-poor-final_1.pdf

[3] ທະນາຄານໂລກ. 2019. ການພັດທະນາການທ່ອງທ່ຽວທາງທຳມະຊາດ ເປັນຂະແໜງຍຸດທະສາດສຳລັບການເຕີບໂຕສີຂຽວໃນ ສປປ ລາວ: ບົດລາຍງານວິເຄາະ. ທະນາຄານໂລກ, ນະຄອນຫຼວງວຽງຈັນ. © ທະນາຄານໂລກ. https://openknowledge.worldbank.org/handle/10986/33095 License: CC BY 3.0 IGO

[4] ສະຖິຕິການທ່ອງທ່ຽວ 2020, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ໜູນໂດຍໂຄງການ LuxDev, ທີ່ໄດ້ຮັບຜົນສຳເລັດພໍສົມຄວນໃນການສົ່ງເສີມການທ່ອງທ່ຽວພາຍໃນ. ເຖິງຢ່າງໃດກໍ່ຕາມ, ການທ່ອງທ່ຽວພາຍໃນ ໄດ້ຮັບຜົນກະທົບຈາກການປິດເມືອງຕໍ່ເນື່ອງທົ່ວປະເທດ ແລະ ໃນນະຄອນຫຼວງວຽງຈັນ, ເຊິ່ງເປັນແຫຼ່ງຕະຫຼາດຫຼັກຂອງການທ່ອງທ່ຽວພາຍໃນ. ການຂາດມາດຕະການຄວາມປອດໄພ ໃນການປ້ອງກັນພະຍາດ COVID ຢູ່ທີ່ຈຸດໝາຍປາຍທາງທ່ອງທ່ຽວຫຼັກຂ້ອນຂ້າງເປັນຄວາມຮັບຜິດຊອບສ່ວນໜຶ່ງຂອງການແຜ່ລະບາດທີ່ຮຸນແຮງ ທີ່ເກີດຂຶ້ນໃນຊ່ວງບຸນປີໃໝ່ລາວ ໃນເດືອນເມສາ 2021, ທີ່ສົ່ງຜົນໃຫ້ມີການປິດເມືອງເປັນໄລຍະຍາວສົມຄວນໝ ນັບແຕ່ເລີ່ມການແຜ່ລະບາດຂອງພະຍາດ.

ສຳລັບອຸດສາຫະກຳທ່ອງທ່ຽວ, ຄຳຖາມທີ່ຄົງຄ້າງແມ່ນ ຈະເປີດປະເທດແນວໃດໃຫ້ແກ່ນັກທ່ອງທ່ຽວພາຍໃນ, ພາກພື້ນ ແລະ ສາກົນ ໃນແບບທີ່ມີຄວາມຮັບຜິດຊອບ ໂດຍຈະບໍ່ສົ່ງຜົນໃຫ້ມີການເພີ່ມຂຶ້ນຂອງການແຜ່ລະບາດຂອງພະຍາດ COVID. ຫລາຍຜທ່ານໄດ້ສະແດງຄວາມສົນໃຈໃນໄລຍະການສົນທະນາລະຫວ່າງພາກລັດ-ທຸລະກິດທ່ອງທ່ຽວ ທີ່ຈະເຮັດຄື ປະເທດອື່ນໃນພາກພື້ນ ທີ່ອະນຸຍາກໃຫ້ມີນັກທ່ອງທ່ຽວສາກົນ ແລະ ພາກພື້ນເດີນທາງມາລາວ ແລະ ພັກເຊົາໃນເຂດທີ່ປອດໄພຈາກພະຍາດ COVID, ທີ່ຮູ້ກັນວ່າ “Sandbox.” ພູເກັດ[5] ອາດແມ່ນຕົວຢ່າງທີ່ຮູ້ກັນດີໃນພາກພື້ນທີ່ໄດ້ມີການເປີດໃຫ້ມີການທ່ອງທ່ຽວແລ້ວ. ຈຸດໝາຍປາຍທາງການທ່ອງທ່ຽວອື່ນທີ່ໄດ້ມີການເປີດໂດຍມີມາດຕະການຄວາມປອດໄພຈາກພະຍາດ COVID ລວມເຖິງ ມາວດີບ[6], ທີ່ອະນຸຍາດໃຫ້ນັກທ່ອງທ່ຽວພັກເຊົາໃນລີສອດທີ່ໄດ້ຮັບການອະນຸມັດ, ແລະ ສິງກະໂປ[7], ທີ່ໄດ້ມີມາດຕະການທີ່ເຄັ່ງຄັດ ໃນຂະນະທີ່ອະນຸຍາດໃຫ້ນັກທ່ອງທ່ຽວຈຳນວນໜຶ່ງເຂົ້າໄດ້. ທະນາຄານພັດທະນາອາຊີ (ADB) ໄດ້ແນະນຳວ່າ ການທ່ອງທ່ຽວແບບຟອງສະບູ່ທີ່ປອດໄພຈາກພະຍາດ COVID ສຳລັບການທ່ອງທ່ຽວພາກພື້ນແມ່ນທາງໜຶ່ງທີ່ຈະຟື້ນຟູອຸດສາຫະກຳດັ່ງກ່າວ. ມີຄຳແນະນຳໃນແຜນທີ່ໄດ້ຮັບການສະໜັບສະໜູນຈາກ UNDP ທີ່ອະນຸມັດໂດຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ກຖວທ) ໃນການຊອກການເຈລະຈາການທ່ອງທ່ຽວພາກພື້ນແບບບັບເບິ້ນ[8]. ກຖວທ ໄດ້ກະກຽມຮ່າງແຜນສຳລັບການເປີດການທ່ອງທ່ຽວ ໃຫ້ແກ່ນັກທ່ອງທ່ຽວເກົາຫຼີໃຕ້ ແລະ ຈີນ ໃນປີ 2021. ແນວໃດກໍ່ຕາມ, ຍັງບໍ່ທັນໄດ້ມີການສຶກສາ ຫຼື ແຜນທີ່ຈະກວດສອບຂໍ້ມູນຂອງແນວຄິດຂອງການຈັດຕັ້ງປະຕິບັດແບບ ແຊນບັອກ ຫຼື ບັບເບິ້ນ.

ໃນເດືອນກັນຍາ 2021, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ຖາມສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ໃຫ້ຊອກແນວຄິດຂອງການສ້າງ ແຊນບັອກ ຫຼື ບັບເບິ້ນ. ບົນພື້ນຖານດັ່ງກ່າວ ສຄອຊ ໄດ້ກະກຽມແຜນການປະເມີນ ແລະ ການຈັດຕັ້ງປະຕິບັດວຽກງານນີ້.

## 1.2. ການສົມທຽບໂຄວິດ ແຊນບັອກ (**Sandbox**) **&** ກົດລະບຽບຄວາມປອດໄພໃນອາຊີຕາເວັນອອກສຽງໃຕ້ **&** ອາຊີໃຕ້ **&** ຄຳແນະນຳສຳລັບ ສປປ ລາວ

### *1.1.1. ບັນດາປະເທດ/ຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້*

[5] https://www.thaiembassy.com/travel-to-thailand/no-quarantine-phuket-sandbox-plan
[6] https://www.traveldailymedia.com/travelling-to-the-fully-reopened-island-of-maldives-1/
[7] https://safetravel.ica.gov.sg
[8] ແຜນການຟື້ນຟູຂະແໜງການທ່ອງທ່ຽວ ສປປ ລາວ. UNDP, ຕຸລາ 2020.

***ຕາຕະລາງ 1: ບັນດາປະເທດ/ຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້***

| ປະເທດ[9] | ວັນທີເປີດ | ປະເພດຂອງການເປີດ (ແຊນບັອກ / ຈຳກັດ / ທັງໝົດ) |
|---|---|---|
| ມາວດີບ | ກໍລະກົດ 2020 | ລີສອດເທົ່ານັ້ນ, ຢູ່ຕ່າງປະເທດ ແລະ ໂຮງແຮມ ທີ່ຕັ້ງຢູ່ເກາະທີ່ບໍ່ມີຄົນອາໄສຢູ່ & ເກາະທ້ອງຖິ່ນທີ່ມີການສັກວັກຊີນສູງ |
| ສີລັງກາ | ມັງກອນ 2021 | • ຖ້າສັກວັກຊີນແລ້ວແມ່ນສາມາດໄປໄດ້ທຸກບ່ອນ ແລະ ຈັດການທ່ອງທ່ຽວຂອງຕົນໄດ້<br>• ຖ້າບໍ່ໄດ້ສັກວັກຊີນ ຕ້ອງໄດ້ພັກເຊົາໃນ "ບ່ອນທ່ອງທ່ຽວໄບໂອ-ບັບເບິ້ນ" ສຳລັບ 14 ມື້ (ສາມາດຍ້າຍໄດ້ລະຫວ່າງໂຮງແຮມ ຂັ້ນ 1 ກັບ ພາຫະນະທີ່ຈັດໂດຍ ໂຮງແຮມ ຫຼື ບໍລິສັດທ່ອງທ່ຽວ) |
| ໄທ – "ພູເກັດ ແຊນບັອກ" | ກໍລະກົດ 2021 | • ແຊນບັອກ 14 ມື້: ທ່ອງທ່ຽວໄດ້ທຸກບ່ອນພາຍໃນພູເກັດສຳລັບ 14 ມື້.<br>• ແຊນບັອກ 7+7: ທ່ອງທ່ຽວໃນພູເກັດສຳລັບ 7 ມື້ ແລະ 7 ມື້ໃນ ສຸຣາດທານີ/ ສະໝຸຍ, ພັງງາ, ກຣະບີ່<br>• ຊຽງໃໝ່ (ນັກທ່ອງທ່ຽວອາຊຽນເທົ່ານັ້ນ)/ບາງກອກ (ພະຈິກ)<br>• ປະເທດທີ່ມີຄວາມສ່ຽງຕ່ຳ & ປານກາງ (ຢ່າງໜ້ອຍ 10 ລວມທັງ US, UK, ເຢຍລະມັນ, ຈີນ, ສິງກະໂປ) |
| ສິງກະໂປ "ເສັ້ນທາງທ່ອງທ່ຽວທີ່ໄດ້ຮັບວັກຊີນແລ້ວ" | ກັນຍາ 2021 | ເສັ້ນທາງທ່ອງທ່ຽວ– ເຢຍລະມັນ & ບຣູນາຍ (ກັນຍາ)<br>US, ການາດາ, ຝຣັ່ງ, ອີຕາລີ, ເນເທີແລນ, ເດັນມາກ, ສະເປນ (ຕຸລາ)<br>ເກົາຫຼີໃຕ້ (ພະຈິກ) |
| ເນປານ | 24 ກັນຍາ 2021 | ທ່ອງທ່ຽວທຸກບ່ອນໃນເນປານ (ນອກຈາກມີຂໍ້ຈຳກັດທ້ອງຖິ່ນ) |
| ບາຫຼີ | 14 ຕຸລາ 2021 | • ທ່ອງທ່ຽວທຸກບ່ອນໃນບາຫຼີ<br>• ຍີ່ປຸ່ນ, ນິວຊີແລນ, ຈີນ, ເກົາຫຼີໃຕ້, UAE (ບໍ່ຕ້ອງການແບັກແພກເກີ ຍ້ອນ ບັນຫາໃນໄລຍະ) |

<u>ສິ່ງທີ່ ສປປ ລາວ ຄວນພິຈາລະນາສຳລັບການເປີດປະເທດຄືນໃໝ່</u>

- ອະນຸຍາດນັກທ່ອງທ່ຽວ ທີ່ໄດ້ສັກວັກຊີນ ໃຫ້ເດີນທາງມາລາວ ຍ້ອນ ລາວບໍ່ສາມາດເລືອກການເຊື່ອມຕໍ່ໄດ້.
- ວາງເປົ້າໝາຍປະເທດທີ່ອະນຸຍາດຄ້າຍຄືກັບປະເທດໄທ (ທີ່ລວມທັງຕະຫຼາດໃຫຍ່ທັງໝົດ).
- ລວມທັງ ປະເທດ ເກົາຫຼີໃຕ້, ມາເລເຊຍ ແລະ ປະເທດອາຊຽນອື່ນທີ່ມີການເຊື່ອມຕໍ່ໂດຍກົງ (ຕົວຢ່າງ ຖ້ຽວບິນໂດຍກົງ).
- ເອກະສານຢັ້ງຢືນການສັກວັກຊີນ ແມ່ນບັນຫາທີ່ຕ້ອງໄດ້ພິຈາລະນາ, ແຕ່ສາຍການບິນຈະເປັນຜູ້ກວດ.

[9] ເບິ່ງບ່ອນອີງສຳລັບການສົມທຽບພາກພື້ນ ໃນເອກະສານຊ້ອນທ້າຍສຳລັບແຫຼ່ງຂໍ້ມູນ.

### *1.1.2. ອັດຕາການສັກວັກຊີນ & ກໍລະນີຂອງຈຸດໝາຍປາຍທາງທີ່ໄດ້ເປີດແລ້ວ ຫຼື ມີແຜນຈະເປີດໃນອາຊີຕາເວັນອອກສຽງໃຕ້ & ອາຊີໃຕ້*

- ຈຸດໝາຍປາຍທາງການທ່ອງທ່ຽວທີ່ໄດ້ເປີດແລ້ວໃນພາກພື້ນ ລວມທັງ ມາວດີບ (ກໍລະກົດ 2020), ສີລັງກາ (ມັງກອນ 2021), ໄທ (ກໍລະກົດ 2021), ສິງກະໂປ (ກັນຍາ 2021), ເນປານ (ກັນຍາ), ບາຫຼີ (ຕຸລາ).
- ອີກຫຼາຍບ່ອນທີ່ມີແຜນຈະເປີດໄວໆນີ້ ພາຍໃນປີນີ້, ລວມທັງ ກຳປູເຈຍ (ຕຸລາ), ຟູກວັກ-ຫວຽດນາມ (ພະຈິກ 2021), ມາເລເຊຍ (ພະຈິກ), ແລະ ອິນເດຍ (ຕຸລາ-ພະຈິກ).
- ອັດຕາສະເລ່ຍການສັກວັກຊີນຢູ່ຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດແລ້ວເຫຼົ່ານັ້ນແມ່ນ 61%, ຊຶ່ງສິງກະໂປແມ່ນສູງສຸດ (83-85%) ແລະ ເນປານແມ່ນຕໍ່າສຸດ (22%).
- ກໍລະນີຜູ້ຕິດເຊື້ອສະເລ່ຍໃນແຕ່ລະມື້ຂອງຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດແລ້ວເຫຼົ່ານັ້ນ ແມ່ນ 0.033%, ຊຶ່ງປະທດມາວດີບແມ່ນສູງສຸດ (0.13%) ແລະ ບາຫຼີ ແມ່ນຕໍ່າສຸດ (0.0008%).

<u>ສິ່ງທີ່ ສປປ ລາວ ຄວນພິຈາລະນາ ລັບການເປີດປະເທດຄືນໃໝ່</u>

- ລາວມີອັດຕາການສັກວັກຊີນຕໍ່າກວ່າສະເລ່ຍ ເມື່ອສົມທຽບກັບຈຸດໝາຍປາຍທາງການທ່ອງທ່ຽວບ່ອນອື່ນທີ່ເປີດແລ້ວ (40.3% ແມ່ນສັກວັກຊີນຄົບ (ພົນລະເມືອງທີ່ມີສິດໄດ້ຮັບ) ແລະ 57% ໄດ້ສັກໜຶ່ງເຂັມ, ມາຮອດວັນທີ 5 ກັນຍາ 2021.)
- ນະຄອນຫຼວງວຽງຈັນແມ່ນສູງກວ່າສະເລ່ຍ ແລະ ສູງກວ່າ ພູເກັດ (72.9 ໄດ້ຮັບວັກຊີນຄົບ ແລະ 96.5% ຢ່າງໜ້ອຍໜຶ່ງເຂັມ).
- ແຂວງເປົ້າໝາຍ ເຊັ່ນ: ຫຼວງພະບາງ (31% ສັກວັກຊີນຄົບ/47% ຢ່າງໜ້ອຍໜຶ່ງເຂັມ) ແລະ ຈຳປາສັກ (30.8% ສັກວັກຊີນຄົບ/46.9% ຢ່າງໜ້ອຍໜຶ່ງເຂັມ) ແມ່ນຂ້ອນຂ້າງຕໍ່າ ເມື່ອທຽບໃສ່ຈຸດໝາຍປາຍທາງການທ່ອງທ່ຽວທີ່ໄດ້ເປີດແລ້ວ.
- ກໍລະນີຜູ້ຕິດເຊື້ອລາຍວັນໃນ ສປປ ລາວ (0.007) ແມ່ນຕໍ່າກວ່າສະເລ່ຍ ເມື່ອທຽບໃສ່ຈຸດໝາຍປາຍທາງການທ່ອງທ່ຽວທີ່ໄດ້ເປີດແລ້ວ.
- ໃຫ້ບູລິມະສິດການສັກວັກຊີນ ສຳລັບຈຸດໝາຍປາຍທາງການທ່ອງທ່ຽວຕົ້ນຕໍ ໂດຍໃຫ້ໄດ້ຮັບການສັກວັກຊີນສູງກວ່າ 60-70%, ໂດຍສະເພາະ ສຳລັບຫຼວງພະບາງ, ວັງວຽງ, ຈຳປາສັກ.

### *1.1.3. ຂໍ້ກຳນົດດ້ານການສັກວັກຊີນ*

- ສິງກະໂປກຳນົດ ຕ້ອງໄດ້ຮັບວັກຊີນທີ່ຖືກອະນຸມັດໂດຍອົງການອານາໄມໂລກ (WHO) ເທົ່ານັ້ນ ແລະ ບາຫຼີ ແມ່ນກຳນົດ ໃຫ້ນັກທ່ອງທ່ຽວທຸກຄົນຕ້ອງໄດ້ຮັບການສັກວັກຊີນ
- ຈຸດໝາຍປາຍທາງການທ່ອງທ່ຽວອື່ນ ແມ່ນອະນຸຍາດໃຫ້ນັກທ່ອງທ່ຽວເຂົ້າມາໂດຍບໍ່ຈຳເປັນຕ້ອງມີການສັກວັກຊີນ ແຕ່ກຳນົດໃຫ້ພວກເຂົາພັກເຊົາໃນເຂດທ່ອງທ່ຽວບັບເບິ້ນ (ສີລັງກາ), ເຂດທີ່ບໍ່ມີຜູ້ອາໄສຢູ່ (ມາວດີບ), ຫຼື ເຂດກັກຕົວ ສຳລັບ 10-14 ວັນ (ໄທ, ເນປານ).

<u>ສົມທຽບໃສ່ ສປປ ລາວ</u>: ປະຈຸບັນແມ່ນກຳນົດໃຫ້ທຸກຄົນທີ່ເຂົ້າມາຕ້ອງໄດ້ຮັບການສັກວັກຊີນ

<u>ສິ່ງທີ່ ສປປ ລາວ ຄວນພິຈາລະນາ ສຳລັບການເປີດປະເທດຄືນໃໝ່</u>: ສຳລັບຄວາມປອດໄພສູງສຸດ, ສືບຕໍ່ກຳນົດໃຫ້ມີການສັກວັກຊີນທີ່ຖືກອະນຸມັດໂດຍອົງການ WHO.

### *1.1.4. ຂໍ້ກຳນົດດ້ານ ການກວດພະຍາດ, ການແຍກປ່ຽວດ້ວຍຕົນເອງ & ການກັກຕົວ*

- ທຸກຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດແມ່ນກຳນົດໃຫ້ກວດ PCR ກ່ອນການເດີນທາງ ໃນລະຫວ່າງ 48 ຊົ່ວໂມງ (ສິງກະໂປ), 72 ຊົ່ວໂມງ (ໄທ, ສີລັງກາ, ບາຫຼີ, ເນປານ), ແລະ 96 ຊົ່ວໂມງ (ມາວດີບ).

- ຈຸດໝາຍປາຍທາງການທ່ອງທ່ຽວທີ່ເປີດ ສ່ວນຫລາຍແມ່ນກໍານົດໃຫ້ກວດ PCR ໃນເວລາເດີນທາງມາຮອດ, ຍົກເວັ້ນ ປະເທດມາວດີບ (ກວດສະເພາະຜູ້ທີ່ມີອາການ ແລະ ປະຕິບັດການກວດແບບສຸ່ມ) ແລະ ສີລັງກາ (ກໍານົດສະເພາະນັກທ່ອງທ່ຽວທີ່ຍັງບໍ່ທັນໄດ້ສັກວັກຊີນ).
- ໄທ ແລະ ສິງກະໂປ ກໍານົດ ໃຫ້ມີການແຍກປ່ຽວດ້ວຍຕົນເອງທີ່ຫ້ອງພັກໂຮງແຮມ ຈົນກວ່າຈະໄດ້ຮັບຜົນກວດທີ່ເປັນລົບ , ໂດຍປົກກະຕິແມ່ນພາຍໃນ 1 ມື້. ບາຫຼີ ກໍານົດການແຍກປ່ຽວດ້ວຍຕົນເອງ 5 ມື້. ຈຸດໝາຍປາຍທາງການທ່ອງ ທ່ຽວອື່ນບໍ່ໄດ້ໃຫ້ມີການກັກຕົວ ຫຼື ການແຍກປ່ຽວດ້ວຍຕົນເອງ ຍົກເວັ້ນ ກໍລະນີທີ່ຍັງບໍ່ທັນໄດ້ສັກວັກຊີນ.
- ການເຂົ້າແມ່ນຈໍາກັດ ໂດຍການສະໜອງການກວດ PCR ແລະ ຄວາມສາມາດຂອງປະເທດທີ່ອອກຂໍ້ກໍານົດ.
- ການກວດແມ່ນ ໄດ້ຈ່າຍກ່ອນລ່ວງໜ້າໂດຍນັກທ່ອງທ່ຽວ. ປະເທດສີລັງກາ ເກັບຄ່າບໍລິການ $40 ຕໍ່ການກວດ. ສິງກະໂປອະນຸຍາດໃຫ້ເລືອກກວດຢູ່ 7 ຄລີນິກທີ່ໄດ້ຮັບການອະນຸມັດ.
- ຜົນການສໍາຫຼວດຂອງ IATA ເຫັນວ່າ 84% ຂອງຜູ້ຕອບຄໍາຖາມແມ່ນບໍ່ສົນໃຈໃນການທ່ອງທ່ຽວໃນຈຸດໝາຍປາຍທາງທີ່ກໍານົດໃຫ້ມີການກັກຕົວໃນໄລຍະເທົ່າໃດກໍ່ຕາມ, ແລະ 75% ກ່າວວ່າຄ່າໃຊ້ຈ່າຍໃນການກວດແມ່ນເປັນສິ່ງກີດຂວາງທີ່ສໍາຄັນໃນການເດີນທາງ.
- ທຸກຈຸດໝາຍກໍານົດໃຫ້ມີການກັກຕົວຖ້າຜົນກວດເປັນບວກ. ມາວດີບ ອະນຸຍາດໃຫ້ນັກທ່ອງທ່ຽວ ທີ່ມີອາການໜ້ອຍພັກເຊົາໃນເຂດແຍກປ່ຽວຂອງໂຮງແຮມ. ບາຫຼີ ກໍານົດໃຫ້ໄປໂຮງໝໍເອກະຊົນທີ່ມີລາຄາແພງ ທີ່ນັກທ່ອງທ່ຽວເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍ. ໄທ ສົ່ງຄືນຄ່າຈອງທີ່ພັກ ເພື່ອໃຫ້ນັກທ່ອງທ່ຽວສາມາດຈ່າຍຄ່າການກັກຕົວຢູ່ໂຮງແຮມ.

<u>ສິ່ງທີ່ ສປປ ລາວ ຄວນຈາລະນາສໍາລັບການເປີດປະເທດຄືນໃໝ່</u>

- ການກວດ PCR 72 ຊົ່ວໂມງ ກ່ອນການເດີນທາງແມ່ນການປະຕິບັດທີ່ດີ ໂດຍທຽບໃສ່ຈຸດໝາຍປາຍທາງການທ່ອງທ່ຽວອື່ນໆ.
- ການກວດ PCR ເວລາມາຮອດ (ເບິ່ງ ຕາຕະລາງທີ 4. ການສົມທຽບກໍລະນີການກວດເວລາມາຮອດ). ປ່ຽນເປັນການກວດແບບ Rapid ເວລາມາຮອດ ເມື່ອພົນລະເມືອງໄດ້ຮັບການສັກວັກຊີນສູງຂຶ້ນ (70%+++).
- ຄວນກໍານົດໃຫ້ມີການແຍກປ່ຽວໃນໂຮງແຮມຈົນກວ່າຈະໄດ້ຮັບຜົນກວດ, ແຕ່ຄວນໃຫ້ໄວ ແລະ ຕໍ່າກວ່າ 24 ຊົ່ວໂມງ ແລະ ບໍ່ໃຫ້ໂຄສະນາ.
- ການກວດຄວນມີລາຄາຖືກ. ອະນຸຍາດໃຫ້ນັກທ່ອງທ່ຽວເລືອກຄລີນິກ ເພື່ອຫຼຸດຜ່ອນລາຄາລົງ ແລະ ເພີ່ມຄວາມອາດສາມາດ ແລະ ການສະໜອງ. ປະຈຸບັນ, ໃນນະຄອນຫຼວງວຽງຈັນລາຄາ ແມ່ນ $65-$120.
- ອະນຸຍາດໃຫ້ນັກທ່ອງທ່ຽວພັກເຊົາໃນໂຮງແຮມທີ່ໄດ້ກະກຽມໄວ້ໃຫ້ ຫຼື ໂຮງແຮມທີ່ຢູ່ເຂດທີ່ປ່ຽວ.

### *1.1.5. ຂໍ້ກໍານົດດ້ານການປະກັນໄພ*

- ສິງກະໂປກໍານົດໃຫ້ມີການປະກັນໄພ (ວົງເງິນ $30,000) ແລະ ໄທ (ວົງເງິນ $100,000).
- ສີລັງກາກໍານົດປະກັນໄພພາຍໃນສໍາລັບນັກທ່ອງທ່ຽວທີ່ບໍ່ທັນໄດ້ສັກວັກຊີນ ($12 ຕໍ່ ຄືນ, ວົງເງິນ $50,000 ສໍາລັບ 1 ເດືອນ).
- ເນປານ ແລະ ມາວດີບບໍ່ກໍານົດໃຫ້ຊື້ປະກັນໄພ.

<u>ສິ່ງທີ່ ສປປ ລາວ ຄວນຈາລະນາສໍາລັບການເປີດປະເທດຄືນໃໝ່</u>

- ຄວນກໍານົດໃຫ້ມີປະກັນໄພສຸຂະພາບ ຫຼື ເດີນທາງ, ທີ່ລວມທັງການຍົກຍ້າຍ ເພາະສະຖານທີ່ປິ່ນປົວສຸຂະພາບໃນ ສປປ ລາວ ແມ່ນຈໍາກັດ ແລະ ຖ້ຽວບິນປົກກະຕິກໍ່ຈໍາກັດ, ເຮັດໃຫ້ການຍົກຍ້າຍມີລາຄາແພງ.
- ຄວນມີການປະກັນໄພທີ່ມີລາຄາຖືກ ແລະ ວົງເງິນປະກັນໄພທີ່ຈະແຈ້ງ ຈາກບໍລິສັດທີ່ມີຊື່ສຽງ
- ນັກທ່ອງທ່ຽວຄວນມີທາງເລືອກ ໃນການສະແດງຫຼັກຖານຂອງການປະກັນໄພ ຫຼື ການຊື້ປະກັນໄພເດີນທາງທ້ອງຖິ່ນທີ່ຖືກໃນລາຄາຕະຫຼາດ.

- ຄວນມີສັນຍາຊາຍແດນ ສໍາລັບການຍົກຍ້າຍສຸກເສີນ ກ່ອນການເປີດ.

### *1.2.6 ຂໍ້ກໍານົດດ້ານການຕິດຕາມຂໍ້ມູນຕິດຕໍ່*

- ສິງກະໂປ (Trace Together), ໄທ (Thailand+), ມາວດີບ (TraceEkee), ແລະ ບາຫຼີ (PeduliLindungi) ມີ apps ສໍາລັບຕິດຕາມ. ເນປານ ແລະ ສີລັງກາ ຍັງບໍ່ທັນມີ apps.
- ສິງກະໂປກໍານົດໃຫ້ນັກທ່ອງທ່ຽວຕ້ອງເປີດ app ຈົນຮອດ 21 ມື້ ຫຼັງຈາກທີ່ອອກໄປແລ້ວ, ແຕ່ບໍ່ໄດ້ເກັບກໍາຂໍ້ມູນ ຍົກເວັ້ນ ໄດ້ຮັບການຮ້ອງຂໍຈາກ ກະຊວງສາທາລະນະສຸກ ໃນເວລາມີການແຜ່ລະບາດ ຫຼື ມີກໍລະນີຕິດເຊື້ອ.
- ໄທ ມີ app ທີ່ມີການຕິດຕາມສະຖານທີ່ ແລະ ກໍານົດໃຫ້ນັກທ່ອງທ່ຽວ check in ເທື່ອໜຶ່ງຕໍ່ມື້.
- ບາຫຼີ ມີ app ແຕ່ບໍ່ສາມາດນໍາໃຊ້ໄດ້.

<u>ສິ່ງທີ່ ສປປ ລາວ ຄວນຈາລະນາສໍາລັບການເປີດປະເທດຄືນໃໝ່</u>

- ລາວມີ LaoKYC app ທີ່ມີ QR Code (ພາສາລາວ, ອັງກິດ, ຈີນ ແລະ ຫວຽດນາມ). ທຸລະກິດຕ້ອງໄດ້ລົງທະບຽນ ໃນລະບົບ QR ແລະ ສະແດງຢູ່ສະຖານທີ່ຂອງພວກເຂົາ. ເຖິງແນວໃດກໍ່ຕາມ ມັນຍັງບໍ່ໄດ້ຮັບການຖືກບັງຄັບໃຊ້. App ນີ້ແມ່ນມີການນໍາໃຊ້ທີ່ບໍ່ສະດວກ ແລະ ເວັບໄຊ້ແມ່ນມີໃນລາວເທົ່ານັ້ນ.
- ຍົກລະດັບ app.
- ລົງທະບຽນທຸລະກິດທີ່ໄດ້ຮັບການອະນຸມັດທັງໝົດດ້ວຍ QR code.
- ກໍານົດໃຫ້ມີການຕິດຕາມໂດຍບໍລິສັດທ່ອງທ່ຽວ (ລາຍງານປະຈໍາວັນຈາກພະນັກງານນໍາທ່ຽວ) ແລະ ໂຮງແຮມ (ການລົງທະບຽນ ແລະ check-ins ເປັນປົກກະຕິ).

### *1.2.7 ການລົງທະບຽນ*

- ການລົງທະບຽນອອນລາຍກ່ອນການເດີນທາງ ເພື່ອການອະນຸມັດ (ສິງກະໂປ – "ບັດຜ່ານເດີນທາງສໍາລັບຜູ້ທີ່ໄດ້ສັກວັກຊີນແລ້ວ", ໄທ – "ໃບຢັ້ງຢືນການເຂົ້າ").
- ບາງຈຸດໝາຍປາຍທາງການທ່ອງທ່ຽວແມ່ນກໍານົດໃຫ້ມີການຈອງທົວ ແລະ ໂຮງແຮມລ່ວງໜ້າ (ໄທ, ສິງກະໂປ, ເນປານ)
- ສີລັງກາ ແລະ ມາວດີບບໍ່ຮຽກຮ້ອງໃຫ້ມີການຈອງລ່ວງໜ້າ.
- ໂດຍທົ່ວໄປມີການກໍານົດໃຫ້ມີແບບຟອມການແຈ້ງສຸຂະພາບ.

<u>ສິ່ງທີ່ ສປປ ລາວ ຄວນຈາລະນາສໍາລັບການເປີດປະເທດຄືນໃໝ່</u>

- ຄວນມີການພັດທະນາການລົງທະບຽນອອນລາຍ. ຄວນໃຫ້ມີຄວາມງ່າຍດາຍ ແລະ ເປັນຈຸດດຽວ, ລວມທັງການຈອງ ແລະ ການຈ່າຍລ່ວງໜ້າ ສໍາລັບການກວດ PCR ໃນເວັບໄຊດຽວກັນ.
- ບໍລິສັດທ່ອງທ່ຽວກໍ່ສາມາດຈັດການທັງໝົດນີ້ໄດ້.

### *1.2.8 ຂໍ້ກໍານົດຂອງໂຮງແຮມ & ຮ້ານອາຫານ*

- ມາວດີບ ກໍານົດໃຫ້ມີແຜນ COVID-19 ແລະ ຜູ້ຈັດການ COVID-19, ລວມທັງໄລຍະຫ່າງທາງສັງຄົມ, ເຂດແຍກປ່ຽວ ແລະ ພະນັກງານທີ່ໄດ້ສັກວັກຊີນແລ້ວ (93-99%).
- ໄທ ກໍານົດໃຫ້ 70% ຂອງພະນັກງານໄດ້ຮັບການສັກວັກຊີນ ແລະ ອະນຸມັດ ໂດຍ TAT-SHA (ການບໍລິຫານຄວາມປອດໄພ & ສຸຂະພາບ).
- ສິງກະໂປ ກໍານົດໃຫ້ມີການອະນຸມັດໂດຍໂຄງການ SG Clean.
- ສີລັງກາ ປອດໄພ & ຮັບປະກັນ (ລະດັບ 1 & ລະດັບ 2), ທີ່ໄດ້ຮັບການຢັ້ງຢືນຈາກບໍລິສັດອິດສະຫຼະ. ລະດັບ 1 ແມ່ນບໍ່ອະນຸຍາດໃຫ້ມີການຕ້ອນຮັບຂອງຄົນທ້ອງຖິ່ນ ແລະ ພະນັກງານບໍ່ສາມາດອອກຈາກໂຮງແຮມ. QR Code.

ສິ່ງທີ່ ສປປ ລາວ ຄວນຈາລະນາສໍາລັບການເປີດປະເທດຄືນໃໝ່
- ຈັດຕັ້ງປະຕິບັດ LaoSafe ຢູ່ທຸກບ່ອນທີ່ໄດ້ຮັບເລືອກເປັນຈຸດໝາຍປາຍທາງການທ່ອງທ່ຽວ.
- ກໍານົດໃຫ້ພະນັກງານມີການສັກວັກຊີນ 90% (ເທົ່າກັນກັບ ມາວດິບ).

## 1.3. ບົດຮຽນທີ່ຖອດຖອນໄດ້ຈາກພູເກັດແຊນບັອກ

- ຄາດຄະເນມີນັກທ່ອງທ່ຽວ 100,000 ຄົນໃນສາມເດືອນທໍາອິດ, ແຕ່ໄດ້ຮັບ 38,000 ເທົ່ານັ້ນ.
- ການຟື້ນຕົວຂອງກໍລະນີຜູ້ຕິດເຊື້ອ & ການແຈກຢາຍວັກຊີນທີ່ຊັກຊ້າໃນໄທເຮັດໃຫ້ ໄດ້ຮັບຄໍາແນະນໍາເດີນທາງ ແລະ ການການກັກ ໃນທາງລົບ ໂດຍ US ແລະ UK ແລະ
- ລາຍຈ່າຍ ແລະ ການມີເຄື່ອງມືກວດ ແມ່ນມີຜົນກະທົບຕໍ່ການມາຢັ້ງມຢາມ
- ຄວາມຫຍຸ້ງຍາກໃນການເອົາເອກະສານ ເຊັ່ນ: ໃບຢັ້ງຢືນການເຂົ້າ
- ການບັງຄັບການກັກຕົວ 14 ມື້ ຖ້າມີການໃກ້ຊິດກັບຜູ້ຕິດເຊື້ອ ສາມາດທໍາລາຍການທ່ຽວ ແລະ ເສຍເງິນ (ຖ້າມີສິ່ງຜິດພາດ, ຈະໄດ້ໃຊ້ເວລາພັກຜ່ອນໄປກັບການກັກຕົວ). ບໍ່ມີການໃຫ້ການຊ່ວຍເຫຼືອ.

ຄໍາແນະນໍາ
- ເຮັດໃຫ້ຂັ້ນຕອນມີຄວາມງ່າຍດາຍ
- ອັດຕາການສັກວັກຊີນທີ່ສູງ ແລະ ການປະຕິບັດຄວາມປອດໄພທີ່ເຂັ້ມແຂງ ເພື່ອໃຫ້ຈໍານວນຕົວເລກຕໍ່າ
- ການກັກຕົວທີ່ສັ້ນສໍາລັບການກວດຕື່ມ 1-2 ມື້ ຖ້າໄດ້ສັກວັກຊີນແລ້ວ.
- ຂັ້ນຕອນທີ່ເປັນມາດຕະຖານສໍາລັບຜູ້ທີ່ຜົນກວດເປັນບວກ ຫຼື ຖືກຮຽກຮ້ອງໃຫ້ກວດຕື່ມອີກ.

## 1.4. ການປະເມີນຕະຫຼາດ

10 ຕະຫຼາດຫລັກທີ່ສ້າງລາຍຮັບ ຍົກເວັ້ນ ສໍາລັບປະເທດໄທ ແລະ ຫວຽດນາມ ປະຈຸບັນ ແມ່ນໄດ້ຮັບການສັກວັກຊີນຄົບ ໃນອັດຕາເກືອບຮອດ 60%. ຕະຫຼາດພາກພື້ນອື່ນ ທີ່ມີອັດຕາການສັກວັກຊີນສູງ ລວມມີ ສິງກະໂປ, ມາເລເຊຍ ແລະ ກໍາປູເຈຍ. ສະເລ່ຍອັດຕາການສັກວັກຊີນຄົບສໍາລັບ EU ແມ່ນ 70%. ສປປ ລາວ ບໍ່ແມ່ນຈຸດໝາຍປາຍທາງຫລັກຂອງນັກທ່ອງທ່ຽວ ແຕ່ເປັນຈຸດໝາຍປາຍທາງ ທີ່ເພີ່ມຕື່ມໃນລາຍການທ່ອງທ່ຽວ. ສະນັ້ນ ຖ້າມີການເປີດປະເທດ ແນະນໍາວ່າໃຫ້ອະນຸຍາດໃຫ້ນັກທ່ອງທ່ຽວທຸກສັນຊາດສາມາດເຂົ້າໄດ້. ການກໍານົດການກັບຄືນມາປະເທດສໍາລັບຫຼາຍສັນຊາດ ກໍ່ແມ່ນສິ່ງທ້າທາຍໜຶ່ງ, ບວກກັບຄວາມເປັນຈິງທີ່ ຫຼາຍປະເທດຍັງບໍ່ລະບຸ ສປປ ລາວ ເປັນປະເທດທີ່ປອດໄພ. ດັ່ງນັ້ນ, ແນະນໍາວ່າການໃຫ້ຫຼາຍສັນຊາດສາມາດເຂົ້າໄດ້ຈະເປັນການຕະຫຼາດທີ່ດີກວ່າ.

*ຕາຕະລາງ 2: ຕະຫຼາດອີງຕາມອັດຕາການສັກວັກຊີນ*

| ຕະຫຼາດຫລັກທີ່ສ້າງລາຍຮັບໃນປີ 2019 | ປະເທດ | ຂົງເຂດ | ສັກວັກຊີນຄົບ | ສະເລ່ຍ 7 ວັນ | ຂໍ້ກໍານົດໃນການກັບຄືນ |
|---|---|---|---|---|---|
| | ສິງກະໂປ | ອາຊຽນ+3[10] | 82.30% | 3030 | ການແຍກປ່ຽວດ້ວຍຕົນເອງ |
| 2 | ຈີນ | ອາຊຽນ+3 | 79.70% | 27 | ບໍ່ອະນຸຍາດໃຫ້ເດີນທາງ |

[10] https://aseanplusthree.asean.org

| | | | | | |
|---|---|---|---|---|---|
| | ສະເປນ | EU | 78.20% | 1538 | ກວດ PCR ກ່ອນການເດີນທາງ |
| | ໄອແລນ | EU | 74.50% | 1708 | ມີຫຼັກຖານຂອງວັກຊີນ ຫຼື ກວດ PCR |
| | ກຳປູເຈຍ | ອາຊຽນ+3 | 74.40% | 265 | ກັກຕົວ 7 ວັນ |
| | ການາດາ | Americas | 72.40% | 1577 | ກວດ PCR ກ່ອນການເດີນທາງ |
| | ອີຕາລີ | EU | 71.00% | 2489 | ກວດ PCR/Rapid ກ່ອນການເດີນທາງ |
| | ມາເລເຊຍ | ອາຊຽນ+3 | 70.30% | 7299 | ກັກຕົວ 7 ວັນ |
| 7 | ຍີ່ປຸ່ນ | ອາຊຽນ+3 | 67.40% | 550 | ກັກຕົວ 14 ວັນ |
| 6 | ຝຣັ່ງ | EU | 67.20% | 4649 | ມີຫຼັກຖານຂອງວັກຊີນເທົ່ານັ້ນ |
| 5 | USA | ອາເມລິກາ | 66.70% | 80.313 | ກວດ PCR ກ່ອນການເດີນທາງ |
| 8 | UK | ອາເມລິກາ | 66.70% | 42123 | ກວດກ່ອນການມາຮອດ 2 ວັນ |
| | ເນເທີແລນ | EU | 66.50% | 3431 | ກັກຕົວສຳລັບປະເທດໄທ |
| 9 | ເຢຍລະມັນ | EU | 65.70% | 9083 | ກັກຕົວ 10 ວັນ ຢູ່ເຮືອນ |
| 3 | ເກົາຫຼີໃຕ້ | ອາຊຽນ+3 | 64.10% | 1518 | ບໍ່ກັກຕົວ[11] |
| | ລຸກຊຳບວກ | EU | 63.20% | 100 | ກວດ PCR ກ່ອນການເດີນທາງ |
| 10 | ອົດສະຕຣາລີ | Asia-Pacific | 55.90% | 2295 | ບໍ່ໃຫ້ເຂົ້າ |
| | ນິວຊີແລນ | Asia-Pacific | 54.50% | 57 | ບໍ່ໃຫ້ເຂົ້າ |
| 1 | ໄທ | ອາຊຽນ+3 | 35.80% | 10402 | ກັກຕົວ 7 ວັນ |
| 4 | ຫວຽດນາມ | ອາຊຽນ+3 | 18.76% | 3484 | ກັກຕົວ 7 ວັນ |

## 1.5. ການປະເມີນຂອງຂໍ້ກຳນົດປະຈຸບັນກ່ຽວກັບການກັບຄືນ ສປປ ລາວ

| ຂໍ້ກຳນົດປະຈຸບັນ | ບັນຫາ | ຄຳແນະນຳ |
|---|---|---|
| ຕ້ອງມີໃບຢັ້ງຢືນການເຂົ້າທີ່ອອກໃຫ້ໂດຍ ກຊ ຕປທ ທີ່ໄລຍະນຳໃຊ້ 30 ວັນ | • ຂັ້ນຕອນ 4-5 ອາທິດ<br>• ແບບຟອມເອກະສານ ແລະ ຂັ້ນຕອນຍັງບໍ່ມີການເຜີຍແຜ່ອອນລາຍ[12]<br>• ຕ້ອງມີການຈ້າງຜູ້ບໍລິການ<br>• ຕ້ອງອອກໃບຢັ້ງຢືນການເຂົ້າຄືນທີ່ມີຄ່າທຳນຽມ ຖ້າໝົດກຳນົດ | • ເຜີຍແຜ່ຂັ້ນຕອນທີ່ຈະແຈ້ງອອນລາຍ<br>• ກຳນົດເວລາອະນຸມັດທີ່ຈະແຈ້ງ ພາຍໃນ 1-2 ວັນ<br>• ກຳນົດເງື່ອນໄຂການອະນຸມັດທີ່ຈະແຈ້ງ<br>• ອະນຸຍາດໃຫ້ມີການສະໝັກອອນລາຍໂດຍທີ່ບໍ່ມີຄ່າທຳນຽມເພີ່ມຕື່ມ |

[11] ຍົກເວັ້ນສຳລັບນັກທ່ອງທ່ຽວທີ່ຍັງບໍ່ທັນໄດ້ສັກວັກຊີນ ທີ່ຕ້ອງກັກຕົວ 14 ວັນ. https://www.straitstimes.com/singapore/spore-sets-up-vaccinated-travel-lanes-with-9-more-countries-covid-19-situation-there

[12] https://immigration.gov.la/entering-and-leaving-laos/

| | | |
|---|---|---|
| ຜູ້ສະໝັກຕ້ອງມີວິຊາເຂົ້າອອກຫຼາຍເທື່ອຢູ່ແລ້ວ | • ບໍ່ມີ evisa[13]<br>• ບໍ່ມີວິຊາກັບທີ່ | • ອະນຸຍາດໃກ້ມີການສະໝັກ eVisa<br>• ລວມການຂໍ eVisa ກັບການຂໍໃບຢັ້ງຢືນການເຂົ້າ<br>• ອະນຸຍາດໃຫ້ມີວິຊາກັບທີ່ ກັບ ການອອກໜັງສືຢັ້ງຢືນການເຂົ້າອອນລາຍ |
| ມີການຢັ້ງຢືນການຈອງໂຮງແຮມກັກຕົວ | • ຕົວເລືອກໂຮງແຮມຍັງຈໍາກັດ[14]<br>• ໂຮງແຮມສ່ວນໃຫຍ່ແມ່ນໂຮງແຮມຂະໜາດໃຫຍ່ | • ອະນຸຍາດໂຮງແຮມທັງໝົດ ທີ່ *LaoSafe* ຢັ້ງຢືນ ແລະ ອັດຕາການສັກວັກຊີນຂອງພະນັກງານ ແມ່ນ 90% |
| ຊາຍແດນສາກົນສໍາລັບຜູ້ເຮັດວຽກ | • ຊາຍແດນທີ່ໄດ້ຮັບການອະນຸຍາດໃຫ້ເຂົ້າຍັງບໍ່ຈະແຈ້ງ | • ເຊື່ອມຊາຍແດນກັບຄວາມສາມາດໃນການກວດ<br>• ເຜີຍແຜ່ຊາຍແດນທີ່ໄດ້ຮັບການອະນຸຍາດສໍາລັບການເຂົ້າ |
| ປະກັນໄພ COVID $100 ສໍາລັບ 14 ມື້ (ແບບບັງຄັບ) - ຊື້ເມື່ອມາຮອດວັດໄຕ | • ບໍ່ມີຄວາມຈະແຈ້ງກ່ຽວກັບວົງເງິນປະກັນ ຫຼື ໄລຍະເວລາຂອງການຄຸ້ມຄອງ<br>• ລາຄາແພງ (ເທົ່າກັນກັບແຜນມີອາຊີບທີ່ຊອກໄດ້ອອນລາຍ[15]) | • ອະນຸຍາດໃຫ້ນັກທ່ອງທ່ຽວສະແດງຫຼັກຖານຂອງປະກັນໄພ ເທິງແບບຟອມໃບຢັ້ງຢືນການເຂົ້າ ແລະ ຍົກເວັ້ນຈາກການຊື້ປະກັນໄພຕື່ມ<br>• ສະໜອງປະກັນໄພທີ່ມີຂໍ້ມູນວົງເງິນປະກັນຈະແຈ້ງ |
| ຕ້ອງກະກຽມເງິນສົດ ເພື່ອຈ່າຍຄ່າກວດ PCR ເມື່ອມາຮອດ | • ບໍ່ສະດວກ<br>• ບໍ່ມີການເຜີຍແຜ່ທີ່ຈະແຈ້ງ | • ອະນຸຍາດໃຫ້ນັກທ່ອງທ່ຽວຈ່າຍລ່ວງ<br>• ອະນຸຍາດໃຫ້ນັກທ່ອງທ່ຽວຈອງລ່ວງໜ້າ |
| ບໍ່ໄດ້ຮັບການແຈ້ງຜົນຖ້າຜົນກວດເປັນລົບ | • ຂັ້ນຕອນບໍ່ຈະແຈ້ງ | • ນໍາໃຊ້ອີເມວ ແລະ app ເພື່ອສົ່ງຂໍ້ຄວາມ<br>• ຂັ້ນຕອນພາຍຫຼັງບໍ່ຈະແຈ້ງ |
| ໄດ້ລໍຖ້າດົນ ທີ່ສູນທົດລອງ ແລະ ລະບາດວິທະຍາແຫ່ງຊາດ ເພື່ອກວດກ່ອນອອກ | • ຕ້ອງໃຊ້ເວລາເຄິ່ງມື້<br>• ບໍ່ສະດວກ | • ອະນຸຍາດໃຫ້ໂຮງໝໍເອກກະຊົນ ແລະ ຫ້ອງທົດລອງດໍາເນີນການກວດ<br>• ອະນຸຍາດໃຫ້ນັກທ່ອງທ່ຽວ ຈອງໂດຍກົງກັບໂຮງໝໍເອກກະຊົນ ຫຼື ຫ້ອງທົດລອງ |

13 https://laoevisa.gov.la/index
14 https://www.tourismlaos.org/2020/09/04/government-approved-covid-19-quarantine-hotels-in-vientiane-capital/
15 https://www.worldnomads.com/travel-insurance

## 1.6. SWOT ສຳລັບການເປີດຄືນການທ່ອງທ່ຽວໃນ ສປປ ລາວ

| ຈຸດແຂງ | ຈຸດອ່ອນ |
|---|---|
| • ອັດຕາການສັກວັກຊີນທີ່ສູງໃນນະຄອນຫຼວງວຽງຈັນ<br>• ອັດຕາການຕິດເຊື້ອຂ້ອນຂ້າງຕໍ່າ ເມື່ອທຽບກັບຈຸດໝາຍປາຍທາງອື່ນທີ່ໄດ້ເປີດແລ້ວ<br>• ຄວາມໜາແໜ້ນພົນລະເມືອງຕໍ່າ<br>• ການຮັບປະທານອາຫານທາງນອກ ແລະ ກິດຈະກໍາຫຼາຍ<br>• ມີການວາງຂໍ້ກໍານົດການເຂົ້າທີ່ເຂັ້ມແຂງຢູ່ແລ້ວ (ການສັກວັກຊີນ, ການກວດ, ການກັກຕົວ ແລະ ອື່ນໆ)<br>• ທຸລະກິດຈໍານວນຫຼາຍໄດ້ປະຕິບັດໄລຍະຫ່າງທາງສັງຄົມ, ມາດຕະການຮັກສາຄວາມສະອາດ ແລະ ປອດໄພ | • ອັດຕາການສັກວັກຊີນທີ່ຕໍ່າໃນແຂວງທີ່ເປັນຈຸດໝາຍປາຍທາງການທ່ອງທ່ຽວ<br>• ມີການຍົກເວັ້ນສໍາລັບຂໍ້ກໍານົດການເຂົ້າ<br>• App ຕິດຕາມບໍ່ມີຄຸນນະພາບ ແລະ ຄວາມສາມາດ<br>• ເອກະສານ ແລະ ການລົງທະບຽນ ບໍ່ຈະແຈ້ງ, ຫຍຸ້ງຍາກ, ໃຊ້ເວລາດົນ<br>• ຄວາມອາດສາມາດຂອງລະບົບສາທາລະນະສຸກຍັງຈໍາກັດ<br>• ການໂຍກຍ້າຍໄປປະເທດອື່ນແມ່ນບໍ່ຈະແຈ້ງ ແລະ ບໍ່ງ່າຍ<br>• ທຸລະກິດຍັງບໍ່ໄດ້ຮັບການອະນຸມັດຈາກ LaoSafe<br>• ຖ້ຽວບິນລາຄາແພງ ແລະ ປະຈຸບັນແມ່ນຍັງຈໍາກັດ |
| **ກາລະໂອກາດ** | **ສິ່ງທ້າທາຍ** |
| • LaoSafe ໄດ້ຮັບການອະນຸມັດ ແລະ ສາມາດຈັດຕັ້ງປະຕິບັດ<br>• ໂອກາດໃນການສະໜັບສະໜູນສໍາລັບການຈັດຕັ້ງປະຕິບັດ LaoSafe ແລະ ອື່ນໆ ຈາກອົງການພັດທະນາສາກົນ (LuxDev, USAID, ADB, UNDP, Sustour…)<br>• ຈຸດໝາຍປາຍທາງການທ່ອງທ່ຽວຈໍານວນຫຼາຍຍັງບໍ່ທັນເປີດ<br>• ໂອກາດສໍາລັບນັກທ່ອງທ່ຽວພາກພື້ນແມ່ນສູງ.<br>• ຈຸດໝາຍປາຍທາງການທ່ອງທ່ຽວ ມີຖ້ຽວບິນໂດຍກົງຢູ່ແລ້ວ (ໄທ, ເກົາຫຼີໃຕ້, ມາເລເຊຍ)<br>• ຖ້ຽວບິນສ່ວນຕົວ ແລະ ເໜົາລໍາແບບກຸ່ມທົວຈາກທຸກບ່ອນໃນໂລກ | • ການຈັດຕັ້ງປະຕິບັດທີ່ບໍ່ດີ ແລະ ກໍລະນີຕິດເຊື້ອເພີ່ມຂຶ້ນ ສາມາດເຮັດໃຫ້ ມີການປິດປະເທດໃນອະນາຄົດ ຫຼື ສູນເສຍຄວາມເຊື່ອໝັ້ນຂອງຜູ້ຊົມໃຊ້ ຫຼື ການແນະນໍາການເດີນທາງ<br>• ຄວາມອາດສາມາດໃນການກວດ PCR ທີ່ຕໍ່າຈະຈໍາກັດນັກທ່ອງທ່ຽວຈໍານວນຫຼາຍ ແລະ ສິ່ງຜົນເຖິງການແຍກປ່ຽວທີ່ໃຊ້ເວລາດົນ<br>• ລະບຽບການທີ່ຫຼາຍເກີນໄປ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການດຶງດູດນັກທ່ອງທ່ຽວ<br>• ທົວລາຄາແພງ (ການກວດ, ຖ້ຽວບິນ, ຄ່າໃຊ້ຈ່າຍຕື່ມ COVID) ເຮັດໃຫ້ບໍ່ມີຄວາມດຶງດູດ ເມື່ອທຽບກັບຈຸດໝາຍອື່ນໆ (ສີລັງກາ, ເນປານ ແລະ ອື່ນໆ) |

## 2 ແຜນປະຕິບັດງານສຳລັບເຂດທ່ອງທ່ຽວສີຂຽວຂອງລາວ ສຳລັບການທ່ອງທ່ຽວທີ່ປອດໄພຈາກພະຍາດ COVID-19



## 2.1 ເງື່ອນໄຂການເຂົ້າເຂດທ່ອງທ່ຽວສີຂຽວຂອງລາວ

- ✓ ຢ່າງໜ້ອຍ 70[16]-80%[17] ຂອງພົນລະເມືອງທີ່ມີເງື່ອນໄຂ[18] ໃນເຂດແມ່ນໄດ້ຮັບການສັກວັກຊີນ (ລວມທັງ 80-90%[19] ຂອງຜູ້ສູງອາຍຸ ຫຼື ພົນລະເມືອງທີ່ມີຄວາມສ່ຽງໃຫ້ໄດ້ຮັບວັກຊີນ[20]).
- ✓ 90-95% ຂອງພະນັກງານໃຫ້ບໍລິການຢູ່ທີ່ພັກ, ຮ້ານອາຫານ ແລະ ແຫຼ່ງທ່ອງທ່ຽວໃຫ້ໄດ້ຮັບການສັກວັກຊີນ.
- ✓ 100% ຂອງພະນັກງານນໍາທ່ຽວໄດ້ຮັບການສັກວັກຊີນ.
- ✓ ນັກທ່ອງທ່ຽວທີ່ເຂົ້າມາໃນເຂດທ່ອງທ່ຽວສີຂຽວ, ທັງພາຍໃນ ແລະ ຕ່າງປະເທດ, ຕ້ອງໄດ້ຮັບການສັກວັກຊີນຄົບຢ່າງໜ້ອຍ 14 ວັນກ່ອນການເດີນທາງ.
- ✓ ທຸລະກິດທີ່ຕ້ອນຮັບນັກທ່ອງທ່ຽວຕ້ອງປະຕິບັດຕາມລະບຽບການ ຂອງຄະນະສະເພາະກິດ COVID-19 ແລະ ໄດ້ຮັບການຮັບຮອງຈາກ *LaoSafe*.
- ✓ ນັກທ່ອງທ່ຽວສາກົນອາດມາທາງອາກາດເທົ່ານັ້ນ ແລະ ສະໜາມບິນຕ້ອງຈັດຕັ້ງປະຕິບັດມາດຕະການປ້ອງກັນພະຍາດ COVID-19 ເພື່ອຄວາມປອດໄພ ແລະ ການກັ່ນຕອງສຸຂະພາບ.
- ✓ ຄວາມສາມາດໃນການກວດ PCR ພຽງພໍສໍາລັບນັກທ່ອງທ່ຽວສາກົນ ເມື່ອເວລາມາຮອດ ແລະ ສາມາດສະໜອງຜົນກວດພາຍໃນ 24 ຊົ່ວໂມງ.
- ✓ ການແຍກປ່ຽວດ້ວຍຕົນເອງໃນໂຮງແຮມ 24 ຊົ່ວໂມງ ເພື່ອຜົນກວດສໍາລັບຜູ້ເດີນທາງຂາເຂົ້າສາກົນ.
- ✓ ລັດຫັດ QR ສໍາລັບການຕິດຕາມຂໍ້ມູນຕິດຕໍ່ ຂອງທຸລະກິດການທ່ອງທ່ຽວ ແລະ ຕິດຕາມຂໍ້ມູນທີ່ເກັບກໍາຜ່ານການລົງທະບຽນໂຮງແຮມ, ແຜນການເດີນທາງ, ແລະ ໄກ່ນໍາທ່ຽວ.
- ✓ <u>ຄວາມປອດໄພ</u>: ກໍານົດໃຫ້ມີການກວດ ບັດຜ່ານເຂດທ່ອງທ່ຽວສີຂຽວ ບ (ສໍາລັບນັກທ່ອງທ່ຽວສາກົນ) ຫຼື ບັດການສັກວັກຊີນ (ສໍາລັບນັກທ່ອງທ່ຽວພາຍໃນ) ຂອງການເຂົ້າ ຫຼື ອອກ ຈາກເຂດທ່ອງທ່ຽວສີຂຽວ ຢູ່ຈຸດກວດຕໍາຫຼວດຢູ່ຊາຍແດນເຂດທ່ອງທ່ຽວສີຂຽວ.

| |
|---|
| ກໍານົດ<u>**ໃຫ້ນັກທ່ອງທ່ຽວພາຍໃນ**</u> ສະແດງຫຼັກຖານການສັກວັກຊີນ ເພື່ອເຂົ້າເຂດທ່ອງທ່ຽວສີຂຽວ ແລະ ພັກເຊົາ, ຫິນ ແລະ ຢ້ຽມຢາມທຸລະກິດທີ່ໄດ້ຮັບການຮັບຮອງຈາກ *LaoSafe*. |

## 2.2 ເງື່ອນໄຂການເຂົ້າ ເສັ້ນທາງທ່ອງທ່ຽວລາວສີຂຽວ (ທ່ອງທ່ຽວນອກເຂດທ່ອງທ່ຽວສີຂຽວ)

- ✓ ນັກທ່ອງທ່ຽວສາມາດເດີນທາງອອກນອກເຂດທ່ອງທ່ຽວສີຂຽວ ແຕ່ຕ້ອງໄດ້ພັກເຊົາຢູ່ ລີສອດ ແລະ ແຫຼ່ງທ່ອງທ່ຽວ *LaoSafe* ໂດຍນໍາໃຊ້ພາຫະນະຂອງ *LaoSafe* ເທົ່ານັ້ນ. ທີ່ພັກຄວນຄວນບໍລິການຄົບຊຸດ ເພື່ອໃຫ້ນັກທ່ອງທ່ຽວສາມາດກິນ ແລະ ເຂົ້າຮ່ວມກິດຈະກໍາທີ່ໂຮງແຮມ ຫຼື ລີສອດ ເທົ່ານັ້ນ. ນັກທ່ອງທ່ຽວຕ້ອງສະແດງເອກະສານການຈອງ ທີ່ຈຸດກວດ.

---

[16] ສະຫະພາບເອີຣົບ ມີເປົ້າໝາຍແມ່ນ 70% ຂອງພົນລະເມືອງທີ່ເປັນຜູ້ໃຫຍ່, ທີ່ບັນລຸໃນເດືອນສິງຫາ 2021. https://ec.europa.eu/commission/presscorner/detail/en/ip_21_4362

[17] ເປົ້າໝາຍຂອງ ສປປ ລາວ ໃຫ້ 50% ຂອງພົນລະເມືອງທັງໝົດ ຊຶ່ງທຽບເທົ່າກັບ 80% ຂອງພົນລະເມືອງທີ່ມີເງື່ອນໄຂສໍາລັບການສັກວັກຊີນ. https://www.unicef.org/laos/press-releases/new-shipment-covid-19-vaccines-covax-facility-arrive-lao-pdr

[18] ປະຈຸບັນ, ພົນລະເມືອງທີ່ມີເງື່ອນໄຂສໍາລັບການສັກວັກຊີນໃນ ສປປ ລາວ ລວມທັງ ຜູ້ທີ່ມີອາຍຸ 18 ປີ ແລະ ຫຼາຍກວ່າ, ແຕ່ອາດຈະມີການປ່ຽນແປງຖ້າເງື່ອນໄຂຂອງການຮັບວັກຊີນຈະລວມເອົາພົນລະເມືອງທີ່ອາຍຸນ້ອຍກວ່ານີ້. ຕົວຢ່າງໃນ US, ທີ່ປະຈຸບັນອະນຸຍາດໃຫ້ເດັກອາຍຸ 12 ປີ ແລະ ຫຼາຍກວ່າສາມາດຮັບວັກຊີນ. https://covid.cdc.gov/covid-data-tracker/#covidnet-hospitalizations-vaccination

[19] ມາວດີບກໍານົດໃຫ້ 90% ຂອງພົນລະເມືອງສູງອາຍຸໄດ້ສັກວັກຊີນ: https://immigration.gov.mv/tourists-staying-at-inhabited-islands/

[20] ພົນລະເມືອງທີ່ມີຄວາມສ່ຽງ (ຜູ້ສູງອາຍຸ, ນັກໂທດ, ຄົນຢູ່ຊົນນະບົດ) ອັດຕາການສັກວັກຊີນຄວນສູງກວ່າຈໍານວນທັງໝົດ. https://theconversation.com/opening-up-when-80-of-eligible-adults-are-vaccinated-wont-be-safe-for-all-australians-166818

- ✓ ຄົນຂັບລົດທີ່ສະໜອງການໂດຍສານຢູ່ເສັ້ນທາງສີຂຽວ ຕ້ອງໄດ້ຮັບການຮັບຮອງຈາກ *LaoSafe* ແລະ ໄດ້ຮັບການສັກວັກຊີນແລ້ວ ແລະ ຕ້ອງໄດ້ສະແດງເອກະສານ ທີ່ຈຸດກວດ.
- ✓ ທຸລະກິດທີ່ໄດ້ຮັບອະນຸມັດສໍາລັບເສັ້ນທາງສີຂຽວ ອາດບໍ່ຮັບນັກທ່ອງທ່ຽວພາຍໃນທີ່ຍັງບໍ່ທັນໄດ້ສັກວັກຊີນ.
- ✓ ນັກທ່ອງທ່ຽວອາດບໍ່ໄດ້ພັກຢູ່ບ້ານ, ໂຮງແຮມ, ຮ້ານອາຫານ ຫຼື ແຫຼ່ງທ່ອງທ່ຽວ ທີ່ຢູ່ນອກເຂດສີຂຽວ ແລະ ບໍ່ໄດ້ຮັບການຮັບຮອງຈາກ *LaoSafe*.
- ✓ ກິດຈະກໍາທີ່ຖືກຮັບຮອງຈາກ *LaoSafe* ຢູ່ນອກເຂດທ່ອງທ່ຽວສີຂຽວ ແມ່ນອະນຸຍາດ ແຕ່ຕ້ອງມີການນໍາພາຂອງພະນັກງານນໍາທ່ຽວທີ່ໄດ້ສັກວັກຊີນແລ້ວ
- ✓ <u>ຄວາມປອດໄພ</u>: ກໍານົດໃຫ້ມີການກວດ ບັດຜ່ານເຂດທ່ອງທ່ຽວສີຂຽວ (ນັກທ່ອງທ່ຽວສາກົນ) ຫຼື ບັດການສັກວັກຊີນ (ສໍາລັບນັກທ່ອງທ່ຽວພາຍໃນ) ຂອງການເຂົ້າ ຫຼື ອອກ ເຂດທ່ອງທ່ຽວສີຂຽວ ຢູ່ຈຸດກວດຕໍາຫຼວດຢູ່ຊາຍແດນເຂດທ່ອງທ່ຽວສີຂຽວ.

| |
|---|
| **<u>ຫລັງຈາກ 10 ວັນ</u>**[21] ນັກອທ່ອງທ່ຽວສາມາດອອກຈາກເຂດທ່ອງທ່ຽວສີຂຽວ ແລະ ເສັ້ນທາງສີຂຽວ ຖ້າຫາກຜົນກວດອອກ ມາເປັນລົບ. ແຕ່ເຖິງຢ່າງໃດກໍຕາມ, ເນະນໍາໃຫ້ສືບຕໍ່ນໍາໃຊ້ ທຸລະກິດທີ່ ຖືກຮັບຮອງໂດຍ *LaoSafe* ແລະ ຕ້ອງສືບຕໍ່ປະຕິບັດຕາມຄໍາແນະນໍາຂອງເຂດທ່ອງທ່ຽວສີຂຽວ ແລະ ເສັ້ນທາງການທ່ອງທ່ຽວສີຂຽວ |

## 2.3 ຂັ້ນຕອນສໍາລັບການສະໝັກ & ການມາຮອດເຂດທ່ອງທ່ຽວສີຂຽວ

*ຂໍ້ກໍານົດເຫຼົ່ານີ້ ແມ່ນສອດຄ່ອງກັບ ບົດແນະນໍາສາກົນຂອງ UNWTO ໃນການເລີ່ມການທ່ອງທ່ຽວ*[22].

**ກ່ອນເດີນທາງ**

- ການລົງທະບຽນອອນລາຍສໍາລັບບັດຜ່ານເຂດທ່ອງທ່ຽວສີຂຽວ www.laoevisa.gov.la/greenzone
  - o ຕ້ອງລົງທະບຽນ 7-30 ວັນ ກ່ອນການອອກເດີນທາງ
  - o ອັບໂຫຼດຫຼັກຖານຂອງການສັກວັກຊີນ, ການຈອງໂຮງແຮມ ແລະ ລາຍການເດີນທາງ ສໍາລັບການເດີນທາງທັງໝົດໃນແບບຟອມລົງທະບຽນ.
  - o ການອະນຸມັດຈະຖືກສົ່ງໃຫ້ພາຍໃນ 48 ຊົ່ວໂມງ ຖ້າເອກະສານທັງໝົດໄດ້ຮັບການສົ່ງທີ່ຖືກຕ້ອງ.
- ພິມບັດຜ່ານເຂດທ່ອງທ່ຽວສີຂຽວ ກັບລະຫັດ barcode ເພື່ອສະແດງຢູ່ບ່ອນແຈ້ງປີ້ເດີນທາງອອກ ແລະ ເມື່ອເດີນທາງຮອດ.
- ລາຍງານການກວດພະຍາດ COVID-19 PCR – 72 ຊົ່ວໂມງ ຫຼື ໜ້ອຍກວ່ານັ້ນ ກ່ອນການເດີນທາງ.
- ໃບຢັ້ງຢືນການສັກວັກຊີນ ເປັນພາສາອັງກິດ ຢ່າງໜ້ອຍ 14 ວັນ ກ່ອນການອອກເດີນທາງ ແລະ ບໍ່ຫຼາຍກວ່າໜຶ່ງປີ (ຖ້າຫຼາຍກວ່າໜຶ່ງປີ, ຕ້ອງໄດ້ສັກວັກຊີນກະຕຸ້ນຕື່ມ)
- ກະກຽມ $65 ສໍາລັບການກວດ PCR ເມື່ອມາຮອດ ຫຼື ຈ່າຍລ່ວງໜ້າສໍາລັບການກວດ ກັບຫ້ອງທົດລອງທີ່ໄດ້ຮັບອະນຸຍາດ (www.tourismlaos.org/greenzone)
- ຊື້ປະກັນໄພຈາກບໍລິສັດທີ່ໄດ້ຮັບການອະນຸມັດ ຫຼື ກະກຽມສໍາເນົາການປະກັນໄພທີ່ມີຢູ່ແລ້ວ.
- ເດັກນ້ອຍອາຍຸ: 5-18 ປີ – ບໍ່ໄດ້ກໍານົດໃຫ້ສັກວັກຊີນ, ແຕ່ກໍານົດໃຫ້ກວດ. ຕໍ່າກວ່າ 5 ປີ – ບໍ່ໄດ້ກໍານົດໃຫ້ສັກວັກຊີນ, ບໍ່ໄດ້ກໍານົດໃຫ້ກວດ

**ເດີນທາງມາຮອດລາວ (ທາງເລືອກທີ *1: ການກວດເມື່ອເວລາມາດຮອດ*[23])**

---

[21] https://www.cdc.gov/coronavirus/2019-ncov/hcp/duration-isolation.html

[22] https://webunwto.s3.eu-west-1.amazonaws.com/s3fs-public/2020-05/UNWTO-Global-Guidelines-to-Restart-Tourism.pdf

[23] ທາງເລືອກທີ 2: ການກວດເມື່ອສະແດງອາການເທົ່ານັ້ນ ຫຼັງຈາກໃນປະເທດມີອັດຕາການສັກວັກຊີນ 80%.

- ການກັ່ນຕອງດ້ານສຸຂະພາບ ແລະ ການກວດ PCR ຢູ່ສະໜາມບິນ (ອີກທາງເລືອກ: ການກວດໄວ ແອນຕິເຈັ້ນ ແລະ ບໍ່ກຳນົດໃຫ້ມີການແຍກປ່ຽວ ).
- ສະແດງບັດຜ່ານເຂົ້າເຂດທ່ອງທ່ຽວສີຂຽວ ພ້ອມດ້ວຍຫຼັກຖານການສັກວັກຊີນ (ມີການແປພາສາອັງກິດ) ແລະ ລາຍງານການຜົນການກວດ COVID ເປັນລົບ ຢູ່ກວດຄົນເຂົ້າເມືອງ
- ຊື້ປະກັນໄພຈາກບໍລິສັດຢູ່ສະໜາມບິນ ຫຼື ສະແດງສຳເນົາການປະກັນໄພ.
- ດາວໂຫຼດ ແລະ ເລີ່ມນຳໃຊ້ app ຕິດຕາມຂໍ້ມູນຕິດຕໍ່ (ຫຼື ການນຳໃຊ້ Google Timeline) ສຳລັບການຕິດຕາມ ແລະ ອັບເດດ.
- ສົ່ງໄປໂຮງແຮມທີ່ຖືກຮັບຮອງໂດຍ *LaoSafe* ດ້ວຍ ພາຫະນະຂົນສົ່ງ *LaoSafe* (ຈອງລ່ວງໜ້າ ຫຼື ທີ່ເຄົາເຕີລົດແທັກຊີ)
- ການແຍກປ່ຽວດ້ວຍຕົນເອງ ຢູ່ໂຮງແຮມ ສຳລັບຜົນການກວດ PCR ພາຍໃນ 24 ຊົ່ວໂມງ
- ຖ້າກວດພົບວ່າ ເປັນລົບ ຫຼັງຈາກ 24 ຊົ່ວໂມງ, ນັກທ່ອງທ່ຽວແມ່ນມີອິດສະຫຼະໃນການສຳຫຼວດເຂດທ່ອງທ່ຽວສີຂຽວ.
- ຖ້າກວດພົບວ່າເປັນບວກ ນັກທ່ອງທ່ຽວທີ່ບໍ່ມີອາການ, ສືບຕໍ່ແຍກປ່ຽວ 3 ວັນ ໃນໂຮງແຮມ (ຖ້າໂຮງແຮມອະນຸຍາດ) ຫຼື ສົ່ງໄປໂຮງແຮມທີ່ແຍກປ່ຽວໃດໜຶ່ງ. ນັກທ່ອງທ່ຽວຈະກວດພາຍຫຼັງ 3 ວັນ ໂດຍທີ່ພວກເຂົາຮັບຜິດຊອບຄ່າໃຊ້ຈ່າຍເອງ. ຖ້າກວດພົບວ່າເປັນລົບ ແລະ ບໍ່ມີອາການ, ພວກເຂົາຈະມີອິດສະຫຼະໃນການສຳຫຼວດເຂດທ່ອງທ່ຽວສີຂຽວ.
- ຖ້າກວດພົບວ່າເປັນບວກ, ສະແດງອາການ ແລະ ມີປັດໃຈສ່ຽງສູງ[24], ສົ່ງໄປຢູ່ບ່ອນອຳນວຍຄວາມສະດວກທີ່ແຍກປ່ຽວ ຫຼື ໂຮງໝໍທີ່ໄດ້ຮັບການມອບໝາຍສຳລັບການກັກຕົວ ແລະ ການປິ່ນປົວ ຂຶ້ນກັບຄວາມຮຸນແຮງ.[25] ການສົ່ງເງິນຄືນຈະໃຫ້ສຳລັບຄ່າໃຊ້ຈ່າຍທີ່ຍັງເຫຼືອຂອງການເດີນທາງ ໂດຍຫັກຄ່າບໍລິການ ການຍົກເລີກອອກ (ສູງສຸດ 25%).

**<u>ການປະກັນໄພ</u>:** ຄວນມີການປະກັນໄພທ່ອງທ່ຽວ $30-50 ສຳລັບ 30 ວັນ ທີ່ມີວົງເງິນປົກປ້ອງ USD20,000 ໂດລາສະຫະລັດ ທີ່ສາມາດຊື້ໄດ້ຢູ່ສະໜາມບິນ ແລະ ທາງອອນລາຍ ຈາກບໍລິສັດທີ່ໄດ້ຮັບການຮັບຮອງແລ້ວ. ເບິ່ງເອກະສານຊ້ອນທ້າຍສຳລັບລາຍລະອຽດ.

## 2.4 ບັນດາສັນຊາດທີ່ໄດ້ຮັບອະນຸຍາດໃນເຂດທ່ອງທ່ຽວສີຂຽວ

- 10 ຕະຫຼາດຫລັກຕົ້ນຕໍ, ລວມທັງ ສັນຊາດ EU ແລະ ອາຊຽນ+3, ຜູ້ທີ່ໄດ້ຮັບການສັກວັກຊີນແລ້ວ ແລະ ສາມາດສະໜອງເອກະສານທີ່ຮຽກຮ້ອງ ຄວນອະນຸຍາດໃຫ້ເຂົ້າເຂດທ່ອງທ່ຽວສີຂຽວ.
- ບັນດາປະເທດໃນພາກພື້ນ ທີ່ມີອັດຕາການສັກວັກຊີນ ຕໍ່າກວ່າ 60% (ປະຈຸບັນ ມຽນມ້າ, ໄທ ແລະ ຫວຽດນາມ)
- ປະເທດທີ່ຍັງບໍ່ອະນຸມັດໃຫ້ການເອົາວີຊາກັບທີ່ ບໍ່ຄວນໃຫ້ອະນຸຍາດ ຈົນກວ່າຈະມີການເປີດປະເທດແບບເຕັມສ່ວນ (ເມື່ອຮອດ 80% ຂອງພົນລະເມືອງທີ່ມີເງື່ອນໄຂໄດ້ສັກວັກຊີນ - ພາກທີ 3).

## 2.5 ພາຍໃນເຂດທ່ອງທ່ຽວສີຂຽວ

- ພັກເຊົາ, ກິນ ແລະ ເດີນທາງ ກັບທຸລະກິດທີ່ໄດ້ຮັບຮອງໂດຍ *LaoSafe* ເທົ່ານັ້ນ. (ຊອກລາຍການຂອງທຸລະກິດທີ່ https://laoevisa.gov.la/greenzone ຫຼື https://www.tourismlaos.org/greenzone.
- ສະແກນລະຫັດ QR ທີ່ສະຖານທີ່ ແລະ ຈຸດໝາຍ ສຳລັບການຕິດຕາມຂໍ້ມູນຕິດຕໍ່. ເປີດ Google Timeline ຫຼື app ຕິດຕາມຂໍ້ມູນຕິດຕໍ່ທີ່ໄດ້ຮັບການອະນຸມັດແລ້ວ.

---

[24] ຕ້ອງການການປິ່ນປົວທາງດ້ານອີກຊີ, ອາຍຸ>60 ຫຼື ພະຍາດຫົວໃຈ ແລະ ຫຼອດເລືອດ, ເບົາຫວານ, ພະຍາດປອດ ຫຼື ໄຕຊໍາເຮື້ອ, ມະເຮັງ, ໂລກປະຈຳຕົວຮ້າຍແຮງອື່ນໆ, ຖືພາ

[25] ກັກຕົວ 14 ວັນ ແລະ 3 ວັນ ພາຍຫຼັງທີ່ສະແດງອາການຄັ້ງຫຼ້າສຸດ.

- ໃສ່ໜ້າກາກ ເມື່ອເວລາຢູ່ນອກ ຫຼື ເວລາໃກ້ຊິດກັບຜູ້ອື່ນ. ມ່ວນຊື່ນກັບກິດຈະກຳຢູ່ນອກໄດ້ຢ່າງປົກກະຕິ.
- ວັດແທກອຸນຫະພູມ ແລະ ລ້າງມື ກ່ອນການເຂົ້າຮ້ານອາຫານ, ໂຮງແຮມ ແລະ ສະຖານທີ່ຕ່າງໆ. ລ້າງມືເປັນປະຈຳ.
- ຮັກສາໄລຍະຫ່າງທາງສັງຄົມ 2 ແມັດ (2 ວົງແຂນ) ຈາກຜູ້ທີ່ບໍ່ໄດ້ເດີນທາງນຳກັນ.
- ບໍ່ໃຫ້ກາຍ 10 ຄົນ ໃນຮົ່ມ ໃນແຕ່ລະຄັ້ງ.
- ຖືຫຼັກຖານຂອງການສັກວັກຊີນ ເພື່ອສະແດງເມື່ອຖືກຖາມ.
- ຖ້າທ່ານມີອາການ, ແຍກປ່ຽວດ້ວຍຕົນເອງໃນໂຮງແຮມຂອງທ່ານ, ກວດພະຍາດ ແລະ ຕິດຕໍ່ອົງການສາທາລະນະສຸກ.

# ຂັ້ນຕອນການເຂົ້າ ເຂດທ່ອງທ່ຽວສີຂຽວຂອງ ສປປ ລາວ

## ໃບສະໝັກ

ອອນລາຍ ຫຼື ຢູ່ສະຖານທູດ

**ອີວີຊາ**
ການສະໝັກ ອີວີຊາ & ບັດຜ່ານເຂດທ່ອງທ່ຽວສີຂຽວ

**ສະຖານທູດ ຫຼື ກົງສູນ**
ການສະໝັກ ວີຊາ & ບັດຜ່ານເຂດທ່ອງທ່ຽວສີຂຽວ

**ວີຊາກັບທີ່**
ການສະໝັກບັດຜ່ານເຂດທ່ອງທ່ຽວສີຂຽວເທົ່ານັ້ນ

## ກ່ອນເດີນທາງ

ເຊັກອິນ

- ບັດຜ່ານເຂດທ່ອງທ່ຽວສີຂຽວ
- ຫຼັກຖານການສັກວັກຊີນ
- ຜົນກວດ PCR ເປັນລົບ

## ເວລາມາຮອດ

### ການກວດສຸຂະພາບເວລເຂົ້າມາປະເທດ

ການກວດສຸຂະພາບ ແລະ ກວດ PCR ເວລາມາຮອດ ສປປ ລາວ $65 (ເງິນສົດ ຫຼື ຈ່າຍລ່ວງໜ້າແບບອອນລາຍ)

### ກວດຄົນເຂົ້າເມືອງ

- ບັດຜ່ານເຂດທ່ອງທ່ຽວສີຂຽວ
- ຫຼັກຖານການສັກວັກຊີນ
- ຜົນກວດ PCR ເປັນລົບ
- ຮັບຜົນກວດ PCR ເມື່ອມາຮອດ
- ຫຼັກຖານການປະກັນໄພ
- ວີຊາ, ອີວີຊາ ຈ່າຍຄ່າວີຊາເມື່ອມາຮອດ

### ປະກັນໄພ

ຈ່າຍຄ່າປະກັນໄພ (ຖ້າບໍ່ມີຫຼັກຖານຂອງການປະກັນໄພ) $30-$50 ສໍາລັບ 30 ວັນ/ວົງເງິນຄຸ້ມຄອງ USD20,000

### ການກວດສອບໜັງສືຜ່ານແດນ

ເຂົ້າໃນເຂດທ່ອງທ່ຽວສີຂຽວ

*ໄປເອົາກະເປົາເດີນທາງ*

*ຄົນຂັບລົດ LaoSafe ໄປສົ່ງ*

## 2.6 ຂັ້ນຕອນສຸກເສີນ

**<u>ໂທຫາສາຍດ່ວນ (166 ຫຼື 165) ທີ່ໃຫ້ການຊ່ວຍເຫຼືອໃນເວລາມີກໍລະນີສົງໄສ.</u>**

| ສະຖານະການສຸກເສີນ | ຄວາມສ່ຽງ | ການປະຕິບັດ |
|---|---|---|
| ນັກທ່ອງທ່ຽວຜົນກວດເປັນບວກ | ແຜ່ເຊື້ອຢູ່ໂຮງແຮມ ແລະ ພະນັກງານລົດໂດຍສານ ແລະ ນັກທ່ອງທ່ຽວຜູ້ອື່ນ | ✓ ປະຕິບັດຕາມລະບຽບຄະນະສະເພາະກິດ COVID-19<br>✓ ແຍກປ່ຽວໃນໂຮງແຮມທີ່ໄດ້ຮັບການອະນຸຍາດ ຫຼື ສົ່ງໄປໂຮງໝໍ ອີງຕາມອາການ ແລະ ກຸ່ມສ່ຽງ<br>✓ ການຕິດຕາມຂໍ້ມູນຕິດຕໍ່<br>✓ ແຈ້ງແຂກທ່ານອື່ນໆ<br>✓ ກວດ ແລະ ແຍກຜູ້ອື່ນ ຖ້າເຫັນວ່າຈຳເປັນ<br>✓ ໃຫ້ຂໍ້ມູນແກ່ນັກທ່ອງທ່ຽວກ່ຽວກັບສະຖານະ ແລະ ບາດກ້າວຕໍ່ໄປຢ່າງເປັນປົກກະຕິ |
| ພະນັກງານ, ຄົນຂັບລົດ, ຜູ້ນຳທ່ຽວ ຫຼື ພະນັກງານບໍລິການ ຜົນກວດເປັນບວກ | ແຜ່ເຊື້ອໃຫ້ພະນັກງານອື່ນ ແລະ ນັກທ່ອງທ່ຽວ | ✓ ປະຕິບັດຕາມລະບຽບຄະນະສະເພາະກິດ COVID-19<br>✓ ແຍກປ່ຽວໃນໂຮງແຮມທີ່ໄດ້ຮັບການອະນຸຍາດ ຫຼື ສົ່ງໄປໂຮງໝໍ ອີງຕາມອາການ ແລະ ກຸ່ມສ່ຽງ<br>✓ ການຕິດຕາມຂໍ້ມູນຕິດຕໍ່<br>✓ ແຈ້ງແຂກທ່ານອື່ນໆ<br>✓ ກວດ ແລະ ແຍກຜູ້ອື່ນ ຖ້າເຫັນວ່າຈຳເປັນ<br>✓ ປິດສະຖານທີ່ ຖ້າກໍລະນີການແຜ່ເຊື້ອມີສູງ ອີງຕາມລະບຽບຂອງ ກຊ ສທ |

## 2.7 ບູລິມະສິດເຂດທ່ອງທ່ຽວສີຂຽວ & ຈຸດໝາຍປາຍທາງ ເສັ້ນທາງສີຂຽວ

| ລະດັບບູລິມະສິດ | ເຂດສີຂຽວ & ເສັ້ນທາງສີຂຽວ |
|---|---|
| **ບູລິມະສິດທີ 1**<br>*ເປົ້າໝາຍການເປີດໃນເດືອນ 2022*<br><br>*ກຳນົດການສັກວັກຊີນໃຫ້ພົນລະເມືອງທີ່ມີເງື່ອນໄຂ 70-80% ໃນເຂດທ່ອງທ່ຽວສີຂຽວ*<br><br>*90-95% ຂອງພະນັກງານໄດ້ຮັບການສັກວັກຊີນ ໃນເຂດສີຂຽວ & ລີສອດ ແລະ ແຫຼ່ງທ່ອງທ່ຽວ ຢູ່ເສັ້ນທາງສີຂຽວ ທີ່ໄດ້ຮັບການອະນຸມັດ*<br><br>*ການເຂົ້າມາທາງອາກາດ, ທາງລົດໄຟ ຫລື ທາງ ຂົວມິດຕະພາບ ແມ່ນສຳລັບນັກທ່ອງທ່ຽວ ທີ່ໄດ້ຮັບການສັກວັກຊີນແລ້ວ ແລະ ຜົນກວດ PCR ເປັນລົບ ກ່ອນການອອກເດີນທາງ ແລະ ການມາຮອດ* | **<u>ເຂດທ່ອງທ່ຽວສີຂຽວວຽງຈັນ</u>**<br>*ເດີນທາງເຂົ້າມາຜ່ານສະໜາມບິນສາກົນເທົ່ານັ້ນ*<br>• ວັງວຽງ (ໂດຍທາງລົດໄຟ ຫລື ທາງດ່ວນ)<br>• ນະຄອນຫຼວງວຽງຈັນ (ໂດຍທາງລົດໄຟ ຫລື ຂົວມິດຕະພາບ)<br><br>*<u>ເສັ້ນທາງສີຂຽວພາກກາງ</u>*<br>• ລີສອດ & ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການອະນຸມັດຢູ່ຄຳມ່ວນ<br>*<u>ເສັ້ນທາງສີຂຽວ ພາກໄຕ້</u>*<br>• ລີສອດ & ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການອະນຸມັດຢູ່ເມືອງປາກຊ່ອງ<br>• ລີສອດ, ແຫຼ່ງທ່ອງທ່ຽວ ແລະ ເຮືອສຳລານ ທີ່ໄດ້ຮັບການອະນຸມັດຢູ່ເມືອງຈຳປາສັກ<br><br>**<u>ເຂດທ່ອງທ່ຽວສີຂຽວຫຼວງພະບາງ (ອີງຕາມຄວາມພ້ອມ ແລະ ຄວາມສາມາດໃນການກວດເຊື້ອພະຍາດ)</u>**<br>*ເດີນທາງເຂົ້າມາຜ່ານສະໜາມບິນສາກົນ ຫລື ລົດໄຟ*<br>• ເມືອງຫຼວງພະບາງ (ທາງເຮືອບິນ ຫລື ລົດໄຟ)<br>• ເມືອງຈອມເພັດ<br><br>*<u>ເສັ້ນທາງສີຂຽວ ພາກເໜືອ</u>*<br>• ລີສອດ & ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການອະນຸມັດຢູ່ໜອງຂຽວ<br>• ລີສອດ & ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການອະນຸມັດຢູ່ໄຊຍະບູລີ<br>• ລີສອດ & ເຮືອສຳລານ ທີ່ໄດ້ຮັບການອະນຸມັດຢູ່ປາກແບງ<br>• ລີສອດ & ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການອະນຸມັດຢູ່ຊຽງຂວາງ |
| **ບູລິມະສິດທີ 2**<br>*ເປົ້າໝາຍການເປີດໃນເດືອນ ເມສາ 2022*<br><br>*ກຳນົດການສັກວັກຊີນໃຫ້ພົນລະເມືອງທີ່ມີເງື່ອນໄຂ 70-80%*<br><br>*90-95% ຂອງພັກນັກງານໄດ້ຮັບການສັກວັກຊີນ ໃນເຂດສີຂຽວ* | <u>ພາກເໜືອຂອງລາວ</u><br>• ເຂດສີຂຽວ & ເສັ້ນທາງທ່ອງທ່ຽວສີຂຽວ ເມືອງບໍ່ເຕັນ & ຫຼວງນ້ຳທາ (ເດີນທາງມາດ້ວຍລົດໄຟ)<br>• ເຂດສີຂຽວ & ເສັ້ນທາງທ່ອງທ່ຽວສີຂຽວ ເມືອງອຸດົມໄຊ (ທາງລົດໄຟ, ຖະໜົນ, ອາກາດ)<br>• ເຂດສີຂຽວ & ເສັ້ນທາງທ່ອງທ່ຽວສີຂຽວ ຫ້ວຍຊາຍ (ເປີດຊາຍແດນທາງບົກ)<br>•<br><br><u>ພາກກາງ & ພາກໃຕ້ຂອງລາວ</u><br>• ເຂດສີຂຽດ & ເສັ້ນທາງທ່ອງທ່ຽວສີຂຽວ ທ່າແຂກ (ເປີດຊາຍແດນທາງບົກກັບໄທ ແລະ ຫວຽດນາມ) |

| | |
|---|---|
| *ການເຂົ້າມາທາງດ່ານ ທີ່ຈຸດກວດການເຂົ້າເມືອງ ສຳລັບນັກທ່ອງທ່ຽວທີ່ໄດ້ຮັບການສັກວັກຊີນຄົບແລ້ວ ແລະ ພົບກວດ Rapid ຖ້າມີອາການ* | • ເຂດສີຂຽວ & ເສັ້ນທາງທ່ອງທ່ຽວສີຂຽວ ເມືອງສະຫວັນນະເຂດ (ເປີດຊາຍແດນທາງບົກ ກັບໄທ ແລະ ຫວຽດນາມ)<br>• ເຂດທ່ອງທ່ຽວສີຂຽວ ແຂວງຈຳປາສັກ (ເປີດຊາຍແດນທາງບົກ ກັບໄທ) & ເສັ້ນທາງສີຂຽວ ພາກໃຕ້ຂອງລາວ ເພີ່ມລີສອດ & ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການອະນຸມັດຢູ່ສາລະວັນ |
| **ບູລິມະສິດທີ 3**<br>*ເປົ້າໝາຍການເປີດໃນເດືອນກໍລະກົດ 2022 ຫຼື ກ່ອນໜ້ານັ້ນຖ້າເປັນໄປໄດ້* | ແຂວງ ແລະ ເມືອງ ອື່ນໆ<br>*ກໍານົດການສັກວັກຊີນໃຫ້ພົນລະເມືອງທີ່ມີເງື່ອນໄຂ 70-80%*<br>*ການເຂົ້າທາງຊາຍແດນສໍາລັບນັກທ່ອງທ່ຽວທີ່ໄດ້ສັກວັກຊີນຄົບແລ້ວ (ກວດຖ້າມີອາການ)* |

## 2.8 ຄາດຄະເນການມາຂອງນັກທ່ອງທ່ຽວ & ລາຍຮັບ

ຄາດຄະເນວ່າ ຈະມີນັກທ່ອງທ່ຽວເຂົ້າມາປະມານ 30,415 ໃນລະຫວ່າງ 3 ເດືອນທຳອິດ ຂອງໄລຍະທີ່1 ທີ່ເປີດເຂດທ່ອງທ່ຽວສີຂຽວ,ປະມານ 1% ຂອງຕົວເລກນັກທ່ອງທ່ຽວປີ 2019 ຫລື 5% ຂອງປີ ຈຳນວນນັກທ່ອງທ່ຽວສາກົນປີ 2019. ຄາດວ່ານັກທ່ອງທ່ຽວ ຈະໃຊ້ຈ່າຍຫລາຍກວ່າ ປີ 2019 ໂດຍສະເລ່ຍ ເພາະຈະບໍ່ມີນັກທ່ອງທ່ຽວເປ້ຖົງເຂົ້າມາ.

***ຕາຕະລາງ 3: ຄາດຄະເນການມາຂອງນັກທ່ອງທ່ຽວ & ລາຍຮັບ: ບູລິມະສິດ 1 ການເປີດ/ມັງກອນ-ມີນາ '22***

| ໄລຍະ | ເດືອນ | ເຂດທ່ອງທ່ຽວສີຂຽວ | | | | | | | | | | | ຜົນປະໂຫຍດທາງເສດຖະກິດພາຍໃນ | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ວຽງຈັນ | | | | | | ຫລວງພະບາງ | | | | | ສະເລ່ຍລາຍຈ່າຍຕໍ່ຄົນ[26] | ສະເລ່ຍໄລຍະເວລາຢູ່ລາວ[27] | ລວມ *(ບໍ່ລວມປີ້ເຮືອບິນ ແລະ ວີຊ່າ)* |
| | | ຖ້ຽວບິນຂາເຂົ້າ | | ເສັ້ນທາງເຂົ້າ | | ຂົວມິດຕະພາບ | ການກວດລາຍວັນ | ຖ້ຽວບິນຂາເຂົ້າ | | ເສັ້ນທາງເຂົ້າ | | ການກວດລາຍວັນ | | | |
| | | ຖ້ຽວ | ຄົນ[28] | ລົດໄຟ[29] | ຄົນ[30] | ຄົນ | | ຖ້ຽວ | ຄົນ | ລົດໄຟ | ຄົນ | | | | |
| ໄລຍະ 1 | ມັງກອນ '22 | 24 | 2,386 | 4 | 720 | 1,500 | 307 | 16 | 1,568 | 4 | 720 | 153 | $125.46 | 7.9 | $6,832,481 |
| | ກຸມພາ '22 | 30 | 2,982 | 8 | 1,440 | 2,250 | 445 | 20 | 1,960 | 8 | 1,440 | 227 | $125.46 | 7.9 | $9,982,702 |
| | ມີນາ '22 | 38 | 3,777 | 12 | 2,160 | 3,000 | 596 | 24 | 2,352 | 12 | 2,160 | 301 | $125.46 | 7.9 | $13,329,959 |
| **ທັງໝົດ** | | **92** | **9,145** | **24** | **4,320** | **6,750** | | **60** | **5,880** | | **4,320** | | | | **$30,145,142** |

---

[26] ຄາດຄະເນ 50% ສູງກວ່າປີ ລາຍຈ່າຍສະເລ່ຍຂອງປີ 2019 ຕໍ່ນັກທອ່ງທ່ຽວ, ເນື່ອງຈາກວ່າ ຄາດວ່າຈະບໍ່ມີ ຫລື ມີໜ້ອຍທີ່ສຸດ ການເຂົ້າມາຂອງນັກທ່ອງທ່ຽວເປ້ກະເປົ໋າ ເນື່ອງຈາກຄ່າໃຊ້ຈ່າຍ

[27] ອີງໃສ່ ໄລຍະການພັກເຊົາສະເລ່ຍໃນປີ 2019 ຂອງນັກທ່ອງທ່ຽວສາກົນ. ຕົວຈິງມັນອາດຈະສູງກວ່າ ເພາະໃຊ້ເວລາຫລາຍກວ່າ ແລະ ລົງທຶນຫລາຍກວ່າໃນການເດີນທາງມາ ສປປ ລາວ

[28] ຄາດຄະເນ 142 ບ່ອນນັ່ງຕໍ່ຖ້ຽວ ເຊິ່ງມີຄວາມອາດສາມາດບັນຈຸໄດ້ 70%

[29] https://www.vientianetimes.org.la/freeContent/FreeConten_Laoflag201.php?fbclid=IwAR2Eax7MZP3eUjvDKC6Bc21zU9jNoiuPJzgtfQey5KovezSV-Rnqqgadyek

[30] ຄວາມອາດສາມາດບັຈຸຂອງລົດໄຟແມ່ນ 720. ສຳລັບການເອັ້ນໄລຍະຫ່າງ, ຄາດວ່າ ອາດສາມາດຮັບໄດ້ເຖິງ 50%. ແບ່ງກັນລະຫວ່າງການເຂົ້າມາ ຫລວງພະບາງ ແລະ ວຽງຈັນ

**<u>ໝາຍເຫດ:</u>**

- **ຖ້ຽວບິນການຄ້າ**: ການຄາດຄະເນຂ້າງເທິງແມ່ນອີງຕາມຖ້ຽວບິນການຄ້າ.
- **ຖ້ຽວບິນສ່ວນຕົວເໝົາລຳ** ສາມາດໄດ້ຮັບອະນຸຍາດອີງຕາມຂັ້ນຕອນປົກກະຕິ ແລະ ຄວາມສາມາດາໃນການກວດຫາເຊື້ອພະຍາດ.
- **ຄວາມສາມາດໃນການກວດຫາເຊື້ອພະຍາດ:** ປະຈຸບັນຄວາມສາມາດໃນການກວດກັບຫ້ອງທົດທອງເອກະຊົນ ແມ່ນ 1,000 PCR ຕໍ່ມື້, ເພີ່ມຕື່ມຈາກຄວາມສາມາດໃນການກວດຢູ່ຫ້ອງທົດລອງຂອງລັດຖະບານ.
- **ຂໍ້ວມິດຕະພາບ:** ຄວນກຳນົດໃຫ້ກວດ PCR ໃນພາກບູລິມະສິດທີ 1 ຈົນກວ່າອັດຕາການສັກວັກຊີນ ແລະ ສະຖານະການຂອງຈຳນວນກໍລະນີ ຂອງທັງສອງຟາກຊາຍແດນດີຂຶ້ນ. ເຖິງຢ່າງໃດກໍ່ຕາມ, ການອະນຸຍາດໃຫ້ມີເດີນທາງຜ່ານຊາຍແດນເປັນສິ່ງສຳຄັນ ໃນການອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວໃນນະຄອນຫຼວງວຽງຈັນ ແລະ ອະນຸຍາດໃຫ້ມີການຍົກຍ້າຍສຸກເສີນ ໃນເວລາຈຳເປັນ

ອີງຕາມຂໍ້ມູນຂອງ UNWTO[31] ໂຄງການກັບຄືນສູ່ລະດັບການທ່ອງທ່ຽວສາກົນຂອງ ປີ 2019 ແມ່ນກ່ອນປີ 2024, ຄາດຄະເນການເຂົ້າມາສໍາລັບເຂດທ່ອງທ່ຽວສີຂຽວ ບູລິມະສິດທີ 2 ລະຫວ່າງເດືອນເມສາ-ມິຖຸນາ '22 ແມ່ນ 132,974 (2% ຂອງນັກທ່ອງທ່ຽວປີ 2019), ສ້າງລາຍຮັບເກືອບ $69 ລ້ານໂດລາສະຫະລັດ. ຄາດຄະເນນັກທ່ອງທ່ຽວແມ່ນເກືອບສາມເທົ່າ ເມື່ອມີການເປີດເຂດບູລິມະສິດທີ 3 ລະຫວ່າງເດືອນກໍລະກົດ-ທັນວາ '22, ສືບຕໍ່ໂດຍການກັບຄືນສູ່ເຄິ່ງໜຶ່ງຂອງລະດັບຂອງປີ 2019 ໃນປີ 2023 ແລະ ການຟື້ນຟູສົມບູນຂອງນັກທ່ອງທ່ຽວຈໍານວນ 4.7 ລ້ານຄົນ ແລະ $934 ລ້ານໂດລາສະຫະລັດ ໃນຈໍານວນລາຍຮັບກ່ອນປີ 2024.

***ຕາຕະລາງ 4: ຄາດຄະເນ ນັກທ່ອງທ່ຽວເຂົ້າມາ ແລະ ລາຍຮັບ: ບູລິມະສິດ ເປີດປີທີ 2-3 '22-24***

| ເຂດ | ແຂວງ | ຊາຍແດນ | 2019 ອັດຕາສ່ວນ[32] | ມັງກອນ-ມີນາ'22 | ເມສາ-ມິຖຸນາ'22 | ມິຖຸນາ-ທັນວາ '22 | 2023 | 2024 |
|---|---|---|---|---|---|---|---|---|
| ບູລິມະສິດທີ 1 | ນະຄອນຫຼວງວຽງຈັນ | ສະໜາມບິນວັດໄຕ | 11.9% | 9,144 | 17,942 | 71,767 | 287,069 | 574,137 |
| | | ຂົວມິດຕະພາບ I | 27.6% | 6,750 | 41,281 | 165,126 | 660,503 | 1,321,006 |
| | | ສະຖານີທ່ານາແລ້ງ | 0.06% | | 91 | 365 | 1,462 | 2,923 |
| | ຫຼວງພະບາງ | ສະໜາມບິນຫຼວງພະບາງ | 4.22% | 5,880 | 6,317 | 25,270 | 101,080 | 202,159 |
| ບູລິມະສິດທີ 2 | ສະຫວັນນະເຂດ | ສະໜາມບິນສະຫວັນ | 0.06% | | 93 | 371 | 1,483 | 2,966 |
| | | ຂົວມິດຕະພາບ II | 8.45% | | 12,657 | 50,629 | 202,516 | 405,031 |
| | | ແດນສະຫວັນ | 4.93% | | 7,388 | 29,550 | 118,202 | 236,403 |
| | ຈໍາປາສັກ | ສະໜາມບິນປາກເຊ | 0.26% | | 392 | 1,568 | 6,273 | 12,545 |
| | | ວັງເຕົ່າ | 4.30% | | 6,438 | 25,754 | 103,015 | 206,030 |
| | ຫຼວງນໍ້າທາ | ບໍ່ເຕັນ | 11.2% | 8,640.00 | 16,778 | 67,113 | 268,453 | 536,906 |
| | ບໍ່ແກ້ວ | ສາມຫຼ່ຽມທອງຄໍາ | 5.03% | | 7,524 | 30,097 | 120,389 | 240,777 |
| | | ຂົວມິດຕະພາບ IV | 3.27% | | 4,890 | 19,560 | 78,239 | 156,478 |
| | ຄໍາມ່ວນ | ນໍ້າເພົາ | 2.83% | | 4,240 | 16,958 | 67,834 | 135,667 |
| | ຄໍາມ່ວນ | ຂົວມິດຕະພາບ III | 1.96% | | 2,938 | 11,752 | 47,009 | 94,017 |
| | ບໍລິຄໍາໄຊ | ນໍ້າເພົາ | 2.67% | | 4,003 | 16,012 | 64,047 | 128,093 |
| | **ລວມ** | | | **30,415** | **132,973** | **531,892** | **2,127,569** | **4,255,138** |
| ບູລິມະສິດທີ 3 | ສາລະວັນ | ລາໄລ | 1.57% | | | 9,390 | 37,561 | 75,122 |
| | ໄຊຍະບູລີ | ຂົວນໍ້າເຮືອງ | 1.46% | | | 8,728 | 34,914 | 69,827 |
| | ອັດຕະປື | ພູເຂືອ | 1.29% | | | 7,708 | 30,832 | 61,664 |
| | ຊຽງຂວາງ | ນໍ້າຄານ | 1.28% | | | 7,658 | 30,631 | 61,261 |
| | ໄຊຍະບູລີ | ນໍ້າງີ້ມ | 1.11% | | | 6,669 | 26,676 | 53,351 |
| | ຈໍາປາສັກ | ນໍ້ານົກຂຽນ | 1.08% | | | 6,488 | 25,952 | 51,904 |
| | ຜົ້ງສາລີ | ປາງຮົກ | 0.95% | | | 5,700 | 22,799 | 45,597 |
| | ບໍລິຄໍາໄຊ | ປາກຊັນ | 0.84% | | | 5,051 | 20,205 | 40,410 |
| | ຜົ້ງສາລີ | ລານຕ້ວຍ | 0.69% | | | 4,147 | 16,588 | 33,176 |
| | ບໍ່ແກ້ວ | ບ້ານມອມ | 0.41% | | | 2,435 | 9,739 | 19,478 |
| | ຫົວພັນ | ນໍ້າສູບ | 0.31% | | | 1,846 | 7,383 | 14,766 |
| | ໄຊຍະບູລີ | ພູດູ່ | 0.20% | | | 1,171 | 4,686 | 9,371 |

[31] https://www.unwto.org/news/tourist-numbers-down-83-but-confidence-slowly-rising https://webunwto.s3.eu-west-1.amazonaws.com/s3fs-public/2021-10/UNWTO_Barom21_05_September_excerpt.pdf

[32] ກະຊວງຖະແຫລງຂ່າວວັດທະນາທໍາ ແລະ ທອງທ່ຽວ, ກົມພັດທະນາການທ່ອງທ່ຽວ.

| | | | | | | | | |
|---|---|---|---|---|---|---|---|---|
| | ລວມ | | | | | 66,991 | 267,964 | 535,927 |
| ລວມທັງໝົດ | ລວມທັງໝົດ | | | 30,415 | 132,973 | 598,883 | 2,395,533 | 4,791,065 |
| | ສະເລ່ຍລາຍຈ່າຍ/Pax | | | 125.46 | 91 | 56 | 56 | 56 |
| | ສະເລ່ຍການພັກເຊົາ | | | 7.90 | 6 | 3.45 | 3.45 | 3.45 |
| | ລາຍຮັບ | | | 30,145,142 | 68,854,883 | 116,838,826 | 467,355,302 | 934,710,604 |
| | % ຂອງ 2019 | | | 7% | 7% | 13% | 50% | 100% |

## 2.9 ຄະນະກຳມະການເຂດທ່ອງທ່ຽວສີຂຽວ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ

ຄະນະສະເພາະກິດຮັບຜິດຊອບເຂດທ່ອງທ່ຽວສີຂຽວ ຄວນໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອຊຸກຍູ້ ແລະ ປະສານງານທຸກກິດຈະກຳຂອງກະຊວງທີ່ກ່ຽວຂ້ອງ. ຮອງນາຍົກລັດຖະມົນຕີ ຄວນເປັນປະທານ ຄະນະສະເພາະກິດ ແລະ ລວມມີສະມາຊິກຈາກ ຄະນະສະເພາະກິດ ໂຄວິດ-19/ກຊສທ, ກຊປກສ, ກຊຕປທ, ກະຊວງ ໂຍທາທິການ ແລະ ຂົນສົ່ງ (ລວມໄປເຖິງ ກົມການບິນພົນລະເຮືອນ8, ກຊຖວທ, ແລະ ກະຊວງອື່ນໆ ທີ່ກ່ຽວຂ້ອງ, ສຄອຊ (ລວມທັງສາຍການບິນ), ແລະ ຕາງໜ້າຈາກແຂວງທີ່ກ່ຽວຂ້ອງ. ພາກລວມຂອງຄວາມຮັບຜິດຊອບຂອງກະຊວງທີ່ກ່ຽວຂ້ອງແມ່ນໄດ້ອະທິບາຍຢູ່ຂ້າງລຸ່ມ. ສໍາລັບລາຍລະອຽດເພີ່ມຕື່ມແມ່ນອີງຕາມມາດຕະຖານຂັ້ນຕອນການດໍາເນີນງານ.



## 2.10 ແຜນງານການຈັດຕັ້ງປະຕິບັດ ແລະ ລາຍການກວດສອບ

ການປະຕິບັດບັນດາບາດກ້າວຄອນໄດ້ຮັບການເຫັນດີຈາກ ກັບຄະນະກຳມະການເຂດການທ່ອງທ່ຽວສີຂຽວ ໂດຍການຮ່ວມມື ກັບ ກະຊວງສາທາລະນະສຸກ, COVID-19 ຄະນະສະເພາະກິດ, ກະຊວງການຕ່າງປະເທດ, ກະຊວງ ໂຍທາທິການ ແລະ ຂົນສົ່ງ (ກົມການບິນພົນລະເຮືອນ), ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອໃຫ້ແຕ່ລະບາດກ້າວມີການ ເຊື່ອມສານ ແລະ ບໍ່ຊໍ້າຊ້ອນ ແລະ ນັກທ່ອງທ່ຽວໄດ້ຮັບການຮັບປະກັນປະສົບການເດີນທາງທີ່ມ່ວນຊື່ນ.

***ບາດກ້າວ & ຂອບເວລາສຳລັບການເປີດເຂດສີຂຽວ 1 ມັງກອນ 2022***

| ບາດກ້າວ | ລາຍລະອຽດ | ຂອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| 1. ສ້າງຕັ້ງຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ | 1.1 ຮັບຮອງແຜນເຂດທ່ອງທ່ຽວສີຂຽວ<br>1.2 ສ້າງຕັ້ງຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ ໂດຍການເປັນປະທານຂອງທ່ານຮອງນາຍົກ ພ້ອມທັງສະມາຊິກຈາກຄະນະສະເພາະກິດ COVID-19/ ກຊສທ, ກຊປກສ, ກຊຕປທ, ກົມການບິນພົນລະເຮືອນ, ກຊຖວທ, ສຄອຊ (ລວມທັງສາຍການບິນລາວ), ຕາງໜ້າຂັ້ນແຂວງທີ່ກ່ຽວຂ້ອງ (ແນະນຳ 7-9 ສະມາຊິກ) – ບົດບາດ *& ຄວາມຮັບຜິດຊອບຂອງຄະນະສະເພາະກິດແມ່ນໄດ້ອະທິບາຍໃນSOP.* | 31 ຕຸລາ<br><br>5 ພະຈິກ | ນາຍົກ<br><br>ຮອງນາຍົກ |
| 2. ຂັ້ນຕອນອະນຸມັດ | 2.1 ເຫັນດີກ່ຽວກັບຂອບເຂດການທ່ອງທ່ຽວສີຂຽວ ອີງຕາມອັດຕາການສັກວັກຊີນ ແລະ ຄວາມພ້ອມຂອງທຸລະກິດ<br>2.2 ຮັບຮອງວັນທີສຳລັບການເປີດ.<br>2.3 ຮັບຮອງມາດຕະຖານຂັ້ນຕອນການດຳເນີນງານ.<br>2.4 ຮັບຮອງຂໍ້ກຳນົດຂອງການເຂົ້າເມືອງ, ແບບຟອມ ແລະ ຂັ້ນຕອນ<br>2.5 ອະນຸມັດເຂດບູລິມະສິດສຳລັບການສັກຢາທັນທີ ແລະ ໃນອະນາຄົດ<br>2.6 ອະນຸມັດຂັ້ນຕອນສຸກເສີນ<br>2.7 ອະນຸຍາດການກວດຂອງຫ້ອງທົດລອງເອກກະຊົນ. ກຳນົດຂັ້ນຕອນການກວດ. ຄາດຄະເນຄວາມສາມາດຂອງການກວດ.<br>2.8 ອະນຸມັດມື້ເປີດ. ການຖະແຫຼງຂ່າວເບື້ອງຕົ້ນກ່ຽວກັບມື້ເປີດ ແລະ ລາຍລະອຽດເບື້ອງຕົ້ນ. | 15 ພະຈິກ<br><br>15 ພະຈິກ<br><br>15 ພະຈິກ<br><br>17 ພະຈິກ | ຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ<br><br>ກຊປກສ/ກຊຕປທ<br><br>ຄະນະສະເພາະກິດນໂຄວິດ-19/ກຊສທ<br><br>ກຊຖວທ |

| | | | |
|---|---|---|---|
| 3. ກະກຽມຟອມ ການເິນທາງເຂົ້າ, ຂໍ້ມູນ ແລະ ວັດຖຸ ສໍາລັບນັກທ່ອງ ທ່ຽວ & ທຸລະກິດ | 3.1 ກະກຽມຟອມລົງທະບຽນບັດຜ່ານເຂດທ່ອງທ່ຽວສີຂຽວອອນລາຍ ແລະ ສໍາລັບໃຊ້ຢູ່ສະຖານທູດ.<br>3.2 ກະກຽມຂໍ້ມູນສໍາລັບນັກທ່ອງທ່ຽວກ່ຽວກັບຂັ້ນຕອນ ທີ່ມີການເຜີຍແຜ່ອອນລາຍ (ເຊື່ອມຕໍ່ກັບສາຍການບິນລາວ, ເວັບໄຊ tourismlaos.org ແລະ ອື່ນໆ) ແລະ ກຽມພ້ອມສໍາລັບການຖະແຫຼງຂ່າວ.<br>3.3 ເປີດເວັບໄຊສໍາລັບ eVisa ແລະ ຮັບປະກັນການດໍາເນີນງານ ແລະ ເຊື່ອມຕໍ່ກັບແບບຟອມເຂດທ່ອງທ່ຽວສີຂຽວ.<br>3.4 ກະກຽມວິດີໂອ ເພື່ອອະທິບາຍກ່ຽວກັບຂັ້ນຕອນໃຫ້ນັກທ່ອງທ່ຽວ (ພາສາຕ່າງປະເທດ) ແລະ ທຸລະກິດ (ພາສາລາວ ແລະ ອັງກິດ)<br>3.5 ຍົກລະດັບ ຫຼື ພັດທະນາ app ສໍາລັບການຕິດຕາມຂໍ້ມູນຕິດຕໍ່ (ຫຼື ໃຊ້ Google Timeline ຫຼື app ອື່ນໆ) | 25 ພະຈິກ<br>25 ພະຈິກ<br>1 ພະຈິກ<br>7 ທັນວາ<br>21 ທັນວາ | ກຊປກສ/ກຊຕປທ<br>ກຊຖວທ<br>ສາຍການບິນລາວ<br>ສຄອງ<br>ກຊປກສ/ກຊຕປທ<br>ກຊຖວທ<br>ສຄອຊ<br>ກຊສທ<br>ສຄອຊ |
| 4. ໂຄສະນາກ່ຽວກັບ ຂັ້ນຕອນການ ເດີນທາງເຂົ້າເຂດ ສີຂຽວ & ຂໍ້ມູນທີ່ ສໍາຄັນ | 4.1 ເຜີຍແຜ່ແບບຟອມການລົງທະບຽນບັດຜ່ານເຂດສີຂຽວ ແລະ ລາຍລະອຽດກ່ຽວກັບຂັ້ນຕອນເທິງເວັບໄຊທາງການ<br>4.2 ເຜີຍແຜ່ວິດີໂອອະທິບາຍຂັ້ນຕອນສໍາລັບນັກທ່ອງທ່ຽວ ແລະ ທຸລະກິດ ທາງເວັບໄຊທາງການ<br>4.3 ຖະແຫຼງຂ່າວ ແລະ ການໂຄສະນາ PR (ອອກຂ່າວ, ສື່ມວນຊົນທາງສັງຄົມ, ວິທະຍຸ, ໂທລະທັດ) ເພື່ອໂຄສະນາກ່ຽວກັບການເປີດ ແລະ ນັກທ່ອງທ່ຽວ ໂດຍກົງທາງເວັບໄຊທາງການສໍາລັບລາຍລະອຽດ. ສົ່ງເສີມທຸລະກິດ *LaoSafe* ກ່ຽວກັບເຂດທ່ອງທ່ຽວສີຂຽວ ແລະ ທາງສີຂຽວ.<br>4.4 ສື່ສານກັບບັນດາສະຖານທູດໃນ ສປປ ລາວ ເພື່ອສົ່ງເສີມການເດີນທາງມາ ສປປ ລາວ ໃນປະເທດເປົ້າໝາຍ (ລວມທັງການໃຫ້ຂໍ້ມູນກ່ຽວກັບຄວາມປອດໄພ) | 1 ທັນວາ<br>7 ທັນວາ<br>7 ທັນວາ<br>7 ທັນວາ | ກຊປກສ<br>ກຊຖວທ<br>ກຊປກສ/ກຊຕປທ<br>ສາຍການບິນລາວ<br>ກຊຖວທ<br>ສຄອຊ<br>ສາຍການບິນລາວ<br>ກຊຖວທ<br>ສຄອຊ |

| | | | |
|---|---|---|---|
| 5. ກະກຽມທຸລະກິດ: *LaoSafe*[33] & ການໃບຢັ້ງຢືນ*ການເດີນທາງທີ່ປອດໄພ*[34] | 5.1 ເຜີຍແຜ່ຂໍ້ມູນກ່ຽວກັບ *LaoSafe* ຜ່ານຕົວແທນການທ່ອງທ່ຽວແຂວງ, ສະມາຄົມ, ແລະ ສໍາມະນາອອນລາຍ ແລະ ການແຈ້ງປະກາດຕ່າງໆ<br>5.2 ຝຶກອົບຮົມນັກກວດສອບ *LaoSafe* ໃນບູລິມະສິດເຂດທ່ອງທ່ຽວສີຂຽວ ແລະ ຂົງເຂດທາງສີຂຽວກ່ອນ.<br>5.3 ທຸລະກິດທີ່ສະໝັກສໍາລັບ *LaoSafe* & ໃບຢັ້ງຢືນ*ການເດີນທາງທີ່ປອດໄພ*<br>5.4 ຈັດຕາຕະລາງຝຶກອົບຮົມອອກລາຍສໍາລັບທຸລະກິດ, ຄົນຂັບລົດ ແລະ ຜູ້ນໍາທ່ຽວຜ່ານສໍາມະນາອອນລາຍ ແລະ ການຝຶກອົບຮົມອື່ນໆຕາມການສະເໜີ ຫຼື ຕາມຄວາມຕ້ອງການ.<br>5.5 ຢັ້ງຢືນທຸລະກິດ *LaoSafe* ໃນສະຖານທີ່ເປົ້າໝາຍ ໂດຍນັກກວດສອບທີ່ໄດ້ຮັບການຝຶກອົບຮົມແລ້ວ.<br>5.6 ການຝຶກອົບຮົມອອນລາຍສໍາລັບລະບຽບ*ການທ່ອງທ່ຽວທີ່ປອດໄພ* ສໍາລັບບໍລິສັດທ່ອງທ່ຽວ ໂດຍ Travelife.<br>5.7 ບໍລິສັດທ່ອງທ່ຽວປະກອບຂໍ້ມູນໃສ່ລາຍການ ລະບຽບ *ການທ່ອງທ່ຽວທີ່ປອດໄພ.*<br>5.8 Travelife ອະນຸມັດການນໍາໃຊ້ ລະບຽບກາຂອງ*ການທ່ອງທ່ຽວທີ່ປອດໄພ* ສໍາລັບບໍລິສັດທ່ອງທ່ຽວທີ່ສໍາເລັດລາຍການ ແລະ ການຝຶກອົບຮົມ.<br>5.9 ຕິດສະຕິກເກີ ແລະ ຂໍ້ມູນອື່ນໆກ່ຽວກັບການຢັ້ງຢືນ ແລະ ຂັ້ນຕອນຢູ່ສະຖານທີ່ຕ່າງໆ. | 4 ພະຈິກ<br>19 ພະຈິກ<br>19 ພະຈິກ<br>22 ພະຈິກ-19 ທັນວາ<br>19 ທັນວາ<br>1 ທັນວາ<br>15 ທັນວາ<br>19 ທັນວາ | ກຊຖອທ ສຄອຊ<br>ກຊຖອທ /ສຄອຊ<br>ກຊຖອທ /ສຄອຊ<br>ກຊຖອທ /ສຄອຊ<br>ກຊຖອທ<br>ກຊຖອທ /ສຄອຊ<br>ກຊຖອທ /ສຄອຊ<br>ກຊຖອທ<br>ກຊຖອທ |

[33] ມາດຕະຖານ *LaoSafe* ໄດ້ພັດທະນາໂດຍ LuxDev/029 ແລະ ຮັບຮອງໂດຍກະຊວງສາທາລະນະສຸກ ໃນກາງເດືອນຕຸລາ ແລະ ລວມເອົາມາດຕະຖານສໍາລັບທີ່ພັກ, ອາຫານ ແລະ ເຄື່ອງດື່ມ, ຜູ້ນໍາທ່ຽວ, ຄົນຂັບລົດ ແລະ ແຫຼ່ງທ່ອງທ່ຽວ. ກຊຖທວ ເປັນຜູ້ຈັດຕັ້ງປະຕິບັດ.

[34] ກາໝາຍການເດີນທາງປອດໄພ ແມ່ນກາໝາຍຄວາມປອດໄພ ແລະ ຄວາມສະອາດສາກົນທໍາອິດຂອງໂລສໍາລັບການເດີນທາງ & ທ່ອງທ່ຽວ, ອອກແບບສະເພາະເພື່ອແກ້ໄຂພະຍາດ COVID-19 ແລະ ການແຜ່ລະບາດທີ່ຄ້າຍຄືກັນ, ນໍາສະເໜີໂດຍຄະນະກໍາມະການການເດີນທາງ & ການທ່ອງທ່ຽວໂລກ (WTTC). Travelife ແມ່ນຄູ່ຮ່ວມມືຂອງ WTTC ໃນການອະນຸມັດການນໍາໃຊ້ການໝາຍການເດີນທາງປອດໄພສໍາລັບສະມາຊິກ Travelife ຜູ້ປະສົບຜົນສໍາເລັດໃນການຢັ້ງຢືນ Travelife ຫຼື ຮັບລາງວັນເປັນຄູ່ຮ່ວມມືກັບ Travelife. https://wttc.org/COVID-19/SafeTravels-Global-Protocols-Stamp

| | | | |
|---|---|---|---|
| | 5.10 ຕິດລະຫັດ QR ສໍາລັບການຕິດຕາມ ຂໍ້ມູນຕິດຕໍ່ຢູ່ສະຖານທີ່ຕ່າງໆ. | 22 ທັນວາ | /ສຄອຊ |
| 6. ການຕະຫຼາດ | 6.1 ໂຄສະນາທຸລະກິດ *LaoSafe* ໃນເຂດການທ່ອງທ່ຽວສີຂຽວ ແລະ ທາງສີຂຽວ ເທິງເວັບໄຊທາງການ<br>6.2 ໂຄສະນາທຸລະກິດ *LaoSafe* ໃຫ້ແກ່ການທ່ອງທ່ຽວພາຍໃນ *ລາວທ່ຽວລາວ*<br>6.3 ເຜີຍແຜ່ສະຖິຕິເທິງເວັບໄຊທາງການຢ່າງເປັນປົກກະຕິ | 1 ທັນວາ | ກຊຖວທ<br>ສາຍການບິນລາວ<br>ກຊປກສ |
| 7. ການທົບທວນລາຍການຄັ້ງສຸດທ້າຍ | 7.1 ອັດຕາການສັກວັກຊີນໃນເຂດທ່ອງທ່ຽວສີຂຽວແມ່ນສອດຄ່ອງ.<br>7.2 ຂັ້ນຕອນການເຂົ້າແມ່ນກວດຢູ່ສະໜາມບິນ ແລະ ອອນລາຍ.<br>7.3 ກວດກັບທີ່ທຸລະກິດທີ່ໄດ້ຮັບການຮັບຮອງຈາກ *LaoSafe*.<br>ການຮັບຮອງສຸດທ້າຍ ໂດຍຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ | 15-21 ທັນວາ | ຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ<br><br><br>ກຊຖວທ<br>ກຊປກສ |

## 2.11 ມາດຕະຖານຂັ້ນຕອນການດໍາເນີນງານ & ຂໍ້ມູນອື່ນໆ

- ອີງໃສ່ຮ່າງມາດຕະຖານຂັ້ນຕອນການດໍາເນີນງານສໍາລັບລາຍລະອຽດເພີ່ມຕື່ມ.
- ອີງໃສ່ *LaoSafe* ແລະ *Safe Travels* ສໍາລັບມາດຕະຖານສະເພາະ ແລະ ລະບຽບການສໍາລັບທີ່ພັກ, ການບໍລິການອາຫານ ແລະ ເຄື່ອງດື່ມ, ແຫຼ່ງທ່ອງທ່ຽວ, ຄົນຂັບລົດ, ຜູ້ນໍາທ່ຽວ, ແລະ ບໍລິສັດທ່ອງທ່ຽວ.
- ສາຍການບິນຄວນປະຕິບັດຕາມລະບຽບຂອງສາກົນກ່ຽວກັບຄວາມປອດໄພຈາກພະຍາດໂຄວິດ-19.
- ສະຖານທີ່ອື່ນໆທັງໝົດຄວນປະຕິບັດຕາມລະບຽບພາຍໃນກ່ຽວກັບຄວາມປອດໄພຈາກພະຍາດວິດ-19.

## 2.12 ການຕິດຕາມ

ຄວນມີການເກັບກໍາ, ສັງລວມ ແລະ ສົ່ງ ສະຖິຕິປະຈໍາວັນ ໃຫ້ແກ່ຄະນະສະເພາະກິດຮັບພິດຊອບເຂດທ່ອງທ່ຽວສີຂຽວ. ສະຖິຕິພື້ນຖານກ່ຽວກັບຄວາມປະສິດທິຜົນ ຄວນເຜີຍແຜ່ເທິງເວັບໄຊທາງການເພື່ອຮັກສາຄວາມເຊື່ອໝັ້ນຂອງຜູ້ຊົມໃຊ້.

***ຕາຕະລາງ 5: ຂອບວຽກການຕິດຕາມເຂດທ່ອງທ່ຽວສີຂຽວ***

| ພົນລະເມືອງຢູ່ເຂດທ່ອງທ່ຽວສີຂຽວ | ນັກທ່ອງທ່ຽວ | ການຕິດຕາມການຕິດຕໍ່ |
|---|---|---|
| ອັດຕາການສັກວັກຊີນ - ເຂດພົນລະເມືອງ | ນັກທ່ອງທ່ຽວຮອດປະຈຸບັນ | • ການແຈ້ງເຂົ້າໂຮງແຮມ (spreadsheet & QR codes)<br>• ເຊັກອິນຮ້ານອາຫານ (QR code ຫຼື sign-in)<br>• ລາຍການທ່ອງທ່ຽວຂອງບໍລິສັດທ່ອງທ່ຽວ (ລາຍງານເມື່ອຕ້ອງການ) |
| ກໍລະນີລາຍວັນ - ເຂດພົນລະເມືອງ | ກໍລະນີຕິດເຊື້ອຂອງນັກທ່ອງທ່ຽວ | |
| ກໍລະນີຮຸນແຮງ - ເຂດພົນລະເມືອງ | ກໍລະນີຕິດເຊື້ອຮຸນແຮງຂອງນັກທ່ອງທ່ຽວ | |

# ເອກະສານຊ້ອນທ້າຍ

**A1.** ຂັ້ນຕອນການເຂົ້າມາຂອງນັກທ່ອງທ່ຽວ ສໍາລັບເຂດທ່ອງທ່ຽວສີຂຽວ



## **A2.** ຕົວຢ່າງ ໃບສະໝັກບັດຜ່ານເຂດສີຂຽວ



Home Apply eVisa Fee Information FAQ About Contact Cart ENGLISH

eVisa

### ແບບຟອມສະໝັກ ບັດຜ່ານເຂົ້າເຂດທ່ອງທ່ຽວສີຂຽວ

**ຂໍ້ມູນສ່ວນຕົວ**

ນາມມະຍົດ

ຊື່

ຊື່ກາງ

ນາມສະກຸນ

ອີເມວ

ມືຖື ຫຼື ໂທລະສັບ

**ການສັກວັກຊີນ ໂຄວິດ-19**

ຊື່ຂອງວັກຊີນ ໂຄວິດ-19

ວັນທີສັກວັກຊີນ ໂຄວິດ-19 ເຂັມທີ 1

ວັນທີສັກວັກຊີນ ໂຄວິດ-19 ເຂັມທີ

ສຳເນົາຫຼັກຖານການສັກວັກຊີນ

ດຶງ & ວາງໄວ້ນີ້

☐ ຂ້າພະເຈົ້າຢືນຢັນວ່າຂໍ້ມູນຂ້າງເທິງນີ້ ແມ່ນຖືກຕ້ອງ.

**ໜັງສືຜ່ານແດນ**

ສັນຊາດ

ວັນເດືອນປີເກີດ

ປະເພດໜັງສືຜ່ານແດນ

ໜັງສືຜ່ານແດນເລກທີ

ວັນໝົດອາຍຸໜັງສືຜ່ານແດນ

ປະເພດວີຊ່າ

ອີວີຊ່າ, ວີຊ່າໜ້າດ່ານ...

**ແຜນການເດີນທາງ**

ມື້ຄາດຄະເນເດີນທາງ

ປະເທດທີ່ເດີນທາງຈາກ

ສະໜາມບິນທີ່ຈະມາເຖິງ

ຊື່ຂອງໂຮງແຮມຄືນທຳອິດ

ແຜນການເດີນທາງ

Day 1
Day 2
Day 3
Day 4
Day 5
Day 6

ອັບໂຫຼດຂໍ້ມູນການຈອງໂຮງແຮມ (ທາງເລືອກ)

ດຶງ ແລະ ວາງໄວ້ນີ້

**ສົ່ງ**

eVisa

Home | Apply | eVisa Fee | Information | FAQ | About | Contact | Cart | ENGLISH

## Green Travel Zone Pass Application

### PERSONAL INFORMATION

Title

First Name

Middle Name

Last Name

Email

Mobile or Phone Number

### PASSPORT

Nationality

Date of Birth

Passport Type

Passport Number

Passport Expiry Date

Visa Type

*Select: eVisa, Visa on Arrival...*

### COVID-19 VACCINATION

Name of COVID-19 vaccination

Date of 1st shot of COVID-19 vaccination

Date of 2nd shot of COVID-19 vaccination

Attach Copy of Proof of Vaccination

Drag & Drop

### TRAVEL ITINERARY

Expected Date of Travel

Country Departing From

Airport of Arrival

Name of Hotel on 1st Night

Travel Itinerary

*Day 1*
*Day 2*
*Day 3*
*Day 4*
*Day 5*
*Day 6*

Upload hotel booking(s) (optional)

Drag & Drop

☐ I certify that the above information is correct.

Submit

## **A3.** ປະກັນໄປແບບໃໝ່ ສໍາລັບ ປະກັນ **COVID-19** ຢູ່ ສປປ ລາວ

**ສະເໜີໂດຍ: ສະມາຄົມປະກັນໄພລາວ**

**ຜະລິດຕະພັນ**

- **ວົງເງິນປົກປ້ອງ : ການສູນເສຍຊີວິດ** ຈາກພະຍາດໄວຣັດໂຄໂຣນາ (ໂຄວິດ 19) : **20.000 USD**
- **ຄ່າປິ່ນປົວ** ຈາກພະຍາດໄວຣັດໂຄໂຣນາ (ໂຄວິດ 19) (ລວມທັງໝົດ) : **20.000 USD**
- **ບໍ່ມີໄລຍະລໍຖ້າ**
- **ບໍ່ລວມ**:
- - ເງື່ອນໄຂທາງການແພດ ຂອງພະຍາດທີ່ມີຢູ່ກ່ອນແລ້ວ ແລະ ໂລກພະຍາດ ທີ່ເກີດຈາກພະຍາດໂຄວິດ-19 ກ່ອນໜ້າແລ້ວ.
- - ບໍ່ມີການປິ່ນປົວແບບພື້ນເມືອງ.
- - ການບົ່ງມະຕິ ຫຼື ການປິ່ນປົວ ບໍ່ກ່ຽວຂ້ອງກັບພະຍາດໂຄວິດ

**ຄ່າທໍານຽມປະກັນໄພ**

- ເງິນຈ່າຍປະກັນໄພຂອງຜະລິດຕະພັນ ແມ່ນອັດຕາດຽວ ໂດຍບໍ່ມີການແບ່ງແຍກລະຫວ່າງວົງເງິນຄຸ້ມຄອງຊີວິດ ແລະ ສຸຂະພາບ (ໄດ້ຮັບການອະນຸມັດຈາກຜູ້ຄຸ້ມຄອງ (DSI))
- ຜະລິດຕະພັນນີ້ຈະຖືກຂາຍສ່ວນໃຫຍ່ຜ່ານທາງ **ອອນລາຍໂດຍຜ່ານຊ່ອງທາງການຊໍາລະ** ແຕ່ຖ້າພວກເຮົາພິຈາລະນາຂາຍຜະລິດຕະພັນນີ້ຢູ່ສະໜາມບິນ ເມື່ອເດີນທາງມາຮອດ, ຫຼື ຈຸດຊາຍແດນ ພວກເຮົາຈະຕ້ອງໄດ້ພິຈາລະນາຄ່ານາຍໜ້າໃຫ້ບັນດານາຍໜ້າ (ຄາດຄະເນອັດຕາດຽວ 15%) ຊຶ່ງອາດຈະບວກຂຶ້ນຕື່ມຈາກຄ່າປະກັນໄພ ຖ້ານາຍໜ້າຈະປະຕິບັດການຂາຍ.
- ຄ່າທໍານຽມປະກັນໄພແມ່ນອີງຕາມໄລຍະເວລາຂອງການພັກເຊົາ (**5 ທາງເລືອກ: 30 ວັນ, 60 ວັນ, 90 ວັນ ,180 ວັນ, 360 ວັນ**)
- ຄ່າທໍານຽມປະກັນໄພແມ່ນອີງຕາມເງື່ອນໄຂທີ 2 ຊຶ່ງແມ່ນ**ປະເທດຕົ້ນທາງ** (ການເດີນທາງອອກຈາກປະເທດຂອງນັກທ່ອງທ່ຽວ) ແລະ 2 ລາຍການຂອງບັນດາປະເທດ (ຄວາມສ່ຽງຕໍ່າ ຫຼື ຄວາມສ່ຽງສູງ)
- **ສໍາລັບປະເທດທີ່ມີຄວາມສ່ຽງສູງ ມີການຈ່າຍຄ່າບໍລິການລ່ວງໜ້າ 60%** (ແຕ່ລະເດືອນລາຍການບັນດາປະເທດຈະຖືກທົບທວນໂດຍລັດຖະບານ ຄືດັ່ງກໍລະນີປະເທດໄທ)

**ຕົວຢ່າງ:**



Microsoft Excel - Tariff covid insurance ,for Laos 2 (2).xls [Compatibility Mode]

Allianz General Laos

Insurer: LIA

Type of Insurance: TRAVEL

Product: COVID INSURANCE

Coverage:

| Type of Coverage | COUNTRY OF ORIGIN : LOW RISK COUNTRIES | | HIGH RISK COUNTRIES | |
|---|---|---|---|---|
| COVID INSURANCE | MEDICAL AND HOSPITALISATION UP TO 20000 USD DEATH 20.000 USD | | MEDICAL AND HOSPITALISATION UP TO 20000 USD DEATH 20.000 USD | |
| | | | | |
| LENGTH OF STAY | in USD | | in USD | |
| 30 DAYS | 30 | | 50 | |
| 60 DAYS | 54 | | 86 | |
| 90 DAYS | 72 | | 115 | |
| 180 DAYS | 144 | | 230 | |
| 365 DAYS | 270 | | 432 | |

Exclusive Cover : Covid ; Medical care : Real expenses up to 20.000 USD Death ; 20.000 USD

Eligibility : Persons aged 1 to 99 years old

Sales : Online through Web Portal from anywhere in the world

No waiting period

Insurer : LIA through a panel of members companies

Claim handlers : Selected companies registered in Laos

Sheet1

12:19 PM 4/30/2021

## A4. ຕາຕະລາງປຽບທຽບໃນພາກພື້ນ

*ຕາຕະລາງ 6 ປະເທດທີ່ໄດ້ເປີດແລ້ວ ຫຼື ມີແຜນທີ່ຈະເປີດສຳລັບການທ່ອງທ່ຽວ ໃນອາຊີຕາເວັນອອກສຽງໃຕ້ & ອາຊີໃຕ້*

| ປະເທດ | ມື້ເປີດ | ປະເພດການເປີດ (ແຊນບັອກ/ຈຳກັດ/ເຕັມຮູບແບບ) | ອັດຕາການສັກວັກ ຊີນຂອງປະເທດ | ຜູ້ຕິດເຊື້ອ /ຕໍ່ພົນລະເມືອງ/ ຜູ້ເສຍຊີວິດ ສະເລ່ຍທົ່ວ ປະເທດ | ກໍລະນີ ຕິດເຊື້ອ ຈາກນັກ ທ່ອງ ທ່ຽວ | ນັກທ່ອງທ່ຽວ |
|---|---|---|---|---|---|---|
| ເມົາຣິດ | 15 ກໍລະກົດ 2020 | ສະເພາະ ຣີສອດ, ເຮືອສຳລານ, ໂຮງແຮມ ທີ່ຕັ້ງຢູ່ ເກາະທີ່ມີຄົນອາໃສຢູ່ | 63% ສັກວັກຊີນຄົບຖ້ວນ<br>72% ສັກວັກຊີນຢ່າງໜ້ອຍໜຶ່ງເຂັມ<br>93% ພະນັກງານ ໂຮງແຮມ ສັກວັກຊີນຄົບຖ້ວນ<br>99 % ພະນັກງານ ໂຮງແຮມ ສັກວັກຊີນ ຢ່າງໜ້ອຍ ໜຶ່ງເຂັມ | ຜູ້ຕິດເຊື້ອໃໝ່ຕໍ່ມື້ ສະເລ່ຍ 71 (7ມື້ ຍ້ອນຫຼັງ)/0.13% ຂອງພົນລະເມືອງທັງໝົດ, 234 ເສຍຊີວິດ | ອັດຕາການ ຕິດເຊື້ອ ສະເລ່ຍ 0.17% (ຮອດວັນທີ 15 ກັນຍາ | ນັກທ່ອງທ່ຽວຕໍ່ມື້ ສະເລ່ຍ 2,923 (ເພີ່ມຈາກ 7.2) ຄາດວ່າ 1.5 ລ້ານໂດລາ ໃນປີ 2021, ຈອງເຕັມໝົດແລ້ວໃນຊ່ວງເທດສະການຄິດສະມາດ |
| ສີ ລັງກາ | ເປີດເດືອນມັງກອນ, ປິດ ແລະ ເປີດອີກຄັ້ງໃນວັນທີ 1 ຕຸລາ 2021 | ຖ້າໄດ້ສັກວັກຊີນ ສາມາດເດີນທາງໄປໃສກໍໄດ້ ແລະ ບໍລິຫານຈັດການ ແຜນການທ່ອງທ່ຽວຂອງຕົນ<br>ຖ້າບໍ່ໄດ້ສັກວັກຊີນ ຕ້ອງຢູ່ໃນເຂດ Tourism Bio-Bubble 14 ມື້ (ສາມາດເດີນທາງລະຫວ່າງ | 56% ສັກວັກຊີນຄົບຖ້ວນ<br>68% ສັກວັກຊີນຢ່າງໜ້ອຍ ໜຶ່ງເຂັມ | ອັດຕາການຕິດເຊື້ອຕໍ່ມື້ ສະເລ່ຍ 862 (7ມື້ ຍ້ອນຫຼັງ) 0.003% ຂອງພົນລະເມືອງທັງໝົດ | ບໍ່ມີຂໍ້ມູນ | 37,924 (ມັງກອນ-ກັນຍາ 2021)<br>32.8 ລ້ານໂດລາ ຂອງລາຍຮັບທັງໝົດ |

| | | | | | | |
|---|---|---|---|---|---|---|
| | | ໂຮງແຮມ ລະດັບ 1 ທີ່ມີ ການບໍລິການຮັບສົ່ງທີ່ຈັດ ສັນໂດຍໂຮງແຮມ ຫຼື ຕົວ ແທນທ່ອງທ່ຽວ) | | | | |
| ໄທ - ພູເກັດແຊນບັອກ | 1 ກໍລະກົດ 2021 | ແຊນບັອກ 14 ມື້<br>ແຊນບັອກ 7+7 | 60%+ ສັກວັກຊີນ ຄົບຖ້ວນ (ພູເກັດ)<br>77% ສັກວັກຊີນຢ່າງ ໜ້ອຍ ໜຶ່ງເຂັມ (ພູ ເກັດ) | ອັດຕາການຕິດ ເຊື້ອຕໍ່ມື້ ສະເລ່ຍ ~160 (ພູເກັດ)<br>0.038% (ພູ ເກັດ)<br>17,607 ເສຍ ຊີວິດ | ນັກທ່ອງ ທ່ຽວທີ່ຕິດ ເຊື້ອ 0.3% ໃນ ວັນທີ 29 ກັນຍາ 2021 | 38,289, ໃນວັນທີ 29 ກັນຍາ 2021<br>48 ລ້ານໂດລາ ຂອງລາຍຮັບທັງໝົດ |
| ສິງກະໂປ -ລະບົບຊ່ອງທາງ ພິເສດສຳລັບ ນັກທ່ອງທ່ຽວທີ່ ສັກວັກຊີນ | 1 ກັນຍາ 2021 | ຊ່ອງທາງພິເສດສຳລັບນັກ ທ່ອງທ່ຽວຈາກ ເຢຍລະມັນ ແລະ ບູໄນ ເທົ່ານັ້ນ | 83% ສັກວັກຊີນຄົບຖ້ວນ<br>85% ສັກວັກຊີນຢ່າງ ໜ້ອຍ ໜຶ່ງເຂັມ | ອັດຕາການຕິດ ເຊື້ອຕໍ່ມື້ ສະເລ່ຍ 1,886 (ເດືອນ ຜ່ານມາ)<br>0.03% ຂອງ ພົນລະ ເມືອງ,<br>192 ເສຍຊີວິດ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| ເນປານ | 24 ກັນຍາ 2021 | ບໍ່ຈຳກັດ | 22% ສັກວັກຊີນຄົບຖ້ວນ<br>28% ສັກວັກຊີນຢ່າງ ໜ້ອຍ ໜຶ່ງເຂັມ | ອັດຕາການຕິດ ເຊື້ອຕໍ່ມື້ ສະເລ່ຍ 684 (7ມື້ ຍ້ອນ ຫຼັງ)<br>0.002% ຂອງ ພົນລະ ເມືອງທັງ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |

| | | | | | | |
|---|---|---|---|---|---|---|
| | | | | ໝົດ, 11,261 ເສຍຊີວິດ | | |
| ບາລີ | 14 ຕຸລາ 2021 | ຈະອະນຸຍາດໃຫ້ ຍີ່ປຸ່ນ, ນິວຊີແລນ, ເກົາຫຼີໃຕ້, ສະຫະລັດ ອາລັບເອມີເລດ (ບໍ່ຕ້ອງການໃຫ້ນັກທ່ອງທ່ຽວແບບແບກແພກເກົ້ ຍ້ອນບັນຫາການແຜ່ລະບາດຂອງcovid) | 80% ສັກວັກຊີນຄົບຖ້ວນ | ຜູ້ຕິດເຊື້ອໃໝ່ 37 (7ມື້ ຍ້ອນຫຼັງ) 0.0008% ຂອງພົນລະເມືອງທັງໝົດ, 143,000 ເສຍຊີວິດ (ອິນໂດເນເຊຍ) | ຂໍ້ມູນບໍ່ສາມາດນໍາໃຊ້ໄດ້ | ຂໍ້ມູນບໍ່ສາມາດນໍາໃຊ້ໄດ້ |
| ກໍາປູເຈຍ | ຈະເປີດອີກຄັ້ງຖ້າສະພາບການຄົງທີ່ພາຍໃນ 15 ມື້ (ແຈ້ງການ 9 ຕຸລາ) | ບໍ່ມີຂໍ້ມູນ | 66.6% ສັກວັກຊີນຄົບຖ້ວນ 80.1% ສັກວັກຊີນຢ່າງໜ້ອຍໜຶ່ງເຂັມ | ຜູ້ຕິດເຊື້ອໃໝ່ 216 (7ມື້ ຍ້ອນຫຼັງ) 0.001% ຂອງພົນລະເມືອງທັງໝົດ, 2,559 ເສຍຊີວິດ (ອິນໂດເນເຊຍ) | ຂໍ້ມູນບໍ່ສາມາດນໍາໃຊ້ໄດ້ | ຂໍ້ມູນບໍ່ສາມາດນໍາໃຊ້ໄດ້ |
| ຫວຽດນາມ | ພະຈິກ 2021 (ວາງແຜນໄວ້) | ຟູກວກ ເປີດແບບຈໍາກັດ ແລະ ຢາຈາງ ມີຄວາມເປັນໄດ້ທີ່ຈະເປີດ ໂດຍກົງໃຫ້ ລັດເຊຍ | 7% ສັກວັກຊີນຄົບຖ້ວນ (ຟູກວກ) 35% ສັກວັກຊີນຢ່າງໜ້ອຍ ໜຶ່ງເຂັມ(ຟູກວກ) | ບໍ່ມີລາຍລະອຽດສໍາລັບ ຟູກວກ | ຂໍ້ມູນບໍ່ສາມາດນໍາໃຊ້ໄດ້ | ຂໍ້ມູນບໍ່ສາມາດນໍາໃຊ້ໄດ້ |

| | | | | | | |
|---|---|---|---|---|---|---|
| | | | 17.8% (ທົ່ວ ປະເທດ) / 39.1% ສັກວັກຊີນພຽງແຕ່ ໜຶ່ງເຂັມ | | | |
| ມາເລເຊຍ | ພະຈິກ 2021 (ວາງແຜນໄວ້) ປະຈຸບັນເປີດໃຫ້ພຽງແຕ່ ການທ່ອງທ່ຽວພາຍໃນ | ທຸກປະເທດ | 66.7% ສັກວັກຊີນຄົບຖ້ວນ 75.9% ສັກວັກຊີນ ຢ່າງໜ້ອຍໜຶ່ງເຂັມ | ສະເລ່ຍຕໍ່ມື້ 8,446 (7ມື້ ຍ້ອນຫຼັງ) | ຂໍ້ມູນບໍ່ ສາມາດນຳ ໃຊ້ໄດ້ | ຂໍ້ມູນບໍ່ສາມາດນຳໃຊ້ໄດ້ |
| ອິນເດຍ | ທ່ຽວບິນເໝົາລຳ-15 ຕຸລາ 2021 ທ່ຽວບິນທົ່ວໄປ-15 ພະຈິກ 2021 | ບໍ່ມີລາຍລະອຽດ | 19.8% ສັກວັກຊີນ ຄົບຖ້ວນ 49.9% ສັກວັກຊີນ ຢ່າງໜ້ອຍໜຶ່ງເຂັມ | ສະເລ່ຍຕໍ່ມື້ 18,552 (7ມື້ ຍ້ອນຫຼັງ) | ຂໍ້ມູນບໍ່ ສາມາດນຳ ໃຊ້ໄດ້ | ຂໍ້ມູນບໍ່ສາມາດນຳໃຊ້ໄດ້ |
| ສປປ ລາວ | - | - | 31% ສັກວັກຊີນຄົບ ຖ້ວນ 43.6% ສັກວັກຊີນ ຢ່າງໜ້ອຍໜຶ່ງເຂັມ | ສະເລ່ຍຕໍ່ມື້ 500 (7ມື້ ຍ້ອນຫຼັງ) 0.007% ຂອງ ພົນລະເມືອງທັງ ໝົດ, 35 ເສຍ ຊີວິດ | | |

*ຕາຕະລາງ 7: : ຂໍ້ກຳນົດທ່ອງທ່ຽວໂດຍປະເທດ ໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້*

| ປະເທດ | ເງື່ອນໄຂການສັກວັກຊີນ | ການກວດ | ການຕິດຕາມ | ປະກັນໄພ | ການສະໝັກແບບພິເສດ/ອື່ນໆ |
|---|---|---|---|---|---|
| ເນີປານ | • ຕ້ອງສັກວັກຊີນລ່ວງໜ້າ 14 ວັນ ສຳລັບ ເກາະທີ່ມີຄົນອາໃສຢູ່ (ບໍ່ໄດ້ຮຽກຮ້ອງໃນປີ 2021)<br>• ບໍ່ຈຳເປັນຕ້ອງສັກວັກຊີນສຳລັບເກາະທີ່ບໍ່ມີຄົນອາໃສຢູ່<br>• ຖ້າບໍ່ສັກວັກຊີນ, ສາມາດທ່ອງທ່ຽວສະເພາະດເກາະທີ່ພົນລະເມືອງ 60% ໄດ້ຮັບການສັກວັກຊີນ<br>• 90% ພະນັກງານໄດ້ສັກວັກຊີນ & 90% ຜູ້ຢູ່ອາໄສເປັນຄົນສູງອາຍຸ<br>• ມີວັກຊີນສຳລັບນັກທ່ອງທ່ຽວ | • ກວດ PCR 96 ຊົ່ວໂມງກ່ອນອອກເດີນທາງ<br>• ບໍ່ຕ້ອງກວດໃນເວລາເດີນທາງມາຮອດປະເທດ ຍົກເວັ້ນມີອາການ (ຈ່າຍໂດຍ ນັກທ່ອງທ່ຽ)<br>• ການສຸ່ມກວດ (ຈ່າຍໂດຍລັດຖະບານ)<br>• ຫາກຜົນກວດເປັນບວກ, ສາມາດພັກຢູ່ຣີສອດ (ຖ້າຣີສອດອະນຸຍາດ) ຫຼື ນຳສົ່ງໄປໂຮງໝໍ<br>• ຄວາມສາມາດໃນການກວດເຊື້ອສຳລັບນັກທ່ອງທ່ຽວ ແມ່ນ 2,500-3,300 ຕໍ່ມື້ | • ແອບຕິດຕາມ Ekee | • ບໍ່ມີຂໍ້ມູນ | • ຜູ້ເດີນທາງ ຕ້ອງສົ່ງແບບຟອມ ແຈ້ງສຸຂະພາບຂອງຕົນ 24 ຊົ່ວໂມງກ່ອນອອກເດີນທາງ (ອອນລາຍ) |
| ໄທ | • ບໍ່ຈຳຕ້ອງກັກໂຕ 14 ມື້ ທີ່ໂຮງແຮມ<br>• ກັກໂຕ 0 ມື້ - ສັກວັກຊີນຄົບຖ້ວນ ຢ່າງໜ້ອຍ 14 ມື້ກ່ອນອອກເດີນທາງ | • ຜົນກວດ PRC ເປັນລົບພາຍໃນ 72 ຊົ່ວໂມງກ່ອນອອກເດີນທາງ<br>• ການກວດ PRC ຢູ່ສະໜາມບິນ ເວລາເດີນທາງເຂົ້າ | • ເປີດນຳໃຊ້ແອບໄທແລນພລັດ ຕິດຕາມສະຖານທີ່<br>• ຕ້ອງລາຍງານທຸກມື້ ຜ່ານ ແອບ | • ຄຸ້ມຄອງຂັ້ນຕ່ຳ 100.000 ໂດລາ<br>• ຕ້ອງຄຸ້ມຄອງຕະຫຼອດໄລຍະເວລາການທອ່ງທ່ຽວ | • ຕ້ອງມີແຜນການເດີນທາງ ແລະ ທ່ອງທ່ຽວ<br>• ໄດ້ຮັບໜັງສືອະນຸຍາດເຂົ້າປະເທດ (ນຳໃຊ້ເວັບໄຊ) |

| | | | | | |
|---|---|---|---|---|---|
| | • ປະເທດທີ່ມີຄວາມສ່ຽງຕ່ຳ ແລະ ປານກາງ (ແຕ່ຍັງບໍ ຊັດເຈນ ວ່າພວກເຂົາ ຄິດໄລ່/ກຳນົດແບບໃດ) | ປະເທດ (ຖ້າຜົນເປັນລົບ, ສາມາດອອກຈາກຫ້ອງ ແລະ ເດີນທາງ)<br>• ກວດ PCR ໃນມື້ທີ 14 ຖ້າຕ້ອງການເດີນທາງໄປ<br>• ການກວດແບບໄວ ໃນມື້ທີ 6 ແລະ ມື້ທີ 12<br>• ຈ່າຍລ່ວງໜ້າສຳລັບການກວດ PCR (ຜ່ານເວັບໄຊທ໌) | | | |
| ສິງກະໂປ | • ໄດ້ສັກວັກຊີນ ທີ່ອະນຸມັດໂດຍອົງການ WHO ຢ່າງໜ້ອຍ 2 ອາທິດ ກ່ອນອອກເດີນທາງ | • ກວດ PCR 48 ຊົ່ວໂມງກ່ອນອອກເດີນທາງ<br>• ການກວດ PRC ຢູ່ສະໜາມບິນ ເວລາເດີນທາງເຂົ້າປະເທດ (ຖ້າຜົນເປັນລົບ, ສາມາດອອກຈາກຫ້ອງ ແລະ ເດີນທາງ)<br>• ຈ່າຍລ່ວງໜ້າສຳລັບການກວດ PCR<br>• ການກວດ PCR ໃນມື້ທີ 3 ແລະ ມື້ທີ 7<br>• ອະນຸຍາດໃຫ້ 7 ຄລີນິກເທົ່ານັ້ນທີ່ສາມາດກວດ (ສາມາດເລືອກ. ແຕ່ຕ້ອງນັດດ້ວຍຕົນເອງ) | • ແອບ Trace Together (ຕ້ອງເປີດ ແລະ ນຳໃຊ້21 ມື້ຫຼັງຈາກເດີນທາງອອກຈາກສິງກະໂປ - ຂໍ້ມູນຈະຖືກອັບໂຫຼດ ຖ້າກະຊວງສາທາລະນະສຸກຕ້ອງການ)<br>• ບໍອະນຸຍາດໃຫ້ນຳໃຊ່ລົດເມ ແລະ ລົດໄຟສາທາລະນະ | • ຄຸ້ມຄອງຂັ້ນຕ່ຳ 30.000 ໂດລາ | • ຕ້ອງຈອງຖ້ຽວບິນໃນລະບົບຊ່ອງທາງພິເສດສຳລັບນັກທ່ອງທ່ຽວທີ່ສັກວັກຊີນ (ສາຍການບິນສິງກະໂປ, ບູໄນ, ລູບມັນຊາ) - ສະເພາະຜູ້ໂດຍສານທີ່ໄດ້ສັກວັກຊີນຄົບຖ້ວນເດີນທາງໃນຖ້ຽວບິນ<br>• ຕ້ອງສະມັກຂໍໃບອະນຸຍາດ Vaccinated Travel Pass ຜ່ານສູນ Safe Travel Portal 7-30 ມື້ລ່ວງໜ້າ |

| | | | | | |
|---|---|---|---|---|---|
| ສີລັງກາ | • ສັກວັກຊີນແລ້ວ: ເດີນທາງໄປໃສ່ກໍໄດ້<br>• ບໍ່ໄດ້ສັກວັກຊີນ: ຕ້ອງຢູ່ໃນເຂດ "Tourism Bio-Bubble" | • ກວດ PCR 72 ຊົ່ວໂມງ ກ່ອນອອກເດີນທາງ (ຖ້າສັກວັກຊີນແລ້ວ)<br>• ບໍ່ຕ້ອງກວດ PRC ເວລາເດີນທາງເຂົ້າປະເທດ ຖ້າສັກວັກຊີນແລ້ວ<br>• ຕ້ອງກວດ PRC ເວລາເດີນທາງເຂົ້າປະເທດ ຖ້າບໍ່ໄດ້ສັກວັກຊີນ (40 ໂດລາ)<br>• ເດັກນ້ອຍ 12-18 ກວດ PRC ເວລາເດີນທາງເຂົ້າປະເທດ ຖ້າໄດ້ສັກວັກຊີນແລ້ວ (40 ໂດລາ) | ຄືອາໂຄດ Tourism Bio-Bubble | ບໍ່ຈຳເປັນຖ້າໄດ້ສັກວັກຊີນແລ້ວ,<br>ຖ້າບໍ່ສັກວັກຊີນ, ຕ້ອງມີປະກັນ 12ໂດລາ (ຄຸ້ມຄອງ 1 ເດືອນ, 50,000 ໂດລາ) | • ມີຫຼັກຖານການສັກວັກຊີນ (ໃບຮັບຮອງພ້ອມສະບັບແປ)<br>• ປະກອບແບບຟອມແຈ້ງສຸຂະພາບ<br>• ສາມາດກະກຽມແຜນການເດີນທາງຂອງຕົນ |
| ເນປານ | • ສັກວັກຊີນຄົບຖ້ວນ ບໍ່ຈຳເປັນຕ້ອງກັກໂຕ<br>• ນັກທ່ອງທ່ຽວທີ່ບໍ່ໄດ້ສັກວັກຊີນ ຕ້ອງກັກໂຕ 10 ມື້ | • ກວດ PCR ຫຼື ການກວດອື່ນໆ (GeneExpert, TrueNAAT) 72 ຊົ່ວໂມງລ່ວງໜ້າ<br>• ກວດແບບໄວ ແບບ Antigen ເວລາເດີນທາງເຂົ້າປະເທດ (ຢູ່ສະໜາມບິນຫຼື ໂຮງແຮມ) | ບໍ່ມີ | ບໍ່ມີ | • ປະກອບແບບຟອມແຈ້ງສຸຂະພາບ<br>• ຕ້ອງມີຫຼັກຖານການຈອງໂຮງແຮມ<br>• ໃບຮັບຮອງການສັກວັກຊີນເປັນພາສາອັງກິດ<br>• ຕ້ອງມີໃບອະນຸຍາດຍ່າງປ່າ ກ່ອນເດີນທາງ<br>• ແຫຼ່ງທ່ອງທ່ຽວທ້ອງຖິ່ນ ອາດມີຂໍ້ຈຳກັດອື່ນໆ (ປະສານກວດສອບກັບຕົວແທນການທ່ອງທ່ຽວ) |

| | | | | | |
|---|---|---|---|---|---|
| ບາລີ | • ຕ້ອງໄດ້ສັກວັກຊີນຄົບຖ້ວນ | • ກວດ PCR 72 ຊົ່ວໂມງກ່ອນອອກເດີນທາງ<br>• ກວດ PCR ທີ່ສະໜາມບິນ ເວລາເດີນທາງເຂົ້າປະເທດ<br>• ຕ້ອງກັກໂຕແບບບັງຄັບຈຳນວນ 5 ມື້ ທີ່ໂຮງແຮມລະດັບ 3-5 ດາວທີ່ໄດ້ຮັບການຮັບຮອງ (ລາຄາເລີ່ມຕົ້ນ 60ໂດລາ)<br>• ຖ້າກວດບໍ່ຜ່ານໃນມື້ທີ 5, ຕ້ອງພັກຮັກສາຕົວຢູ່ໂຮງໝໍທີ່ແພງຫຼາຍ | • ຕ້ອງນຳໃຊ້ແອບ (PeduliLindungi) ຍັງບໍສາມາດນຳໃຊ້ໄດ້, ເປັນແອບທີ່ລວມເອົາໜັງສືຮັບຮອງການສັກວັກຊີນ ແລະ ການຕິດຕາມເຂົ້າກັນ | • ຈຳເປັນ ແຕ່ບໍໄດ້ກຳນົດຈຳນວນ | • ບໍ່ມີຂໍ້ມູນ |

*ຕາຕະລາງ 8: : ຂໍ້ກຳນົດສຳລັບທີ່ພັກ & ຮ້ານອາຫານ ທີ່ຮັບຕ້ອນນັກທ່ອງທ່ຽວ ໃນອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້*

| ປະເທດ | ຜູ້ຊ່ຽວຊານດ້ານສຸຂະພາບຂອງພະນັກງານ | ພະນັກງານທີ່ສັກວັກຊີນ | ການລາຍງານປົກກະຕິ | ການຂຶ້ນທະບຽນພິເສດ | ອື່ນໆ |
|---|---|---|---|---|---|
| ເມົາດີບ | ຜູ້ຈັດການ Cobid19 | ພະນັກງານໂຮງແຮມ 93-99% ໄດ້ສັກວັກຊີ ນແລ້ວ | ບໍ່ມີຂໍ້ມູນ | ສິ່ງແຜນຈັດການຮັບມື Covid | ເຂດທີ່ກຳນົດສຳລັບການdກັກໂຕ<br>ມາດຕະການຮັກສາໄລຍະຫ່າງທາງສັງຄົມ<br>ການເຂົ້າເຖິງການດູແລທາງການແພດ |
| ໄທ | ບໍ່ໄດ້ຮຽກຮ້ອງ | ພະນັກງານໂຮງແຮມ ຢ່າງໜ້ອຍ 70% ໄດ້ສັກວັກຊີນແລ້ວ | ບໍ່ມີຂໍ້ມູນ | ທັງໝົດຕ້ອງໄດ້ຮັບການຮອງຮອງໂດຍ TAT-SHA (ໜ່ວຍງານມາດຕະຖານຄວາມປອດໄພ ແລະ ສຸຂະພາບ) | |
| ສິງກະໂປ | | | | | |
| ສີລັງກາ | ແມ່ນ, ທ່ານໝໍປະຈຳໂຮງແຮມ | ບໍ່ອະນຸຍາດໃຫ້ອແກຈາກໂຮງແຮມ ຖ້າສຳພັດກັບແຂກ | ແມ່ນ (ຄິວອາໂຄດ ສຳລັບແຕ່ລະໂຮງແຮມເພື່ອຮັບຂໍ້ມູນ) | ໂຮງແຮມລະດັບ 1 ທີ່ມີມາດຕະຖານສຸຂະພາບ ແລະ ຄວາມປອດໄພ (ສຳລັບຜູ້ທີ່ຍັງບໍ່ທັນໄດ້ສັກວັກຊີນ) | ບໍ່ອະນຸຍາດໃຫ້ຮັກແຂກພາຍໃນ |
| ເນປານ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີ (ຍົກເວັ້ນໂຮງແຮມສຳລັບການກັກໂຕ) | ບໍ່ມີຂໍ້ມູນ |
| ບາລີ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ໂຮແຮມລະດັບ 3-5ດາວທີ່ໄດ້ຮັບການຮັບຮອງ | ສາມາດຳເນີນງານໃນອັດຕາ 50% ຂອງຄວາມສາມາດສູງສຸດ<br><br>ຕ້ອງສວມໃສ່ໜ້າກາກຕະຫຼອດເວລາທີ່ຢູ່ຂ້າງນອກ |

| | | | | | |
|---|---|---|---|---|---|
| | | | | | ສາມາດຖອດໜ້າກາກໄດ້ເມື່ອເຂົ້າມາຂ້າງໃນ |

*ຕາຕະລາງ 9: ການສົມທຽບຂອງການກວດໃນເວລາມາຮອດ (ສໍາລັບນັກທ່ອງທ່ຽວ ທີ່ໄດ້ຮັບວັກຊີນແລ້ວ w/PCR ກວດ 72 ຊົ່ວໂມງກ່ອນເດີນທາງ)*

| ສະຖານະການ | ປະເທດທີ່ນໍາໃຊ້ລະບົບນີ້[35] | ຄວາມສ່ຽງ/ຂໍ້ເສຍ | ຜົນປະໂຫຍດ | ຄໍາແນະນໍາ ສໍາລັບ ສປປ ລາວ |
|---|---|---|---|---|
| ບໍ່ມີການກວດເວລາເດີນທາງເຂົ້າປະ ເທດ | ສະຫະລັດອາເມລິກາ[36]<br>ສີ ລັງກາ | • Fໃບຮັບຮອງການສັກວັກຊີນປອມ (ຄວາມສ່ຽງຕໍ່າ-ປານກາງ)<br>• ຕິດເຊື້ອ Covid ຫຼັງຈາກກວດ ໃນລະຫວ່າງການທ່ອງທ່ຽວ (ຄວາມສ່ຽງປານກາງ | • ບໍຕ້ອງລໍຖ້າທີ່ສະໜາມບິນ<br>• ບໍ່ມີຄ່າໃຊ້ຈ່າຍໃນການກວດ | ບໍ່ແນະນໍາເນື່ອງຈາກມີຄວາມສ່ຽງຕໍ່າ-ປານກາງ |
| ການສຸ່ມກວດເວລາເດີນທາງເຂົ້າປະ ເທດ | ການາດາ<br>ເມັກຊິໂກ | • ບາງກໍລະນີກວດບໍ່ພົບເຊື້ອ (ຕໍ່າ-ປານກາງ)<br>• ລັດຖະບານຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ)<br>• ມີຄວາມເປັນໄປໄດ້ທີ່ຈະມີການຮ້ອງຟ້ອງ ດ້ານການເລືອກປະຕິບັດທີ່ບໍ່ຍຸຕິທໍາ | • ຫຼຸດຜ່ອນການຮັບຮອງການສັກວັກຊີນປອມ<br>• ໄດ້ຂໍ້ມູນທີ່ມີປະສິດທິພາບ | ບໍ່ແນະນໍາເນື່ອງຈາກມີຄວາມສ່ຽງຕໍ່າ-ປານກາງ ແລະ ບັນຫາການຈັດຕັ້ງປະຕິບັດ |
| ການກວດແບບໄວ ແບບ Antigen ເວລາເດີນທາງເຂົ້າປະ ເທດ[37] | ອິດສະຕາລີ<br>ເນປານ | • ຈະບໍ່ກວດພົບວ່າການຕິດເຊື້ອມີປະລິມານເຊື້ອໄວລັດຕໍ່າ ຫຼື ບໍ<br>• ມີແນ້ວໂນມທີ່ຈະບໍ່ກວດພົບການຕິດເຊື້ອຈາກຜູ້ທີ່ໄດ້ສັກວັກຊີນຄຍບຖ້ວນ ຫຼື ຜູ້ທີ່ຕິດເຊື້ອໃນໄລຍະເບື້ອງຕົ້ນ (0-4 ມື້) | • ໄລຍະເວລາລໍຖ້າສັ້ນປະມານ 30 ນາທີ<br>• ງ່າຍກວ່າດ້ານການຈັດຕັ້ງປະຕິບັດ (ຖ້າຊຸດກວດມີພ້ອມ)<br>• ອາດຈະຖືກກວ່າ | ບໍ່ແນະນໍາ ເນື່ອງຈາກການສັກວັກຊີນຂອງພົນລະເມືອງລາວຍັງຢູ່ໃນອັດຕາທີ່ຕໍ່າ<br><br>ການກວດແບບໄວ ແບບ Antigen ເມື່ອການສັກວັກຊີນຂອງພົນລະເມືອງລາວຢູ່ໃນອັດຕາທີ່ສູງ |

[35] https://healthandfitnesstravel.com/blog/which-countries-require-a-covid-19-pcr-test-for-entry
[36] https://www.cdc.gov/coronavirus/2019-ncov/vaccines/fully-vaccinated.html
[37] https://www.acacamps.org/sponsored/covid-19-testing-pcr-vs-rapid-whats-difference

| | | | | |
|---|---|---|---|---|
| ການກວດ PCR ເວລາເດີນທາງເຂົ້າປະເທດ[38] | ສິງກະໂປ<br>ພູເກັດ | • ມີຄ່າໃຊ້ຈ່າຍສູງ<br>• ຄວາມສາມາດໃນການດຳເນີນການກວດທີ່ຕ່ຳ<br>• ໄລຍະເວລາຂອງການລໍຖ້າຜົນກວດດົນ (ຫຼາຍກວ່າ 24 ຊົ່ວໂມງ) | • ສາມາດກວດຫາເຊື້ອໄດ້ດີທັງໃນຜູ້ທີ່ໄດ້ຮັບວັກຊີນ ແລະ ມີລະດັບເຊື້ອໄວລັດຕ່ຳ<br>• ອຸປະກອນ/ຊຸດກວດແມ່ນມີພ້ອມ | ແນະນຳ<br>ອະນຸຍາດໃຫ້ຫ້ອງທົດລອງ ແລະ ໂຮງໝໍເອກະຊົນ ດຳເນີນການກວດ ເພື່ອຫຼຸດເວລາໃນການລໍຖ້າຜົນກວດ (ພາຍໃນ 24 ຊົ່ວໂມງ) ແລະ ຫຼຸດລ່າຍຈ່າຍ |
| ການກວດ PCR ເວລາເດີນທາງເຂົ້າປະເທດ ແລະ ກວດອີກຄັ້ງໃນລະຫວ່າງອາທິດທຳອິດ | ສິງກະໂປ (PCR ໃນັມື້ທີ 3 & 7 – ຢຸດການຈັດຕັ້ງປະຕິບັດ ຫຼັງວັນທີ18/10)<br>ພູເກັດ (ກວດແບບໄວແບບ Antigen ໃນມື້ທີ6 & 12 | • ມີຄ່າໃຊ້ຈ່າຍສູງສຳລັບນັກທ່ອງທ່ຽວ<br>• ໃຊ້ເວລາດົນສຳລັບນັກທ່ອງທ່ຽວ<br>• ຜົນປະໂຫຍດທີ່ຈະໄດ້ຈາກການກວດ PCR 2 ຄັ້ງກ່ອນ ແລະ ການຢັ້ງຢືນການສັກວັກຊີນ ບໍ່ຊັດເຈນ<br>• ນັກທ່ອງທ່ຽວຕ້ອງໄດ້ກວດອີກຄັ້ງ ກ່ອນອອກ<br>• ນຳເອົາ ຊຸດການກວດຫາເຊື້ອທີ່ຈຳເປັນ ສຳລັບປະຊາຊົນທົ່ວໄປ ມານຳໃຊ້ | • ຮັບປະການສູງວ່າຈະບໍ່ມີການແຜ່ເຊື້ອໃຫ້ແກ່/ຈາກນັກທ່ອງທ່ຽວ | ບໍ່ແນະນຳ |

[38] https://www.cdc.gov/coronavirus/2019-ncov/lab/resources/antigen-tests-guidelines.html

# ບ່ອນອີງ


ບ່ອນອີງທົ່ວໄປ

- https://github.com/CSSEGISandData/COVID-19
- https://ourworldindata.org/coronavirus-data
- https://covid19.who.int/region/searo/country/np
- https://www.iata.org/en/pressroom/2021-releases/2021-10-05-01/
- https://covid.cdc.gov/covid-data-tracker/#covidnet-hospitalizations-vaccination
- https://www.unwto.org/unwto-iata-destination-tracker

ບາຫຼີ

https://www.scmp.com/lifestyle/travel-leisure/article/3152029/bali-reopening-foreign-tourists-mandatory-quarantine-still

ອິນເດຍ

https://www.straitstimes.com/asia/south-asia/india-says-to-re-open-for-tourists-from-oct-15

ອິນໂດເນເຊຍ

https://www.straitstimes.com/asia/se-asia/indonesia-might-reopen-to-tourists-from-some-countries-in-october-minister

ມາເລເຊຍ

https://www.thenationalnews.com/travel/covid-19-travel/2021/10/12/malaysia-plans-to-reopen-to-fully-vaccinated-tourists-from-any-country-in-november/

ເນປານ

https://www.welcomenepal.com

ສິງກະໂປ

- https://safetravel.ica.gov.sg/vtl/requirements-and-process
- https://www.straitstimes.com/ສິງກະໂປ/what-you-need-to-know-about-the-new-vaccinated-travel-lane-which-allows-travel-without

ອາຊີຕາເວັນອອກສຽງໃຕ້

https://www.straitstimes.com/asia/se-asia/regional-tourism-goes-for-a-test-run

ສີລັງກາ

- https://economynext.com/sri-lanka-confident-of-usd-500-mn-in-tourism-revenue-through-march-2022-86602/
- https://sltda.gov.lk/en/statistics
- https://www.srilanka.travel/helloagain/
- https://sltda.gov.lk/storage/common_media/Frequently%20Asked%20Questions4152195703.pdf
- https://srilanka.travel/documents/SLTourism-OperationalGuidelinesV2.pdf

ໄທ

- https://www.thaiembassy.com/travel-to-thailand/thailands-reopening-plan
- https://www.bangkokpost.com/business/2176951/tourism-ministry-sets-january-date-to-reopen

ມາວດິບ

- https://visitmaldives.com/en/covid19-updates
- https://www.aci-asiapac.aero/media-centre/news/ມາວດິບ-welcomes-the-100-000th-tourist-since-the-border-reopening
- https://www.forbes.com/sites/alexledsom/2021/04/26/vaccine-tourism-ມາວດິບ-to-offer-jabs-to-visiting-tourists/?sh=1310d5ea384d
- https://immigration.gov.mv/tourists-staying-at-inhabited-islands/
- https://www.tourism.gov.mv/covid19
- ແບບຟອມແຈ້ງສຸຂະພາບ: https://imuga.immigration.gov.mv/ethd/create